# ຄຳຂອບໃຈ

ພວກຂ້າພະເຈົ້າໃນນາມນັກສຶກສາ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ສາຂາວິຊາເສດຖະສາດ ລຸ້ນ ທີ XI ທີ່ສຳເລັດການສຶກສາໃນສົກຮຽນ 2 010-2011 ຂອງມະຫາວິທະຍາໄລແຫ່ງຊາດ ໄດ້ສຶກສາຫົວຂໍ້ "ການປະເມີນມູນຄ່າການນຳໃຊ້ທີ່ດິນເຂດບ້ານດະເຊັຍນ້ອຍ, ບ້ານດະເຊັຍໂພນທີນ ເມືອງເລົ່າງາມ ແຂວງສາລະວັນ".

ຂໍສະແດງຄວາມຂອບໃຈເຄົາລົບນັບຖື ແລະ ຮູ້ບຸນຄຸນອັນສູງສົ່ງມາຍັງບັນດາຄູອາຈານທຸກໆທ່ານ ພາຍໃນມະຫາວິທະຍາໄລແຫ່ງຊາດ ໂດຍສະເພາະແມ່ນອາຈານທີ່ຢູ່ໃນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ແລະ ພາກສ່ວນອື່ນໆທີ່ໄດ້ທຸ່ມເທສະຕິປັນຍາໃນການຄົ້ນຄ້ວາຫາຄວາມຮູ້, ວິຊາການຕ່າງໆທັງພາຍໃນ ແລະ ຕ່າງປະເທດທີ່ມາຖ່າຍທອດຄວາມຮູ້ອັນດີໃຫ້ແກ່ພວກຂ້າພະເຈົ້າຢ່າງບໍ່ຮູ້ອິດເ ມື່ອຍ. ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງຍິ່ງມາຍັງອາຈານທີ່ປຶກສາ ຣ ສ ຫຼ້າວັນ ວົງຄຳສານ ແລະ ອາຈານ ສົມນັກ ຍອດຮັກສາ ເຊິ່ງເປັນອາຈານຜູ້ຊ່ວຍທີ່ໄດ້ເສຍສະຫຼະເວລາອັນມີຄ່າໃນການນຳພາ, ໃຫ້ຄຳປຶກສາ ແລະ ຊີ້ນຳແນວທາງໃນການຂຽນບົດຈົບຊັ້ນຂອງພວກຂ້າພະເຈົ້າໃນຄັ້ງນີ້ຈົນສຳເລັດລຸລ່ວງໄປດ້ວຍດີພວກຂ້າພະເຈົ້າຈະຂໍຈົດຈຳບຸນຄຸນອັນລົ້ນຄ່ານມາຍັງທີ່ນີ້ດ້ວຍ.

ຂໍຂອບໃຈນ□າໂຄງການ Village Focus International (VFI) ແລະ ສູນຄົ້ນຄ້ວາຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ຫ້ອງວ່າການທີ່ດິນແຂວງສາລະວັນ,ຫ້ອງການຄຸ້ມຄອງທີ່ດິນ, ນ້ຳ ແລະ ສິ່ງແວດລ້ອມ ເມືອງເ ລົ່າງາມ, ນາຍບ້ານ ແລະ ຄະນະບ້ານບ້ານດະເຊັຍນ້ອຍ, ບ້ານດະເຊັຍໂພນທີນ ເມືອງເ ລົ່າງາມ ແຂວງສາລະວັນ ພ້ອມທັງພໍ່ແມ່ປະຊາຊົນທັງ 2 ບ້ານທີ່ໃຫ້ຄວາມຮ່ວມມືເປັນຢ່າງດີໃນການຕອບແບບສອບຖາມ.

ນະໂອກາດນີ້ພວກຂ້າພະເຈົ້າຂໍນັບຖື ແລະ ສະແດງຄວາມຮູ້ບຸນຄຸນອັນສູງສົ່ງມາຍັງພໍ່ແມ່, ອ້າຍ, ເອື້ອຍ, ນ້ອງທີ່ໄດ້ໃຫ້ທຶນຮອນ, ກຳລັງໃຈ ແລະ ໝູ່ເພື່ອນທີ່ໄດ້ໃຫ້ຄຳແນະນຳ ແລະ ຊຸກດັນຈົນເຮັດໃຫ້ການຂຽນບົດຈົບຊັ້ນໃນຄັ້ງນີ້ສຳເລັດໄປດ້ວຍດີ. ສຸດທ້າຍນີ້ພວກຂ້າພະເຈົ້າຂໍອວຍພອນໄຊໃຫ້ແກ່ບັນດາທ່ານຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານຕະຫຼອດໄປ.

ຄະນະຜູ້ຂຽນ: ທ້າວ ສົມຄິດ ອິນທະພອນ
ທ້າວ ພູສະໝິງ ເທບພິທັກ
ນາງ ຄຳມີ ສີປະເສີດ

## ບົດຄັດຫຍໍ້

ເນື່ອງຈາກວ່າສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດທີ່ມີປະຫວັດສາດການອອກແຮງງານມາແຕ່ດົນນານ, ເຊິ່ງປະຊາຊົນສ່ວນໃຫຍ່ແມ່ນຜະລິດແບບພໍຢູ່ພໍກິນ ແລະ ແບບທຳມະຊາດ. ແຕ່ໄລຍະຫຼັງພັກ ແລະ ລັດ ແມ່ນໄດ້ມີນະໂຍບາຍສົ່ງເສີມການຜະລິດພາຍໃນປະເທດ. ໂດຍສົ່ງເສີມການຜະລິດກະສິກຳໃຫ້ກາຍເປັນສິນຄ້າທີ່ສາມາດຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ສາມາດເປັນສິນຄ້າສົ່ງອອກໄດ້.

ໃນການຂຽນບົດໂຄງການຈົບຊັ້ນປະລິນຍາຕີຄັ້ງນີ້ ແມ່ນພາຍໃຕ້ຫົວຂໍ້: ການປະເມີນມູນຄ່າການນຳໃຊ້ທີ່ດິນເຂດບ້ານ ດະເຊັຍນ້ອຍ,ບ້ານດະເຊັຍໂພນຫີນ ເມືອງເລົ່າງາມ ແຂວງສາລະວັນ, ໂດຍມີຈຸດປະສົງ 2 ຈຸດປະສົງຄື: ສຶກສາສະພາບທົ່ວໄປຂອງບ້ານຂອງບ້ານ ດະເຊັຍນ້ອຍ, ບ້ານດະເຊັຍໂພນຫີນ, ສຶກສາມູນຄ່າທີ່ເກີດຈາກການນຳໃຊ້ທີ່ດິນຂອງປະຊາຊົນ ໃນ 2 ໝູ່ບ້ານເຂົ້າໃນການຜະລິດກະສິກຳ.

ສ່ວນວ່າຂໍ້ມູນທີ່ນຳມາສຶກສາຄັ້ງນີ້ແມ່ນໄດ້ລົງເກັບກຳຕົວຈິງນຳປະຊາຊົນໂດຍໃຊ້ແບບສອບຖາມສຳພາດກັບປະຊາຊົນ ບ້ານດະເຊັຍນ້ອຍ, ດະເຊັຍໂພນຫີນ, ເມືອງເລົ່າງາມ ແຂວງສາລະວັນ ເຊິ່ງຈຳນວນຕົວຢ່າງທີ່ນຳມາສຳພາດແມ່ນມີ 220 ຕົວຢ່າງ.ສຳຫຼັບການວິເຄາະແມ່ນໃຊ້ຮູບແບບພັນລະນາ. ອີງຕາມເງື່ອນໄຂສະພາບຄວາມເປັນຈິງຂອງບ້ານ ແລະ ການໃຊ້ຮູບແບບຕາຕະລາງ. ເຊິ່ງການວິເຄາະຂໍ້ມູນແມ່ນນຳໃຊ້ Program SPSS, ແລະ Excel.

ຜົນຂອງການສຶກສາພົບວ່າ : ໃນ 2 ໝູ່ບ້ານດັ່ງກ່າວມີເນື້ອທີທັງໝົດປະມານ 3,672 ເຮັກຕາ, ມີພົນລະເມືອງທັງໝົດປະມານ 4007 ຄົນ, ມີ 855 ຫລັງຄາເຮືອນ, ມີ 925 ຄອບຄົວ. ປະຊາຊົນສ່ວນໃຫຍ່ແມ່ນມີອາຊີບເປັນຊາວກະສິກອນເຊິ່ງກວມເອົາ 90%. ເຊິ່ງມູນຄ່າທີ່ໄດ້ຮັບຈາກການຂາຍຜົນຜະລິດກະສິກຳກວມເຖິງ 86.4%, ເຊິ່ງມູນຄ່າທີ່ໄດ້ຮັບຈາກການຂາຍຜົນຜະລິດຕ່າງໆແມ່ນປະມານ 41,988,000 ກີບ/ປີ. ເຊິ່ງສະເລ່ຍແລ້ວໃນເນື້ອທີ່ດິນ 1 ເຮັກຕາສາມາດສ້າງມູນຄ່າຈາກການນຳໃຊ້ທີ່ດິນໃຫ້ແກ່ປະຊາຊົນປະມານ 13,678,000 ກີບ/ເຮັກຕາ.

ດັ່ງນັ້ນການສຶກສາຄັ້ງນີ້ໄດ້ສະແດງໃຫ້ເຫັນວ່າມູນຄ່າຂອງທີ່ດິນແມ່ນສາມາດຄາດຄະເນໄດ້ໂດຍອາໃສການປະເມີນຕີລາຄາຂອງຜົນຜະລິດຕ່າງໆ, ຈາກການປະເມີນຜົນປະໂຫຍດ ທາງດ້ານເສດຖະກິດທີ່ພົວພັນເຖິງການນຳໃຊ້ທີ່ດິນ , ຜົນການສຶກສາຄັ້ງນີ້ແມ່ນໄດ້ບອກຄຸນຄ່າຂອງການນຳໃຊ້ທີ່ດິນເຊິ່ງມັນຈຳເປັນຕ້ອງປັບປຸງ ແລະ ການພັດທະນາພ້ອມທັງການນຳໃຊ້ຊັບພະຍາກອນຢ່າງຈຳກັດ.

# ສາລະບານ


ເນື້ອໃນ ໜ້າ

ຄຳຂອບໃຈ.....................................................................................I

ບົດຄັດຫຍໍ້.....................................................................................II

ສາລະບານ.....................................................................................III

ສາລະບານຮູບ.....................................................................................VI

ສາລະບານຕາຕະລາງ.....................................................................................VII

**ບົດທີ 1 ພາກສະເໜີ**.....................................................................................1

1.1 ທີ່ມາ ແລະ ຄວາມສຳຄັນຂອງບັນຫາ..................................................... 1

1.2 ຈຸດປະສົງຂອງການສຶກສາ.....................................................................2

1.3 ຂອບເຂດຂອງການສຶກສາ.....................................................................2

1.4 ຜົນຄາດວ່າຈະໄດ້ຮັບຈາກການສຶກສາ.....................................................3

**ບົດທີ 2 ທົບທວນທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ**.....................................4

2.1 ສະພາບໂດຍລວມ..................................................................... 4

2.1.1 ສະພາບໂດຍລວມຂອງແຂວງສາລະວັນ.............................................4

2.1.2 ສະພາບໂດຍລວມຂອງເມືອງເລົ່າງາມ ແຂວງສາລະວັນ...........................5

2.2 ທິດສະດີທີ່ກ່ຽວຂ້ອງ..................................................................... 6

2.2.1 ທິດສະດີການປະເມີນຄ່າ.....................................................................6

2.2.2 ບົດບັນຍັດ ແລະ ຂໍ້ກຳນົດຂອງລັດຖະບານກ່ຽວກັບການຄຸ້ມຄອງທີ່ດິນ..................6

2.2.3 ທິດທາງນະໂຍບາຍ ແລະ ຍຸດທະສາດຂອງລັດຖະບານໃນການນຳໃຊ້ທີ່ດິນ........... 7

2.2.4.ການນຳໃຊ້ທີ່ດິນໃນ ສ ປ ປ ລາວ.....................................................7

2.2.5 ປະເພດຂອງທີ່ດິນ.....................................................................8

2.2.6 ປະເພດກຳມະສິດກ່ຽວກັບການນຳໃຊ້ທີ່ດິນ............................................ 10

2.2.7 ນິຍາມດິນ..................................................................... 13

2.2.8 ນິຍາມທີ່ດິນ..................................................................... 13

2.2.9 ຄວາມສຳຄັນຂອງດິນ..................................................................... 13

2.3 ງານວິໄຈທີ່ກ່ຽວຂ້ອງ.....................................................................13

**ບົດທີ 3 ວິທີການສຶກສາຄົ້ນຄ້ວາ**.....................................................................18

3.1 ວິທີການສຶກສາ..................................................................... 18

3.2 ການເກັບຂໍ້ມູນ.....................................................................18

3.2.1 ຂໍ້ມູນພາກຫ້ອງການ........................................................................18
3.2.2 ຂໍ້ມູນພາກສະໜາມ........................................................................ 18
3.2.3 ການສຳພາດລະດັບບ້ານ.................................................................. 19
3.2.3 ການສຳພາດລະດັບຄອບຄົວ..............................................................19
3.3 ປະຊາກອນ ແລະ ຕົວຢ່າງ........................................................................ 19
3.4 ວິທີການວິເຄາະຂໍ້ມູນ.............................................................................. 20
**ບົດທີ 4 ຜົນຂອງການສຶກສາ**.................................................................... 22
4.1 ສະພາບໂດຍທົ່ວໄປ................................................................................ 22
4.1.1 ສະພາບໂດຍລວມຂອງບ້ານດະເຊັຍນ້ອຍ............................................. 22
4.1.2 ສະພາບໂດຍລວມຂອງບ້ານດະເຊັຍໂພນຫີນ........................................23
4.1.3 ຂໍ້ມູນກ່ຽວກັບເພດຂອງກຸ່ມຕົວຢ່າງ.......................................................24
4.1.4 ຂໍ້ມູນກ່ຽວກັບອາຍຸຂອງກຸ່ມຕົວຢ່າງ...................................................... 24
4.1.5 ຂໍ້ມູນກ່ຽວກັບອາຊີບ...........................................................................25
4.1.6 ຂໍ້ມູນກ່ຽວກັບສະຖານະພາບຂອງກຸ່ມຕົວຢ່າງ............................................25
4.1.7 ຂໍ້ມູນກ່ຽວກັບລະດັບການສຶກສາ.............................................................26
4.1.8 ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວ........................................................26
4.1.9 ຂໍ້ມູນກ່ຽວກັບສາທາລະນຸປະໂພກພື້ນຖານ................................................27
4.1.10 ຂໍ້ມູນກ່ຽວກັບລາຍໄດ້....................................................................... 28
4.1.11 ຂໍ້ມູນກ່ຽວກັບແຫລ່ງທີ່ມາຂອງລາຍໄດ້...................................................29
4.1.12 ຂໍ້ມູນກ່ຽວກັບລາຍຈ່າຍ.......................................................................29
4.1.13 ຂໍ້ມູນກ່ຽວກັບແຫລ່ງໃຊ້ຈ່າຍ.............................................................. 30
4.1.14 ຂໍ້ມູນກ່ຽວກັບດິນ...............................................................................30
ກ.ຂໍ້ມູນກ່ຽວກັບດິນຄອບຄອງທັງໝົດ.........................................................30
ຂ.ຂໍ້ມູນກ່ຽວກັບດິນປຸກສ້າງ......................................................................31
ຄ.ຂໍ້ມູນກ່ຽວກັບດິນເຮັດກະສິກຳ............................................................... 31
ງ.ຂໍ້ມູນກ່ຽວກັບໜອງປາ.......................................................................... 32
ຈ.ຂໍ້ມູນກ່ຽວກັບລະດູການເຮັດກະສິກຳ.......................................................32
4.2 ຜົນຜະລິດ ແລະ ມູນຄ່າທີ່ໄດ້ຮັບຈາກການນຳໃຊ້ທີ່ດິນຂອງປະຊາຊົນ.....................33
4.2.1 ກາເຟ........................................................................................... 33
4.2.2 ໝາກກ້ອຍ...................................................................................... 34

4.2 ຫມາກແຫນ່ງ………………………………………………………………….. 36
4.2.4 ເຂົ້າ…………………………………………………………………..... 37
4.2.5 ຖົ່ວດິນ…………………………………………………………………….38
4.2.6 ມັນແກວ…………………………………………………………………. 40
4.2.7 ສາລີ…………………………………………………………………..... 41
4.2.8 ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະຂາຍ ຫລື ໃຫ້ສຳປະທານດິນ………………………..... 42
**ບົດທີ 5 ສະຫລຸບ** ແລະຂໍ້ສະເຫນີ………………………………………………………. 44
5.1 ສະຫລຸບ…………………………………………………………………………. 44
5.2 ຂໍ້ສະເຫນີແນະ……………………………………………………………………….45

ສາລະບານຮູບ


ເນື້ອໃນ ໜ້າ

ຮູບທີ 1: ແຜນທີ່ສະແດງທີ່ຕັ້ງຂອງແຂວງສາລະວັນ……………………………………….5

ຮູບທີ 2: ແຜນວາດຂັ້ນຕອນການລົງຄົ້ນຄວ້າພາກສະໜາມ...........................................21

ສາລະບານຕາຕະລາງ


ເນື້ອໃນ ຫນ້າ

ຕາຕະລາງທີ 4.1: ຂໍ້ມູນສະແດງກ່ຽວກັບເພດຂອງກຸ່ມຕົວຢ່າງ ........ 24

ຕາຕະລາງທີ 4.2: ຂໍ້ມູນກ່ຽວກັບອາຍຸຂອງກຸ່ມຕົວຢ່າງ ........ 24

ຕາຕະລາງທີ 4.3: ຂໍ້ມູນກ່ຽວກັບອາຊີບຂອງກຸ່ມຕົວຢ່າງ ........ 25

ຕາຕະລາງທີ 4.4: ຂໍ້ມູນກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ ........ 25

ຕາຕະລາງທີ 4.5: ຂໍ້ມູນກ່ຽວກັບລະດັບການສຶກສາຂອງກຸ່ມຕົວຢ່າງ ........ 26

ຕາຕະລາງທີ 4.6 : ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວຂອງກຸ່ມຕົວຢ່າງ ........ 26

ຕາຕະລາງທີ 4.7: ຂໍ້ມູນກ່ຽວກັບຫ້ອງນ້ຳຂອງກຸ່ມຕົວຢ່າງ ........ 27

ຕາຕະລາງທີ 4.8: ຂໍ້ມູນກ່ຽວກັບການກຳຈັດສິ່ງເສດເຫລືອ ........ 27

ຕາຕະລາງທີ 4.9: ຂໍ້ມູນກ່ຽວກັບການນຳໃຊ້ນ້ຳ ........ 27

ຕາຕະລາງທີ 4.10: ຂໍ້ມູນກ່ຽວກັບລາຍໄດ້ຂອງກຸ່ມຕົວຢ່າງ ........ 28

ຕາຕະລາງທີ 4.11: ຂໍ້ມູນກ່ຽວກັບແຫລ່ງທີ່ມາຂອງລາຍໄດ້ຂອງກຸ່ມຕົວຢ່າງ ........ 29

ຕາຕະລາງທີ 4.12: ຂໍ້ມູນກ່ຽວກັບລາຍຈ່າຍຂອງກຸ່ມຕົວຢ່າງ ........ 29

ຕາຕະລາງທີ່ 4.13: ຂໍ້ມູນກ່ຽວກັບທີ່ດິນໃນການຄອບຄອງທັງຫມົດຂອງກຸ່ມຕົວຢ່າງ ........ 30

ຕາຕະລາງທີ 4.14: ຂໍ້ມູນກ່ຽວກັບດິນປຸກສ້າງຂອງກຸ່ມຕົວຢ່າງ ........ 31

ຕາຕະລາງທີ 4.15: ຂໍ້ມູນກ່ຽວກັບດິນເຮັດການກະສິກຳຂອງກຸ່ມຕົວຢ່າງ ........ 31

ຕາຕະລາງທີ 4.16: ຂໍ້ມູນກ່ຽວກັບຫນອງປາຂອງກຸ່ມຕົວຢ່າງ ........ 32

ຕາຕະລາງທີ 4.17: ຂໍ້ມູນກ່ຽວກັບປະລິມານກາເຟຂອງກຸ່ມຕົວຢ່າງ ........ 33

ຕາຕະລາງທີ 4.18: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍກາເຟຂອງກຸ່ມຕົວຢ່າງ ........ 34

ຕາຕະລາງທີ 4.19: ຂໍ້ມູນກ່ຽວກັບປະລິມານຫມາກກ້ວຍຂອງກຸ່ມຕົວຢ່າງ ........ 34

ຕາຕະລາງທີ 4.20: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍຫມາກກ້ວຍ ຂອງກຸ່ມຕົວຢ່າງ ........ 36

ຕາຕະລາງທີ 4.21: ຂໍ້ມູນກ່ຽວກັບປະລິມານຫມາກແຫນ່ງຂອງກຸ່ມຕົວຢ່າງ ........ 36

ຕາຕະລາງທີ 4.22: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍຫມາກແຫນ່ງຂອງກຸ່ມຕົວຢ່າງ ........ 37

ຕາຕະລາງທີ 4.23: ຂໍ້ມູນກ່ຽວກັບຜົນລະປູກ (ເຂົ້າ) ຂອງກຸ່ມຕົວຢ່າງ ........ 37

ຕາຕະລາງທີ 4.24: ຂໍ້ມູນກ່ຽວກັບມູນຄ່າຈາກເຂົ້າຂອງກຸ່ມຕົວຢ່າງ ........ 38

ຕາຕະລາງທີ 4.25: ຂໍ້ມູນກ່ຽວກັບປະລິມານຖົ່ວດິນຂອງກຸ່ມຕົວຢ່າງ ........ 38

ຕາຕະລາງທີ 4.26: ຂໍ້ມູນກ່ຽວກັບການຂາຍຖົ່ວດິນຂອງກຸ່ມຕົວຢ່າງ ........ 39

ຕາຕະລາງທີ 4.27: ຂໍ້ມູນກ່ຽວກັບປະລິມານມັນແກວຂອງກຸ່ມຕົວຢ່າງ ........ 40

ຕາຕະລາງທີ 4.28: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍມັນແກວ ........ 40

ຕາຕະລາງທີ 4.29: ຂໍ້ມູນກ່ຽວກັບປະລິມານສາລີຂອງກຸ່ມຕົວຢ່າງ ............................... 41
ຕາຕະລາງທີ 4.30: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍສາລີຂອງກຸ່ມຕົວຢ່າງ .................. 41
ຕາຕະລາງທີ 4.31: ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະຂາຍດິນທັງຫມົດຂອງກຸ່ມຕົວຢ່າງ .......... 41
ຕາຕະລາງທີ 4.32: ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະໃຫ້ເຊົ່າ ຫລື ສໍາປະທານດິນຂອງ
ກຸ່ມຕົວຢ່າງ........................................................................................ 42

# ບົດທີ 1
# ພາກສະເໜີ

## 1.1 ທີ່ມາ ແລະ ຄວາມສຳຄັນຂອງບັນຫາ

ພາຍຫລັງທີ່ປະເທດຊາດໄດ້ຮັບການສະຖາປະນາເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ພັກ ແລະ ລັດຖະບານກໍ່ໄດ້ມີຄວາມເອົາໃຈໃສ່ຕໍ່ການພັດ ທະນາ ປະເທດຊາດໂດຍສະເພາະແມ່ນການພັດທະນາເພື່ອແກ້ໄຂຄວາມທຸກຍາກຂອງປະຊາ ຊົນ ແລະ ກ້າວໄປສູ່ການຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ , ຄຽງຄູ່ກັບການຂະ ຫຍາຍຕົວຂອງ ເສດຖະກິດ ແລະ ການພັດທະນາປະເທດຊາດນັ້ນຈຶ່ງໄດ້ເກີດມີຫລາຍປະກົດການທີ່ສະທ້ອນໃຫ້ ເຫັນໄປໃນທາງລົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມເກີດຂຶ້ນ ໂດຍສະເພາະແມ່ນການຈັດສັນ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນແຕ່ລະເຂດຂອງປະເທດເຮົາ . ເນື້ອທີ່ຂອງ ປ່າໄມ້ໄດ້ຫລຸດລົງຢ່າງໄວວາຄວາມອຸດົມສົມບູນຂອງທຳມະຊາດ , ລະບົບນິເວດວິທະຍາ ແລະ ຊີວະນາໆພັນຕ່າງໆມີການປ່ຽນແປງ ການນຳໃຊ້ທີ່ດິນເຂົ້າໃນການປູກຕົ້ນໄມ້ ຫລື ການເຮັດ ກະສິກຳໄດ້ກາຍເປັນຂະບວນການຢ່າງກ້ວາງຂວາງ ພື້ນທີ່ປ່າໄມ້ທຳມະຊາດໄດ້ກາຍເປັນພື້ນທີ່ປູກ ໄມ້ ແລະ ການເຮັດກະສິກຳ.

ພື້ນຖານເສດຖະກິດຂອງລາວ ແມ່ນກະສິກຳເຊິ່ງກໍ່ແມ່ນການປູກຝັງ ແລະ ລ້ຽງສັດ ໃນ ເມື່ອກ່ອນການປູກຝັງຈະເປັນການປູກເຂົ້າ ແລະ ພືດຂັ້ນປະຖົມ. ແຕ່ໃນປັດຈຸບັນການປູກຝັງ ຂອງປະເທດລາວແມ່ນເລີ່ມມີການປ່ຽນແປງໄປເປັນພືດອຸດສາຫະກຳເປັນຕົ້ນແມ່ນຢາງພາລາ ໄມ້ ເກດສະໜາ ແລະ ອື່ນໆ. ການນຳໃຊ້ທີ່ດິນຂອງປະຊາຊົນບາງເຂດແມ່ນເພື່ອຜະລິດສິນ ຄ້າຮັບ ໃຊ້ໃນຊີວິດປະຈຳວັນ ແລະ ບາງເຂດແມ່ນເພື່ອຜະລິດເປັນສິນຄ້າຮັບໃຊ້ໃນທ້ອງຕະ ຫຼາດ ຫລື ເປັນສິນຄ້າສົ່ງອອກ ເຊິ່ງມັນກໍ່ຂຶ້ນກັບສະພາບແວດລ້ອມ , ລັກສະນະພູມສັນຖານທີ່ເອື້ອອຳນວຍ ໃຫ້ແຕ່ລະທ້ອງຖິ່ນ , ເຂດແຂວງທີ່ແຕກຕ່າງກັນໄປ ໂດຍສະເພາະແລ້ວແມ່ນແຂວງສາລະວັນ ເຊິ່ງເປັນອີກແຂວງໜຶ່ງທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນ ທຳມະຊາດທີ່ເອື້ອອຳນວຍ ຄວາມສະດວກເພື່ອຂະຫຍາຍກະສິກຳ ແລະ ປ່າໄມ້ຮອບດ້ານເຊັ່ນ: ເນື້ອທີ່ປູກເຂົ້າໃນເຂດທົ່ງພຽງ ມີປະມານ 74,016 ເຮັກຕາ, ເນື້ອທີ່ປ່າໄມ້ມີປະມານ 1,087,000 ເຮັກຕາທົ່ງຫຍ້າລ້ຽງສັດມີປະມານ 5,800 ເຮັກຕາ. ແຂວງສາລະວັນເປັນແຂວງທີ່ມີຄວາມອຸດົມສົມບູນທາງດ້ານພື້ນຖານທຳມະຊາດພໍ ສົມຄວນ, ມີແມ່ນ້ຳໄຫຼຜ່ານຫຼາຍສາຍເຊັ່ນ: ແມ່ນ້ຳເຊໂດນແມ່ນ້ຳເຊລະນອງ, ແມ່ນ້ຳເຊໂປນ , ແມ່ນ້ຳ ຂອງ, ເຊນ້ຳມະນາ, ແມ່ນ້ຳເຊນວນ, ແມ່ນ້ຳເຊເສັດ ແລະ ແມ່ນ້ຳສາຍອື່ນໆ. ຕາມແມ່ນ້ຳສາຍຕ່າງໆ ມີແກ້ງ, ຕາດນ້ຳຕົກ, ທີ່ສາມາດເຮັດເຄື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ - ກາງໄດ້ຫຼາຍບ່ອນ , ມີ ຊັບພະຍາກອນທຳມະຊາດເຊັ່ນ : ບໍ່ຖ່ານຫີນພູຫີນປູນ ແລະ ອື່ນໆ. ໃນນັ້ນແຂວງສາລະວັນຍັງມີ ສັດປ່າຫຼາຍຊະນິດເຊັ່ນ: ໝູປ່າ, ກວາງ,ຟານ, ແລນ ແລະ ອື່ນໆ.

ຈາກຂໍ້ໄດ້ປຽບທາງດ້ານພູມສັນຖານນັ້ນ ຈຶ່ງເຮັດໃຫ້ປະຊາຊົນສ່ວນໃຫ່ຍມີອາຊີບ ເປັນຊາວກະສິກອນ ໂດຍສະເພາະແມ່ນປະຊາຊົນທີ່ອາໄສຢູ່ບ້ານດະເຊັຍນ້ອຍ , ບ້ານດະເຊັຍໂພນຫີນ , ເມືອງເລົ່າງາມ. ເຊິ່ງເປັນອີກໝູ່ບ້ານໜຶ່ງທີ່ມີເນື້ອທີ່ກວ້າງຂວາງ, ເປັນເຂດດິນພູໄຟເກົ່າ , ມີຄວາມຊຸ່ມຊື່ນສູງ ເຊິ່ງເໝາະສົມແກ່ການເຮັດກະສິກຳເຊັ່ນວ່າ: ການປູກເຂົ້າ, ປູກກາເຟ, ປູກໝາກກ້ວຍ , ໝາກແໜ່ງ, ຖົ່ວດິນ ແລະ ອື່ນໆ. ເຊິ່ງເປັນແຫຼ່ງສ້າງລາຍຮັບອັນຕົ້ນຕໍຂອງປະຊາຊົນພາຍໃນບ້ານ ແຕ່ວ່າຜົນຜະລິດທີ່ໄດ້ມານັ້ນແມ່ນຍັງໜ້ອຍບໍ່ເໝາະສົມກັບເນື້ອທີ່ທຳການຜະລິດ , ເນື່ອງມາຈາກປະຊາຊາຊົນຍັງບໍ່ມີການຈັດສັນການນຳໃຊ້ທີ່ດິນ , ຂາດເຕັກ ນິກໃນວິທີການໃນການປູກຝັງ ບໍ່ໄດ້ນຳໃຊ້ຄວາມຮູ້ທາງດ້ານເຕັກວິກທະສາດທີ່ທັນສະໄໝເຂົ້າໃນການຜະລິດ, ມີພະຍາດເກີດຂື້ນກັບຜົນຜະລິດແຕ່ລະດູການ ແລະ ໄພແຫ້ງແລ້ງ (ຝົນບໍ່ຕົກ) ສະນັ້ນ, ພວກນ້ອງຈຶ່ງຢາກສຶກສາວ່າຜົນຜະລິດ ທີ່ປະຊາຊົນໄດ້ຮັບແຕ່ລະປີນັ້ນມີຄວາມ ເໝາະສົມກັບເນື້ອທີ່ທຳການຜະລິດໜ້ອຍຫຼາຍພຽງໃດ . ລາຍຮັບຂອງປະຊາຊົນທີ່ມາຈາກການຂາຍຜົນຜະລິດນັ້ນສາມາດສິ່ງຜົນສະທ້ອນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂື້ນຫຼາຍພຽງໃ ດ. ພ້ອມກັນນັ້ນຍັງເປັນການສົມທຽບກັນລະຫວ່າງການນຳໃຊ້ທີ່ດິນຂອງປະຊາຊົນເອງ ແລະ ການເຊົ່າສຳປະທານທີ່ດິນຂອງພາກສ່ວນເອກະຊົນວ່າມັນມີມູນຄ່າແຕກຕ່າງກັນຫຼາຍພຽງໃດ.

ຍ້ອນເຫດຜົນທີ່ກ່າວມາຂ້າງເທິງນັ້ນໄດ້ກາຍເປັນປະເດັນທີ່ໜ້າສົນໃຈທີ່ເຮັດໃຫ້ ພວກນ້ອງ ມີຄວາມສົນໃຈຢາ ກຈະສຶກສາຂໍ້ມູນພື້ນຖານໃນ ການນຳໃຊທີ່ດິນຂອງປະຊາຊົນເພື່ອປະເມີນຫາມູນຄ່າຈາກການນຳໃຊ້ດັ່ງກ່າວເພື່ອໄດ້ຊອກຫາວິທີທາງແກ້ໄຂ , ປັບປຸງ ແລະ ນຳໄປເປັນບົດຮຽນໃນຂັ້ນຕໍ່ໄປ.

## 1.2 ຈຸດປະສົງຂອງການສຶກ

- ສຶກສາສະພາບ ທົ່ວໄປ ຂອງບ້ານດະເຊັຍນ້ອຍ , ດະເຊັຍໂພນຫີນ ເມືອງເລົ່າງາມ ແຂວງສາລະວັນ.
- ເພື່ອສຶກສາມູນຄ່າທີ່ເກີດຈາກການນຳໃຊ້ທີ່ດິນຂອງປະຊາຊົນໃນ 2 ໝູ່ບ້ານເຂົ້າ ໃນການຜະລິດກະສິກຳ.

## 1.3 ຂອບເຂດການສຶກສາ

ໃນການສຶກສາການປະເມີນມູນຄ່າທີ່ດິນໃນຄັ້ງນີ້ແມ່ນຈະໄດ້ສຶກສາ ແລະ ເກັບກຳຂໍ້ມູນກ່ຽວກັບການນຳໃຊ້ທີ່ດິນຂອງປະຊາຊົນ 2 ບ້ານຄື: ບ້ານດະເຊັຍນ້ອຍ ແລະ ດະເຊັຍໂພນຫີນ ເມືອງເລົ່າງາມ ແຂວງສາລະວັນ ເຊິ່ງຈະສຶກສາໃນປີ 2009-2010.

## 1.4 ຜົນຄາດວ່າຈະໄດ້ຮັບຈາກການສຶກສາ

- ຮັບຮູ້ສະພາບໂດຍທົ່ວໄປຂອງການດຳລົງຊີວິດຂອງປະຊາຊົນໃນ 2 ໝູ່ບ້ານ.

- ຮັບຮູ້ລາຍຮັບຂອງປະຊາຊົນແຕ່ລະບ້ານຈາກການນຳໃຊ້ທີ່ດິນວຽກງານການກະສິກຳ.
- ຮັບຮູ້ການຈັດສັນ ແລະ ຄອບຄອງທີ່ດິນຂອງປະຊາຊົນໃນ 2 ໝູ່ບ້ານ

# ບົດທີ 2
# ທົບທວນທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ

## 2.1 ສະພາບໂດຍລວມ

### 2.1.1 ສະພາບໂດຍລວມຂອງແຂວງສາລະວັນ

ແຂວງສາລະວັນແມ່ນແຂວງໜຶ່ງທີ່ນອນຢູ່ໃນ 4 ແຂວງ ພາກໃຕ້ຂອງ ສ ປ ປ ລາວ ແລະ ມີອາກາດຮ້ອນຊຸ່ມເຊິ່ງໄດ້ຮັບລົມມໍລະສຸມທີ່ພັດມາຈາກທະເລຈີນໃຕ້ , ມີພື້ນຖານພູມສັນຖານເປັນທົ່ງພຽງມີ 5 ເມືອງ, ເນື້ອທີ່ກວມປະມານ 40%, ພູພຽງມີ 1 ເມືອງເນື້ອທີ່ ກວມປະມານ 20% ແລະ ພູດອຍມີ 2 ເມືອງ, ເນື້ອທີ່ກວມປະມານ 40%, ມີເນື້ອທີ່ທັງໝົດປະມານ 10,691 ກມ$^{2}$, ຕັ້ງຢູ່ເສັ້ນແວງທີ່ $103^{0}$-$105^{0}$ ແລະ ເສັ້ນຂະໜານທີ່ $15^{0}$-$17^{0}$ ມີລວງຍາວແຕ່ເໜືອ ຫາ ໃຕ້ປະມານ 120 ກມ, ແຕ່ພາກຕາເວັນອອກ ຫາ ພາກຕາເວັນຕົກ ປະມານ 89 ກມ, ແຂວງສາລະວັນມີປະຊາກອນທັງໝົດປະມານ 336,017 ຄົນ, ຍິງ 169,410 ຄົນ, (ສະຖິຕິສົກປີ 2008 ຈາກຫ້ອງວ່າການແຂວງ ), ປະກອບດ້ວຍ 14 ຊົນເຜົ່າດັ້ງເດີມ , ໃນນັ້ນລາວລຸ່ມກວມ 67% ຂອງຊົນເຜົ່າທັງໝົດ . ເຖິງວ່າຈະເປັນແຂວງທີ່ຫ່າງໄກສອກຫຼີກການຄົມມະນາຄົມຫຍຸ້ງຍາກກັນດານແຕ່ກໍ່ເປັນແຂວງທີ່ມີທຳມະຊາດເອື້ອອຳນວຍຄວາມສະດວກເພື່ອຂະຫຍາຍກະສິກຳ ແລະ ປ່າໄມ້ຮອບດ້ານເຊັ່ນ: ເນື້ອທີ່ປູກເຂົ້າໃນເຂດທົ່ງພຽງມີປະມານ 74,016 ເຮັກຕາ , ເນື້ອທີ່ປ່າໄມ້ມີປະມານ 1,087,000 ເຮັກຕາ, ທົ່ງຫຍ້າລ້ຽງສັດມີປະມານ 5,800 ເຮັກຕາ ແຂວງສາລະວັນເປັນແຂວງທີ່ມີຄວາມອຸດົມສົມບູນທາງດ້ານພື້ນຖານທຳມະຊາດພໍສົມຄວນມີແມ່ນ້ຳໄຫຼຜ່ານຫຼາຍສາຍເຊັ່ນ: ແມ່ນ້ຳເຊໂດນ, ແມ່ ນ້ຳເຊລະນອງ, ແມ່ນ້ຳເຊໂປນ, ແມ່ນ້ຳຂອງ, ເຊນ້ຳມະນາ, ແມ່ນ້ຳເຊນວນ, ແມ່ນ້ຳເຊເສັດ ແລະ ແມ່ນ້ຳສາຍອື່ນໆ . ຕາມແມ່ນ້ຳສາຍຕ່າງໆມີແກ້ງ, ຕາດ, ນ້ຳຕົກ, ທີ່ສາມາດເຮັດເຄື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ -ກາງໄດ້ຫຼາຍບ່ອນ , ມີຊັບພະຍາກອນທຳມະຊາດເຊັ່ນ: ບໍ່ຖ່ານຫີນ, ພູຫີນປູນ, ແລະ ອື່ນໆ. ໃນນັ້ນແຂວງສາລະວັນຍັງມີສັດປ່າຫຼາຍຊະນິດເຊັ່ນ: ໝູປ່າ, ກວາງ, ຟານ, ແລນ ແລະ ອື່ນໆ.

ແຂວງສາລະວັນມີຊາຍແດນຕິດຈອດກັບຕ່າງປະເທດ ແລະ ຕ່າງແຂວງດັ່ງນີ້:

- ❖ ທິດເໜືອ ຕິດກັບ ແຂວງສະຫວັນນະເຂດມີຊາຍແດນຕິດຈອດກັນປະມານ 275 ກມ.
- ❖ ທິດຕາເວັນອອກ ຕິດກັບ ແຂວງເທີຽນເຫວ ປະເທດຫວຽດນາມ ມີຊາຍແດນຕິດຈອດກັນປະມານ 80 ກມ ແລະ ມີດ່ານລະໄລຢູ່ເມືອງສະໝ້ວຍເປັນຈຸດຜ່ານ.
- ❖ ທິດໃຕ້ ຕິດກັບ ແຂວງເຊກອງມີຊາຍແດນຕິດຈອດກັນປະມານ 200 ກມ ແລະ ແຂວງຈຳປາສັກມີຊາຍແດນຕິດຈອດກັນປະມານ 175 ກມ.

❖ ທິດຕາເວັນຕົກ ຕິດກັບ ປະເທດໄທ, ມີຊາຍແດນຕິດຈອດກັນປະມານ 90 ກມ ມີດ່ານປາກຕະພານ, ເມືອງລະຄອນເພັງກົງກັບບ້ານປາກແຊງກິ່ງ, ອຳເພີນາຕານຈັງຫວັດອຸບົນລາດຊະທານີ.




ຮູບທີ່ 1: ແຜນທີສະແດງທີ່ຕັ້ງຂອງແຂວງສາລະວັນ

## 2.1.2 ສະພາບໂດຍລວມຂອງເມືອງເລົ່າງາມ ແຂວງສາລະວັນ

ເມືອງເລົ່າງາມຕັ້ງຢູ່ທິດຕາເວັນອອກສ່ຽງໃຕ້ຂອງພູພຽງບໍລິເວນມີໄລຍະທາງຫ່າງຈາກເທດສະບານແຂວງສາລະວັນ ໄປທາງທິດຕາເວັນຕົກສ່ຽງໃຕ້ ປະມານ 44 ກິໂລແມັດ, ຕັ້ງຢູ່ຫວ່າງກາງຂອງສາມແຂວງພາກໃຕ້ຂອງລາວຄື : ແຂວງຈຳປາສັກ, ແຂວງເຊກອງ ແລະ ແຂວງສາລະວັນ. ນອນຢູ່ໃນເສັ້ນແວງທີ່ 15°18' 00" - 150° 46' 69" ແລະ ເສັ້ນຂະ

ໝານທີ່ 106°10' 03" - 106°11'28", ມີເນື້ອທີ່ທັງໝົດ 96,441 ເຮັກຕາ, ເປັນເຂດພູພຽງບໍລິເວນມີລັກສະນະຮາບພຽງ , ຄ້ອຍງຽງບາງເລັກນ້ອຍເຊິ່ງມີຄວາມຄ້ອຍແຕ່ 2% ຂຶ້ນໄປຮອດ 30%, ມີລະດັບຄວາມສູງຈາກໜ້ານ້ຳທະເລປານກາງແຕ່ 250-1000 ແມັດ, ພື້ນທີ່ມີ 3 ລັກສະນະຕົ້ນຕໍຄື: ພູພຽງ, ທົ່ງພຽງ ແລະ ພູສູງ, ເຊິ່ງເປັນພື້ນທີ່ທີ່ມີຄວາມອຸດົມສົມບູນທາງດ້ານທຳມະຊາດ (ດິນດຳ-ນ້ຳຊຸ່ມ), ມີຄວາມເໝາະສົມໃນການປູກພືດຫຼາຍຊະນິດ ແລະ ຖືວ່າເປັນເມືອງອູ່ເຂົ້າອູ່ປາຂອງຊາວແຂວງສາລະວັນ . ໃນທົ່ວເມືອງປະກອບມີ 9 ຊົນເຜົ່າຄື: ສ່ວຍ, ລະເວນ, ຜູ້ໄທ, ຕະໂອ້ຍ, ກະຕູ, ແງະ, ອາລັກ ແລະ ກະຕາງ. ມີປະຊາກອນທັງໝົດ 63,336 ຄົນ , ຍິງ 31,962 ຄົນ, ມີ 10,951 ຄອບຄົວ, ອາຊີບຕົ້ນຕໍແມ່ນການຜະລິດກະສິກຳ ແບ່ງອອກເປັນ 8 ກຸ່ມບ້ານພັດທະນາ ແລະ 1 ກຸ່ມເທດສະບານ. ເມືອງເລົ່າງາມ ມີຂອບເຂດຊາຍແດນຕິດຈອດກັບບັນດາເມືອງດັ່ງນີ້:

- ທິດເໜືອ ຕິດກັບເມືອງວາປີ ແຂວງສາລະວັນ.
- ທິດໃຕ້ ຕິດກັບເມືອງປາກຊ່ອງ ແຂວງຈຳປາສັກ.
- ທິດຕາເວັນອອກ ຕິດກັບເມືອງທ່າແຕງ ແຂວງເຊກອງ.
- ທິດຕາເວັນຕົກ ຕິດກັບເມືອງບາຈຽງ ແຂວງຈຳປາສັກ.

## 2.2 ທິດສະດີທີ່ກ່ຽວຂ້ອງ

### 2.2.1 ທິດສະດີຂອງການປະເມີນຄ່າ

ການປະເມີນຄ່າແມ່ນການໃຊ້ຄ່າສະຖິຕິເພື່ອຈະປະເມີນຄ່າພາຣາມິເຕີ ຫລື ເອີ້ນວ່າ: ການປະເມີນຄ່າພາຣາມິເຕີ , ການປະເມີນຄ່າພາຣາມິເຕີແມ່ນສາມາດຄິດໄລ່ໄດ້ຈາກການສຸ່ມຕົວຢ່າງເຊິ່ງເປັນຈຸດປະສົງທີ່ສຳຄັນທີ່ສຸດໃນການວິເຄາະຄ່າທາງສະຖິຕິກໍ່ຄືການສະ ຫຼຸບຜົນກ່ຽວ ກັບປະຊາກອນຈາກຂໍ້ແທ້ຈິງບາງສ່ວນທີ່ໄດ້ຮັບຈາກຂໍ້ມູນໃນຕົວຢ່າງ.

### 2.2.2 ບົດບັນຍັດ ແລະ ຂໍ້ກຳນົດຂອງລັດຖະບານກ່ຽວກັບການຄຸ້ມຄອງທີດິນ

ອີງຕາມປຶ້ມກົດຫມາຍວ່າດ້ວຍທີ່ດິນແຫ່ງ ສປປ ລາວ ເລກທີ່ 04 / ສພຊ, ລົງວັນທີ່ 21 ຕຸລາ 2003 ໄດ້ມີບາງຂໍ້ບັນຍັດກ່ຽວກັບທີ່ດິນດັ່ງນີ້:

- ທີ່ດິນ

ທີ່ດິນແຫ່ງ ສ ປ ປ ລາວ ແມ່ນເນື້ອທີ່ດິນທີ່ນອນຢູ່ໃນເຂດຂອງ ສ ປ ປ ລາວ ເຊິ່ງປະກອບດ້ວຍຫນ້າດິນ , ພື້ນດິນ, ພູຜາ, ເກາະດອນລວມທັງພື້ນນ້ຳ , ນ່ານນ້ຳ ແລະ ນ່ານຟ້າ.

ທີ່ດິນແຫ່ງ ສ ປ ປ ລາວ ແມ່ນຊັບພະຍາກອນອັນຕົ້ນຕໍຂອງຊາດທີ່ເປັນບ່ອນດຳລົງຊີບ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນແຫ່ງການ

ຜະລິດ ແລະ ພັດທະນາເສດຖະກິດ ແລະ ສັງຄົມລວມເຖິງວຽກງານປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ.

- ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ
  ຜູ້ໄດ້ຮັບສິດນຳໃຊ້ທີ່ດິນມີສິດຕ່າງໆດັ່ງນີ້:
  - ສິດການປົກປັກຮັກສາທີ່ດິນ.
  - ສິດໃຊ້ທີ່ດິນ.
  - ສິດໄດ້ຮັບຫມາກຜົນຈາກທີ່ດິນ.
  - ສິດສືບທອດນຳໃຊ້ທີ່ດິນ.

### 2.2.3 ທິດທາງນະໂຍບາຍ ແລະ ຍຸດທະສາດຂອງລັດຖະບານໃນການນຳໃຊ້ທີ່ດິນ

ເພື່ອແນໃສ່ໃຫ້ປ່າມີຄວາມອຸດົມສົມບູນ ແລະ ຍືນຍົງເຫລືອໄວ້ອ ານາຄົດຕ້ອງເລັ່ງໃສ່ການນຳໃຊ້ດິນເພື່ອການຜະລິດກະສິກຳໂດຍອີງໃສ່ຄວາມເ ໝາະສົມຂອງດິນ , ຫັນຈາກການເຮັດໄຮ່ເລື່ອນລອຍລົງມາເຮັດນາ , ຜະລິດກະສິກຳແບບຄົງທີ່ , ຫັນຈາກການດຳລົງຊີວິດແບບເກົ່າໄປສູ່ການດຳລົງຊີວິດແບບໃຫມ່, ຕໍ່ບັນຫານີ້ພາກສ່ວນປະຕິບັດງານຢູ່ຂັ້ນພື້ນຖານຕ້ອງເອົາ ໃຈໃສ່ດ້ານການປັບປຸງຜົນຜະລິດໃຫ້ດີຂື້ນເພື່ອໃຫ້ໄດ້ປະລິມານ ແລະ ຄຸນນະພາບໄປພ້ອມໆກັນຈິ່ງເຮັດໃຫ້ການນຳໃຊ້ທີ່ດິນຂອງປະຊາຊົນຫລຸດພົ້ນອອກຈາກການນຳໃຊ້ດິນແບບ ຟຸມເຟືອຍ ແລະ ຄ່ອຍໆຫັນອອກຈາກສະພາບແວດລ້ອມດັ້ງເດີມເທື່ອລະກ້າວ (ກົມປ່າໄມ້, 2 ເມສາ 1997).

### 2.2.4 ການນຳໃຊ້ທີ່ດິນໃນ ສ ປ ປ ລາວ

ຊັບພະຍາກອນທີ່ດິນກໍ່ຄືຊັບພະຍາກອນທຳມະຊາດອື່ນໆທີ່ມີບົດບາດສຳຄັນຕໍ່ການດຳ ລົງຊີວິດຂອງມະນຸດກໍ່ຄືປະຊາຊົນລາວແຕ່ເຖິງຢ່າງກໍ່ຕາມສະພາບພູມສັນຖານຂອງປະເທດລາວຖືວ່າເປັນເລື່ອງທີ່ສຳຄັນເຊິ່ງກໍ່ໃຫ້ເກີດຜົນເນື່ອງຈາກສະພາບຊັ້ນດິນທີ່ ຍັງຂາດຄວາມອຸ ດົມສົມບູນ ແລະ ພູສູງຊັນ, ສະນັ້ນການນຳໃຊ້ທີ່ດິນໃນ ສ ປ ປ ລາວ ແມ່ນໄດ້ຖືກແບ່ງອີງຕາມຫນ່ວຍງານກວດກາໄດ້ປະຕິບັດຕົວຈິງໃນການຈັດແບ່ງປະເພດການນຳໃຊ້ດິນ , ເພື່ອການກະສິກຳທີ່ຕ່າງກັນເຊິ່ງແຈກຢາຍທົ່ວປະເທດໂດຍສະເພາະຢູ່ເຂດຫ່າງໄກສອກຫລີກ, ເຂດພູສູງ, ເຂດຕົ້ນນ້ຳລຳທານ , ການເຮັດໄຮ່ແບບເລື່ອນລອຍເປັນຮູບການນຳໃຊ້ທີ່ດິນທີ່ນິຍົມກັນຫລາຍໃນພື້ນທີ່ເຂດສູງ ເຊິ່ງເປັນບ່ອນພັກອາໃສຂອງຊົນເຜົ່າກຸ່ມນ້ອຍ ກົມປ່າໄມ້ປະເມີນໄວ້ 280,000 ຄອບຄົວທີ່ມີອາຊີບເຮັດໄຮ່ເລື່ອນລອຍທຳລາຍປ່າໄມ້ປະມານ 30 ພັນ ເຮັກຕາ/ປີ. ສະນັ້ນ ຈິ່ງຖືວ່າລະບົບການນຳໃຊ້ເນື້ອທີ່ດິນແບບນີ້ສາເຫດຕົ້ນຕໍທີ່ເຮັດໃຫ້ການຄຸ້ມຄອງປ່າໄມ້ມີການປ່ຽນແປງ ແລະ ເປັນເຫດຜົນເຮັດໃຫ້ເກີດຜົນກະທົບທາງລົບ ອື່ນໆ ຕາມມາເຖິງແມ່ນວ່າປະຊາກອນຈະມີ ໜ້ອຍທຽບໃສ່

ປະເທດອື່ນ ແຕ່ການຖາງປ່າເຮັດໄຮ່ເລື່ອນລອຍຍັງເປັນອາຊີບຂອງປະຊາຊົນສ່ວນໃຫຍ່ (ກົມປ່າໄມ້ 1997).

### 2.2.5 ປະເພດຂອງທີ່ດິນ

(ອີງຕາມມາດຕາທີ 11 ໃໝ່) ວ່າດ້ວຍການຈັດແບ່ງເຂດປະເພດທີ່ດິນໃນປຶ້ມກົດໝາຍວ່າດ້ວຍທີ່ດິນເລກທີ່ 04 / ສພຊ, ລົງວັນທີ່ 21 ຕຸລາ 2003.

1) ການຈັດແບ່ງເຂດ: ເຂດທົ່ງພຽງ, ພູພຽງ ແລະ ພູດອຍເຊິ່ງປະກອບດ້ວຍ:
   - ເຂດຕົວເມືອງ.
   - ເຂດຊົນນະບົດ.
   - ເຂດເສດຖະກິດສະເພາະ.
   - ເຂດເສດຖະກິດພິເສດ.
2) ການຈັດແບ່ງປະເພດ
   - ທີ່ດິນກະສິກຳ
   - ທີ່ດິນປ່າໄມ້
   - ທີ່ດິນບໍລິເວນນ້ຳ
   - ທີ່ດິນອຸດສາຫະກຳ
   - ທີ່ດິນຄົມມະນາຄົມ
   - ທີ່ດິນວັດທະນະທຳ
   - ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ
   - ທີ່ດິນປຸກສ້າງ

- ທີ່ດິນກະສິກຳ: ທີ່ດິນກະສິກຳແມ່ນທີ່ດິນທີ່ໄດ້ກຳນົດໄວ້ເ ພື່ອນຳໃຊ້ເຂົ້າໃນການປູກຝັງ , ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງດ້ານກະສິກຳລວມທັງຊົນລະປະທານ.
- ການຄຸ້ມຄອງທີ່ດິນກະສິກຳ: ກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ຄຸ້ມຄອງທີ່ດິນກະສິກຳ, ກຳນົດທີ່ດິນກະສິກຳປະເພດຕ່າງໆຄົ້ນຄ້ວາວາງລະບຽບການຄຸ້ມຄອງ , ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.
- ທີ່ດິນປ່າໄມ້: ທີ່ດິນປ່າໄມ້ແມ່ນເນື້ອທີ່ທຸກໆຕອນທີ່ມີປ່າໄມ້ປົກຄຸມຢູ່ ຫລື ທີ່ດິນບໍ່ມີປ່າໄມ້ປົກຄຸມເຊິ່ງລັດໄດ້ກຳນົດໃຫ້ເປັນປ່າໄມ້ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍ.
- ການຄຸ້ມຄອງທີ່ດິນປ່າໄມ້ : ກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ຄຸ້ມຄອງທີ່ດິນປ່າໄມ້ , ກຳນົດທີ່ດິນປ່າໄມ້ປະເພດຕ່າງໆ, ຄົ້ນຄ້ວາວາງລະບຽບການຄຸ້ມຄອງ , ປົກປັກຮັກສາ, ການ

ພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

- ທີ່ດິນບໍລິເວນນ້ຳ: ທີ່ດິນບໍລິເວນນ້ຳແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫລື ຢູ່ຂອບເຂດອ້ອມແອ້ມແຫ່ງທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນປີ້ງໃຫມ່, ທີ່ດິນປົກປະ ຫລື ທີ່ດິນທີ່ເກີດຈາກການດັດແປງ ຫລື ອ່າວແລວນ້ຳ.
- ການຄຸ້ມຄອງທີ່ດິນບໍລິເວນນ້ຳ: ກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ຄຸ້ມຄອງທີ່ດິນບໍລິເວນນ້ຳ, ຄົ້ນຄ້ວາວາງລະບຽບການຄຸ້ມຄອງ , ການປົກປັກຮັກສາ , ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວໂດຍປະສານສົມທົບກັບອົງການປົກຄອງທ້ອງ ຖິ່ນ, ບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງ ເອົາ.
- ທີ່ດິນອຸດສາຫະກຳ : ທີ່ດິນອຸດສາຫະກຳແມ່ນຂອບເຂດ ຫລື ບໍລິເວນທີ່ດິນເຊິ່ງລັດກຳ ນົດໃຫ້ເປັນທີ່ຕັ້ງໂຮງຈັກ , ໂຮງງານລວມທັງສະຖານທີ່ພັກເຊົາຂອງກຳມະກອນ , ພື້ນທີ່ອຸດສາຫະກຳ , ເຂດອຸດສາຫະກຳ , ນິຄົມອຸດສາຫະກຳ , ສະຖາບັນ ຫລື ສູນຄົ້ນຄ້ວາທົດລອງທາງອຸດສາຫະກຳ , ແຫລ່ງວັດຖຸພະລັງງານ , ແລວທາງສາຍສົ່ງໄຟຟ້າ , ແລວທາງທໍ່ພະລັງງານ ແລະ ອາຍແກັສ, ທໍ່ນ້ຳປະປາ, ເຂດບໍ່ແຮ່ ແລະ ທີ່ດິນອື່ນໆທີ່ນຳໃຊ້ເຂົ້າໃນເປົ້າໝາຍອຸດສາຫະກຳ.
- ການຄຸ້ມຄອງທີ່ດິນອຸດສາຫະກຳ : ກະຊວງອຸດສາຫະກຳ ແລະ ຫັດຖະກຳເປັນຜູ້ຄຸ້ມຄອງທີ່ດິນອຸດສາຫະກຳ , ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ , ການປົກປັກ ຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ . ລວມທັງການປົກປັກຮັກສາສິ່ງແວດລ້ອມແລ້ວນຳສະເຫນີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ . ສຳລັບການຄຸ້ມຄອງທີ່ດິນແລວທາງສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ ແລະ ອາຍແກັສ, ທໍ່ນ້ຳປະປາໃຫ້ປະສານສົມທົບກັບຂະແໜງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງພ້ອມທັງຂະແໜງການອື່ນໆທີ່ກ່ຽວຂ້ອງ.
- ທີ່ດິນຄົມມະນາຄົມ : ທີ່ດິນຄົມມະນາຄົມແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ , ຂອບທາງ, ຮ່ອງນ້ຳ, ເຂດສະຫງວນແລວທາງ , ສະຖານທີ່ຕັ້ງຂົວ , ຕັ້ງສະຖານທີ່ສື່ສານລວມທັງສະໜາມບິນ , ທ່າເຮືອ, ສະຖານີລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ , ອູໂມງ, ທາງລົດໄຟ, ສະຖານທີ່ຕັ້ງຮັບໃຊ້ການຂົນສົ່ງ ແລະ ທີ່ດິນອື່ນໆທີ່ໃຊ້ເຂົ້າໃນວຽກງານຄົມມະນາຄົມຂົນສົ່ງ.
- ການຄຸ້ມຄອງທີ່ດິນຄົມມະນາຄົມ: ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເປັນຜູ້ຜະລິດຄຸ້ມຄອງທີ່ດິນຄົມມະນາຄົມ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມ ຄອງ, ການ

ປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວແລ້ວສະເໜີຕໍ່ລັດຖະບານເພື່ອຮັບຮອງເອົາ.

- ທີ່ດິນວັດທະນະທຳ: ທີ່ດິນວັດທະນະທຳແມ່ນສະຖານທີ່ຕັ້ງຂອງມໍລະດົກທາງວັດທະນະ ທຳທີ່ຕິດພັນກັບຮ່ອງຮອຍປະຫວັດສາດ , ວັດຖຸບູຮານ, ປູສະນີຍະສະຖານ, ວັດວາອາຮາມ, ທິວທັດທຳມະຊາດ, ສິ່ງປຸກສ້າງທາງດ້ານວັດທະນະທຳ ແລະ ສະຖານ ທີ່ອື່ນໆ ທີ່ລັດກຳນົດໃຫ້ເປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ.
- ການຄຸ້ມຄອງທີ່ດິນວັດທະນະທຳ: ກະຊວງຖະແຫລງຂ່າວ ແລະ ວັດທະນະທຳໃນຂອບເຂດທົ່ວປະເທດ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ , ການປົກປັກຮັກສາ, ການພັດທະນາ ແລະ ການໃຊ້ທີ່ດິນປະເພດດັ່ງກ່າວແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ ບຸກຄົນ ຫລື ການຈັດຕັ້ງທີ່ໃຊ້ທີ່ດິນວັດທະນະທຳນັ້ນຕ້ອງປະຕິບັດຕາມລະບຽບການກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ການປົກປັກຮັກສາທີ່ດິນວັດທະນະທຳ.
- ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ : ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບແມ່ນ ທີ່ດິນທີ່ໃຊ້ໃນວຽກງານປ້ອງກັນຊາດ -ປ້ອງກັນຄວາມສະຫງົບ , ບ່ອນຕັ້ງຄ້າຍ, ສຳນັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມເຝິກແອບວິຊາການທະຫານ, ຕຳຫລວດ, ສະໜາມປືນໃຫຍ່, ສະໜາມບິນ, ທ່າເຮືອ, ສາງ, ໂຮງຫມໍ, ໂຮງຈັກ, ໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕຳຫລວດ ແລະ ທີ່ດິນນຳໃຊ້ເຂົ້າໃນ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
- ການຄຸ້ມຄອງທີ່ດິນປ້ອງກັນຊາດ -ປ້ອງກັນຄວາມສະຫງົບ : ກະຊວງປ້ອງກັນຊາດ ແລະ ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຜະລິດຄຸ້ມຄອງທີ່ດິນປ້ອງກັນຊາດ -ປ້ອງກັນຄວາມສະຫງົບ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ , ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວທີ່ຂື້ນກັບການຄຸ້ມຄອງຂອງຕົນແລ້ວນຳສະເຫນີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.
- ທີ່ດິນປຸກສ້າງ: ທີ່ດິນປຸກສ້າງແມ່ນ ທີ່ດິນທີ່ໄດ້ກຳນົດໄວ້ເພື້ອໃຊ້ໃນການປຸກສ້າງທີ່ຢູ່ອາໃສ , ໂຮງຈັກ, ໂຮງງານ, ສຳນັກງານ, ອົງການ, ສະຖານທີ່ສາທາລະນະ.
- ການຄຸ້ມຄອງທີ່ດິນປຸກສ້າງ : ອົງການຄຸ້ມຄອງທີ່ດິນແຫ່ງຊາດເປັນຜູ້ຄຸ້ມຄອງທີ່ດິນທີ່ດິນປຸກສ້າງ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

### 2.2.6 ປະເພດກຳມະສິດກ່ຽວກັບການນຳໃຊ້ທີ່ດິນ

ອີງຕາມຂໍ້ກຳນົດຂອງລັດຖະມົນຕີວ່າດ້ວຍການພິສູດຫລັກຖານຢ່າງເປັນລະບົບກ່ຽວກັບການນຳໃຊ້ທີ່ດິນເລກທີ 0997 ລົງວັນທີ 24 ມິຖຸນາ 1998, ໃນມາດຕາທີ່ 19 ວ່າດ້ວຍປະເພດກຳມະສິດ ນຳໃຊ້ທີ່ດິນຕ່າງໆດັ່ງນີ້:

- **ປະເພດ 1**

**a.** ກຳມະສິດກ່ຽວກັບການນຳໃຊ້ທີ່ດິນໂດຍມີເອກກະສານຄົບຖ້ວນ: ທີ່ດິນບໍ່ແມ່ນທີ່ດິນລັດຄຸ້ມຄອງ ແລະ ເຈົ້າຂອງສິດໄດ້ມີເອກກະສານຄົບຖ້ວນ ແລະ ຖືກຕ້ອງຕາມກົດ ໝາຍ.

**b.** ກຳມະສິດກ່ຽວກັບສິດນຳໃຊ້ທີ່ດິນທີ່ມີເອກກະສານບໍ່ຄົບຖ້ວນ ແລະ ການປົກປັກຮັກສາມາເປັນເວລາ 10 ປີ. ດ້ວຍຄວາມສະຫງົບ ແລະ ເປີດເຜີຍ. ທີ່ດິນທີ່ບໍ່ແມ່ນທີ່ດິນລັດຄຸ້ມຄອງ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນ. ມີບາງເອກກະສານ (ຄົບຖ້ວນຖືກຕ້ອງຕາມກົດໝາຍ ຫລື ບໍ່ກໍ່ຕາມ) ແຕ່ບໍ່ມີເອກກະສານຄືຢູ່ປະພດ 1.1 ແລະ ພ້ອມນັ້ນຜູ້ນຳໃຊ້ທີ່ດິນໄດ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນມາເປັນເວລາ 10 ປີ ຫລື ເກີນກວ່ານັ້ນ.

ກຳນົດເວລາການປົກປັກຮັກສາ 10 ປີໝາຍເຖິງ:

- ການປົກປັກຮັກສາຈາກບຸກຄົນຜູ້ດຽວເປັນເວລາ 10 ປີເຕັມ.
- ການປົກປັກຮັກສາຈາກບຸກຄົນຫລາຍຄົນຕໍ່ໆກັນມາ, ແຕ່ຜູ້ທີ່ປົກປັກຮັກສາຜູ້ກ່ອນໄດ້ມອບ ຫລື ໄດ້ສືບທອດຜົນປະໂຫຍດຕ່າງໆ ຂອງຜູ້ກ່ຽວໃຫ້ຜູ້ໃດຜູ້ໜຶ່ງຕໍ່ ລວມແລ້ວເປັນເວລາ ທັງໝົດ 10 ປີ.

**c.** ກຳມະສິດກ່ຽວກັບທີ່ດິນໂດຍອີງຕາມປະເພນີ. ເປັນທີ່ດິນທີ່ບໍ່ແມ່ນທີ່ດິນລັດທີ່ບຸກຄົນຜູ້ໜຶ່ງໄດ້ປົກປັກຮັກສາມາດ້ວຍຄວາມສະຫງົບ ແລະ ໄດ້ມາແຈ້ງວ່າຜູ້ກ່ຽວເປັນເຈົ້າຂອງສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ, ແຕ່ທີ່ຈິງແລ້ວເປັນສິດທີ່ໄດ້ຕາມປະເພນີ (ການຊື້ / ຂາຍ ຫລື ສືບມູນຕາມປະເພນີຢູ່ເຂດຊົນນະບົດໂດຍບໍ່ມີເອກະສານແຕ່ຢ່າງໃດ ) ຫລື ໄດ້ຈາກການບຸກເບີກທີ່ດິນໂດຍໃຊ້ເຫື່ອແຮງຂອງຕົນ ຫລື ທຶນຕົນເອງສະນັ້ນ, ຈຶ່ງບໍ່ມີເອກກະສານຄົບຖ້ວນ ຫລື ບໍ່ມີເລີຍ. ແຕ່ວ່າໃນກໍລະນີດັ່ງກ່າວນີ້ຖ້າມີຄຳໃຫ້ການຈາກນາຍບ້ານ ຫລື ຜູ້ທີ່ຖືກແຕ່ງຕັ້ງພ້ອມທັງເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງຢ່າງໜ້ອຍ 2 ຄົນ ຢັ້ງຢືນວ່າຜູ້ກ່ຽວເປັນເຈົ້າຂອງນຳໃຊ້ທີ່ດິນທີ່ແທ້ຈິງ ບຸກຄົນນັ້ນກໍ່ຈະຖືກຮັບຮູ້ວ່າເປັນເຈົ້າຂອງສິດໃຊ້ທີ່ດິນ.

**d.** ກຳມະສິດກ່ຽວກັບສິດນຳໃຊ້ທີ່ດິນຈາກການປົກປັກຮັກສາມາຢ່າງມີຄວາມສະຫງົບ ແລະ ຖືກຕ້ອງຕາມກົດໝາຍເຊິ່ງເຄີຍເປັນທີ່ດິນຂອງບຸກຄົນອື່ນທີ່ໄດ້ປ່ອຍມາ ແລະ ຜູ້ປົກປັກຮັກສາຄົນປັດຈຸບັນໄດ້ຢູ່ໃນທີ່ດິນດັ່ງກ່າວນີ້ມາຕະຫລອດດ້ວຍຄວາມສະຫງົບ ແລະ ຖືກຕ້ອງຕາມກົດໝາຍເປັນເວລາ 20 ປີຕໍ່ເນື່ອງກັນ ຫລື ເກີນກ່ວານັ້ນ.

ການກຳນົດເວລາການປົກປັກຮັກສາ 20 ປີ ໝາຍເຖິງ:

- ການປົກປັກຮັກສາໂດຍບຸກຄົນຜູ້ດຽວເປັນເວລາ 20 ປີເຕັມ.
- ການປົກປັກຮັກສາໂດຍບຸກຄົນຫລາຍຄົນຕໍ່ໆກັນມາ , ແຕ່ກ່ອນໄດ້ມອບ ຫລື ໄດ້ສືບທອດ ຜົນປະໂຫຍດຕ່າງໆຂອງຜູ້ກ່ຽວໃຫ້ແກ່ຜູ້ໃດໜຶ່ງ, ລວມແລ້ວເປັນເວລາທັງຫມົດ 20 ປີ.

**e.** ກຳມະສິດນຳໃຊ້ທີ່ດິນໄດ້ປົກປັກຮັກສາດ້ວຍຄວາມສະຫງົບ , ແຕ່ບໍ່ໄດ້ປະຕິບັດຕາມລະບຽບການທີ່ດິນຂອງບຸກຄົນເອກກະຊົນທີ່ບໍ່ມີຜູ້ປົກປັກຮັກສາມາກ່ອນ ແລະ ຜູ້ທີ່ຢູ່ປົກປັກຮັກສາ ແລະ ນຳໃຊ້ຄົນປະຈຸບັນ (ບໍ່ຫມາຍເຖິງຜູ້ທີ່ເຊົ່າ) ໄດ້ຢູ່ມາຕະຫຼອດດ້ວຍຄວາມສະຫງົບແຕ່ບໍ່ໄດ້ປະຕິບັດຕາມລະບຽບການເປັນເວລາ 10 ປີຕໍ່ເນື່ອງກັນ ຫລື ເກີນກ່ວານັ້ນ.

ການກຳນົດເວລາການປົກປັກຮັກສາເວລາ 10 ປີ ຫມາຍເຖິງ:

- ການປົກປັກຮັກສາໂດຍບຸກຄົນຜູ້ດຽວເປັນເວລາ 10 ປີເຕັມ.
- ການປົກປັກຮັກສາໂດຍບຸກຄົນຫລາຍຄົນຕໍ່ໆກັນມາແຕ່ຜູ້ກ່ອນໄດ້ມອບ ຫລື ໄດ້ໃຫ້ບຸກຄົນຜູ້ໃດຜູ້ຫນຶ່ງສືບທອດຜົນປະໂຫຍດຕ່າງໆຂອງຜູ້ກ່ຽວ ແລະ ລວມແລ້ວເປັນເວລາທັງຫມົດ 10 ປີ. ທີ່ດິນທີ່ເປັນກຳມະສິດຂອງລັດໂດຍຫລັກຖານ , ການຮັກສາມາເປັນໄລຍະຍາວເທົ່າໃດກໍ່ຕາມ, ທີ່ດິນດັ່ງກ່າວຈະເປັນທີ່ດິນຂອງລັດຕະຫລອດໄປ.

❖ **ປະເພດ 2** ກຳມະສິດກ່ຽວກັບສິດນຳໃຊ້ທີ່ດິນເຊິ່ງເອກກະສານບໍ່ມີຄົບຖ້ວນ ແລະ ການປົກປັກຮັກສາພັດທະນາມາບໍ່ເຖິງກຳນົດ 10 ປີ. ເປັນທີ່ດິນທີ່ບໍ່ແມ່ນທີ່ດິນລັດຄຸ້ມຄອງເຊິ່ງບຸກຄົນຜູ້ໃດຜູ້ຫນຶ່ງໄດ້ນຳມາໃຊ້ມາດ້ວຍຄວາມສະຫງົບ ແລະ ຖືກກົດຫມາຍ ແຕ່ຜູ້ກ່ຽວບໍ່ມີເອກະສານຄົບຖ້ວນມາອ້າງສິດໃນການນຳໃຊ້ທີ່ດິນດັ່ງກ່າວ ພ້ອມນັ້ນຜູ້ກ່ຽວເອງລວມທັງຜູ້ທີ່ເປັນຜູ້ປົກປັກຮັກສາຜູ້ກ່ອນທີ່ໄດ້ມອບສິດໃຫ້ກັນຕໍ່ໆມາ , ດ້ວຍການປະມອບໂອນ ຫລື ດ້ວຍການສືບທອດກໍ່ແລ້ວແຕ່, ໄດ້ພາກັນປົກປັກຮັກສາທີ່ດິນດັ່ງກ່າວມາເປັນເວລາລວມທັງຫມົດແລ້ວກໍ່ຍັງຕໍ່າກ່ວາ 10 ປີ.

❖ **ປະເພດ 3** ທີ່ດິນລັດແມ່ນລວມທັງ:

- ທີ່ດິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງອຳນາດການປົກຄອງຂອງຂັ້ນສູນກາງ , ແຂວງ, ກຳແພງນະຄອນ, ເມືອງ ແລະ ບ້ານເຊັ່ນ: ທີ່ດິນສາທາລະນະ ແລະ ທີ່ດິນລວມຂອງບ້ານ, ທີ່ດິນເຊື່ອມໂຊມ, ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ, ທີ່ດິນຄົມມະນາຄົມ ແລະ ອື່ນໆ.
- ທີ່ດິນຂອງພວກຄົນລາວທີ່ໂຕນໜີ ຫລື ຄົນຕ່າງປະເທດທີ່ປະໜີໄປ.
- ແຕ່ໃນກໍລະນີທີ່ດິນປະເພດ 1 ຫລື ປະເພດ 2 ດັ່ງໄດ້ລະບຸໄວ້ໃນມາດຕານີ້.
- ທີ່ດິນເປັນຂອງບຸກຄົນທີ່ບໍ່ແມ່ນພົນລະເມືອງລາວ; ຫລື

- ທີ່ເປັນຂອງຄົນລາວແຕ່ເນື້ອທີ່ດິນເກີນກຳນົດອັດຕາທີ່ກົດໝາຍວ່າດ້ວຍທີ່ດິນໄດ້ອະນຸຍາດໃຫ້ ສະນັ້ນ, ໜ່ວຍງານພິສູດຫລັກຖານຈະຖືວ່າສິດນຳໃຊ້ທີ່ດິນດັ່ງກ່າວເປັນທີ່ດິນເອກະຊົນແຕ່ໜ່ວຍງານຈະຕ້ອງໝາຍເຫດດັ່ງກ່າວຢູ່ໃນບົດລາຍງານຂອງພວກເຂົາເຈົ້າ.

ໃນກໍລະນີທີ່ດິນຕອນໃດຕອນໜຶ່ງຕົກຢູ່ໃນປະເພດ 1 ຫລື ປະເພດ 3 ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 19 ນີ້, ທີ່ດິນດັ່ງກ່າວຖືວ່າມີເງື່ອນໄຂພຽງພໍທີ່ຈະເປັນໃບຕາດິນ . ໃນກໍລະນີທີ່ດິນຕົກຢູ່ໃນຕົກຢູ່ໃນປະເພດ 3, ໃບຕາດິນຈະຕ້ອງລະບຸໃຫ້ເຫັນຢ່າງຈະແຈ້ງວ່າເປັນ “ທີ່ດິນລັດ”.

ໃນກໍລະນີທີ່ດິນຕອນໃດຕອນໜຶ່ງຕົກຢູ່ໃນປະເພດ 2 ຕາມທີ່ໄດ້ລະບຸໄວ້ໃນມາດຕານີ້ ຕອນດິນດັ່ງກ່າວແມ່ນເໝາະສົມທີ່ຈະໄດ້ໃບຢັ້ງຢືນທີ່ດິນຊົ່ວຄາວ. ເຖິງຢ່າງໃດກໍ່ຕາມ, ຖ້າໜ່ວຍງານພິສູດຫລັກຖານເຫັນວ່າມີການສົງໃສຢູ່ບ່ອນໃດ ຫລື ບໍ່ແນ່ໃຈກ່ຽວກັບກຳມະສິດຂອງສິດນຳໃຊ້ທີ່ດິນດັ່ງກ່າວ, ກໍ່ຈະອອກໃບຢັ້ງຢືນທີ່ດິນຊົ່ວຄາວໃຫ້ ເຊັ່ນດຽວກັນນັ້ນຖ້າບໍ່ມີຄວາມແນ່ນອນກ່ຽວກັບສິດສຳຮອງ ຫລື ຈຸດທີ່ຕັ້ງຂອງເຂດແດນນັ້ນກໍ່ຈະຕ້ອງອອກໃບຢັ້ງ ຢືນຊົ່ວຄາວໃຫ້.

### 2.2.7 ນິຍາມດິນ

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ (2008) ລາຍງານວ່າ: ດິນ (Soil) ແມ່ນວັດຖຸທຳມະຊາດພິເສດທີ່ເກີດຂຶ້ນດ້ວຍຜົນກະທົບຂອງບັນດາປັດໄຈຊີວະສາດ (ພືດພັນທຳມະຊາດ ), ພູມອາກາດ, ຫີນແຮ່ (ວັດຖຸຕົ້ນກຳເນີດ ) ສະພາບພື້ນທີ່, ເວລາ ແລະ ຜົນກະທົບຂອງມະນຸດ ຫລື ແມ່ນວັດຖຸທຳມະຊາດທີ່ເກີດຂຶ້ນຈາກການພຸພັງຂອງຫີນ ແລະ ແຮ່ທາດຕ່າງໆ ການຍ່ອຍສະຫລາຍຂອງເສດຊາກສິ່ງທີ່ມີຊີວິດທັງສັດ ແລະ ພືດປົນເຂົ້າກັນເປັນເນື້ອດຽວ , ປົກຫຸ້ມຜິວໂລກຢູ່ເປັນຊັ້ນບາງໆ ເປັນບ່ອນເກີດ ແລະ ເປັນບ່ອນຈະເລີນພັນຂອງພືດ (ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ,2008).

### 2.2.8 ນິຍາມທີ່ດິນ

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ (2008) ລາຍງານວ່າທີ່ດິນ (Land) ແມ່ນຂອບເຂດໜຶ່ງເຊິ່ງກຳນົດດ້ວຍພູມມີສາດ , ສະພາບພື້ນທີ່, ທີ່ຕັ້ງ ແລະ ບັນດາປັດໃຈອື່ນໆຂອງທຳມະຊາດ, ເສດຖະກິດ-ສັງຄົມເຊັ່ນ: ດິນ, ພູມສາດ, ສະພາບພື້ນທີ່, ທໍລະນີສາດ, ອຸທົກກະສາດ (ນ້ຳ), ສັດ, ພືດ ແລະ ການຜະລິດຂອງຄົນ (ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ 2008).

### 2.2.9 ຄວາມສຳຄັນຂອງດິນ

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ (2008) ລາຍງານວ່າ ດິນແມ່ນຊັບພະຍາກອນທີ່ມີຄຸນຄ່າ, ມີຄວາມສຳຄັນທີ່ສຸດ ແລະ ບໍ່ອາດຂາດໄດ້ໃນການກຳເນີດ ແລະ ຈະເລີນເຕີບໂຕຂອງຄົນ ແລະ ສິ່ງທີ່ມີຊີວິດຕ່າງໆ ເປັນຕົ້ນແມ່ນທີ່ດິນປູກຝັງ ພ້ອມດຽວກັນນີ້ດິນກໍ່ຍັງມີຄວາມສຳຄັນ

ທີ່ສຸດ ເພື່ອພັດທະນາການກະສິກຳແບບຍືນນານ ແລະ ໃຫ້ໄດ້ປະສິດທິຜົນສູງສຸດ (ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ 2008).

## 2.3 ງານວິໄຈທີ່ກ່ຽວຂ້ອງ

ສີຣາກອນ ແລະ ຄະນະ (2005) ໄດ້ສຶກສາການປະເມີນມູນຄ່າສິ່ງແວດລ້ອມໃນການອານຸລັກອຸດທະຍານແຫ່ງຊາດລຳນ້ຳກົກ. ການວິເຄາະປັດໄຈທີ່ມີອິດທິພົນຕໍ່ຄວາມເຕັມໃຈທີ່ກະຈາຍ ແລະ ໄດ້ສົມມຸດທາງເລືອກໃນການອານຸລັກອຸດທະຍານເພື່ອສອບຖາມຄວາມເຕັມໃຈທີ່ຈະຈ່າຍ 2 ທາງເລືອກໄດ້ແກ່ ວິທີການປ້ອງກັນ ແລະ ວິທີການຟື້ນຟູໂດຍວິທີການປ້ອງກັນ ໂດຍໄດ້ເກັບຈາກກຸ່ມຕົວຢ່າງນັກທ່ອງທ່ຽວຄົນໄທມາທ່ຽວອຸດທະຍານແຫ່ງຊາດລຳນ້ຳກົກ ໂດຍໃຊ້ວິທີການກຸ່ມຈຳນວນຕົວຢ່າງ 400 ຕົວຢ່າງ ແລະ ວິເຄາະຂໍ້ມູນດ້ວຍແບບຈຳລອງ Pobit ໂດຍນັກວິທີການວິເຄາະການປະມານພາວະຄວາມໜາຈະເປັນສູງສຸດ (Maximum Like lihood Estimate MEL) ຜົນການສຶກສາພົບວ່ານັກທ່ອງທ່ຽວມີຄວາມເຕັມໃຈທີ່ຈະຈ່າຍໃນການອານຸລັກອຸດທະຍານດ້ວຍວິທີປ້ອງກັນ 1 ເທົ່າກັບ 331,20 ບາດຕໍ່ປີ ແລະ ມີມູນຄ່າທາງເສດຖະສາດເທົ່າກັບ 69,605,985.60 ບາດຕໍ່ປີ ແລະ ມີອິດທິພົນຕໍ່ຄວາມເຕັມໃຈທີ່ຈະຈ່າຍໄດ້ແກ່ : ເພດ, ລະດັບການສຶກສາ, ການໄດ້ເຂົ້າຮ່ວມກິດຈະກຳການອານຸລັກ , ສະຖານະພາບຈຳນວນສະຖານທີ່ທີ່ເຄີຍໄປ ແລະ ການກັບມາທ່ຽວອີກເທື່ອໜຶ່ງດ້ວຍຄວາມເຕັມໃຈທີ່ຈະຈ່າຍໃນການອານຸລັກອຸດທະຍານດ້ວຍວິທີການປ້ອງກັນທີ່ 2 ເທົ່າກັບ 278,57 ບາດຕໍ່ປີ ແລະ ມີມູນຄ່າທາງເສດຖະສາດເທົ່າກັບ 58,545,16.91 ບາດຕໍ່ປີ. ຄວາມເຕັມໃຈທີ່ຈະຈ່າຍໃນການອານຸລັກອຸດທະຍານດ້ວຍວິທີການຟື້ນຟູ 1 ເທົ່າກັບ 238,48 ບາດຕໍ່ປີ ແລະ ມີມູນຄ່າທາງເສດຖະສາດເທົ່າກັບ 50,119,672.24 ບາດຕໍ່ປີ ຄວາມເຕັມໃຈທີ່ຈະຈ່າຍໃນການອານຸລັກອຸດທະຍານດ້ວຍຟື້ນຟູທີ່ 2 ເທົ່າກັບ 218,92 ບາດຕໍ່ປີແລະ ມີມູນຄ່າທາງເສດຖະສາດເທົ່າກັບ 40,008,883.96 ບາດຕໍ່ປີ.

ຂັດຕິພອນ ແລະ ຄະນະ (2008). ໄດ້ສຶກສາໃນການປະເມີນມູນຄ່າທາງເສດຖະກິດຂອງບຶງທາດຫຼວງ ແລະ ຜົນການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນເຊິ່ງກໍລະນີສຶກສາແມ່ນ 15 ໝູ່ບ້ານທີ່ຢູ່ອ້ອມບຶງທາດຫຼວງ, ນະຄອນຫຼວງວຽງຈັນ, ໂດຍມີ 3 ຈຸດປະສົງໃຫຍ່ ໃນການສຶກສາກ່ຽວກັບການຄາດປະມານມູນຄ່າທາງດ້ານເສດຖະກິດຂອງບຶງທາດຫຼວງ , ການທຳມາຫາກິນຂອງປະຊາຊົນ ແລະ ຜົນປະໂຫຍດຂອງບຶງທາດຫຼວງທີ່ມີຕໍ່ການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ.

ຜົນການສຳຫຼວດ ແລະ ວິເຄາະຕົວຈິງແມ່ນສາມາດສະຫຼຸບໄດ້ຄື : ບຶງທາດຫຼວງເປັນບຶງທີ່ໃຫຍ່ອັນໄດ້ສ້າງຄຸນປະໂຫຍດຫຼວງຫຼາຍໃຫ້ແກ່ປະຊາຊົນເປັນຕົ້ນແມ່ນ ການຜະລິດເຂົ້າ , ການຫາປາ, ການຈັບສັດນ້ຳ , ການເກັບຜັກ , ເຊິ່ງສິ່ງດັ່ງກ່າວສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນເຊິ່ງມູນຄ່າລວມທາງກົງຕໍ່ກັບປະຊາຊົນແມ່ນ 1,180.68 ໂດລາຕໍ່ປີ. ນອກນັ້ນມັນຍັງສ້າງຜົນປະ

ໂຫຍດທາງອ້ອມອີກຄື: ເປັນບ່ອນປ້ອງກັນໄພນ້ຳຖ້ວມໃຫ້ແກ່ປະຊາຊົນ , ຊ່ວຍໃນການບຳບັດນ້ຳເສຍ. ລວມມູນຄ່າທາງອ້ອມຂອງບຶງທາດຫຼວງແມ່ນ 2,912,088 ໂດລາຕໍ່ປີ. ລາຍໄດ້ຈາກການນຳໃຊ້ບຶງທາດຫຼວງແມ່ນຈະຊ່ວຍໃຫ້ປະຊາຊົນໃນແຖບນັ້ນສາມາດຫຼຸດ ຜ່ອນຄວາມທຸກຈົນໄດ້. ຖ້າຫາກບໍ່ມີບຶງທາດຫຼວງໃຫ້ໄດ້ເຂົາເຈົ້າໄດ້ເພິ່ງພາອາໃສແມ່ນເຂົາເຈົ້າຈະສູນເສຍລາຍໄດ້ຈາກກິດຈະກຳເຫຼົ່ານັ້ນໄປເຊິ່ງຫາກຄິດເປັນມູນຄ່າແມ່ນເທົ່າກັບ 1,931,212.57 ໂດລາ ລາຍໄດ້ດັ່ງກ່າວສະເລ່ຍເທົ່າ 233 ໂດລາຕໍ່ຄົນຕໍ່ປີ ແລະ ກວມເອົາ 85 % ຂອງລາຍໄດ້ທັງໝົດຂອງພວກເຂົາ. ດັ່ງນັ້ນ ຈຶ່ງເຫັນໄດ້ວ່າ: ບຶງທາດຫຼວງແມ່ນມີຄວາມສຳຄັນຫຼາຍເຊິ່ງມັນເປັນບ່ອນທີ່ປະຊາຊົນໃຊ້ເປັນບ່ອນທຳມາຫາກິນ ແລະ ເປັນສະ ຖານທີ່ສ້າງລາຍໄດ້ໃຫ້ແກ່ປະຊາຊົນອີກດວ້ຍ.

ໄຊຍະເດດ ເພັດຈຳປາ ແລະ ຄະນະ (2007) “ສຶກສາມູນຄ່າທາງດ້ານເສດຖະກິດຂອງບຶງທາດຫຼວງ ແລະ ຜົນຂອງການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ ” ຈຸດປະສົງເພື່ອສຶກສາການຄາດປະເມີນມູນຄ່າ ທາງເສດຖະກິດຂອງບຶງທາດຫຼວງ , ສຶກສາການເພິງພາອາໄສບຶງທາດຫຼວງໃນການທຳມາຫາກິນຂອງປະຊາຊົນ ແລະ ສຶກສາຜົນປະໂຫຍກຂອງບຶງທາດຫຼວງ ທີ່ມີຕໍ່ກັບການຫຼຸດຜ່ອນຄວາມທຸກຈົນຂຶງປະຊາຊົນ ດ້ວຍການນຳໃຊ້ວິທີການສຶກສາຕາມລະດັບລາຄາຕະຫຼາດ ເພື່ອຕີມູນຄ່າທາງເສດຖະກິດຂອງບຶງທາດຫຼວງ ແລະ ມູນຄ່າຕ່າງໆຈາກກິດຈະກຳທີ່ກໍ່ໃຫ້ເກີດລາຍໄດ້. ຈາກນັ້ນ, ຄິດໄລ່ອອກມາເປັນເປີເຊັນຂອງລາຍໄດ້ຈາກກິດຈະກຳຕ່າງເພື່ອສຶກສາເຖິງການເພິ່ງພາອາໄສ ແລະວາງສົມມຸດຖານວ່າ: ຖາບໍ່ມີບຶງແລ້ວຈະເກີດຫຍັງຂຶ້ນ ແລະ ມີຜົນຕໍ່ການຫຼຸດຜ່ອນຄວາມທຸກຈົນແນວໃດ ຜົນໄດ້ຮັບຈາການສຶກສາພົບວ່າ: ບຶງທາດຫຼວງສາມາດສ້າງຜົນປະໂຫຍກຢ່າງໃຫຍ່ຫຼວງຫຼາຍໃຫ້ແກ່ປະຊາຊົນເປັນຕົ້ນແມ່ນຜົນປະໂຫຍກທາງກົງຄືການສ້າງລາຍໄດ້ການສ້າງອາຊີບເຊັ່ນ: ການປູກເຂົ້າ ການຫາປາ, ການຈັບສັດນ້ຳ ແລະ ການເກັບຜັກ ເຊິ່ງມີມູນຄ່າທາງກົງທັງໝົດ ແມ່ນເທົ່າ 1,931,212.57 USD ຕໍ່ປີ. ນອກນັ້ນ, ຍັງມີຜົນທາງອ້ອມເຊັ່ນ: ການປ້ອງກັນອັນຕະລາຍຈາກໄພນ້ຳຖ້ວມ ແລະ ການບຳບັດນ້ຳເສຍ ມີມູນຄ່າເທົ່າ 2,842,000 USD ຕໍ່ປີ. ເຊິ່ງຖ້າເຂົາເຈົ້າບໍ່ມີບຶງໃຫ້ເພິ່ງພາ ເຂົາເຈົ້າແມ່ນຕ້ອງໄດ້ສູນເສຍລາຍໄດ້ແມ່ນ: 1,931,212.57 USD ເຊິ່ງໃນນັ້ນ ລາຍໄດ້ສະເລ່ຍເທົ່າກັບ 233 USD ຕໍ່ຄົນຕໍ່ປີ.

ນັນທະວັນ ປຣະພາມນະທົບ (2000) ສຶກສາວິທີສົມມຸດເຫດການໃຫ້ແກ່ການປະເມີນມູນຄ່າຄວາມພໍໃຈຈ່າຍເພື່ອອະນຸລັກຊັບພະຍາກອນການປະມົງໃນພື້ນທີ່ຊຸ່ມນ້ຳບຶງລະຫານ , ແຂວງໄຊຍະພູມ ” ຈຸດປະສົງການສຶກສາແມ່ນ ສຶກສາເຖິງສະພາບການນຳໃຊ້ບຶງລະຫານຂອງປະຊາຊົນທ້ອງຖິ່ນ, ສຶກສາມູນຄ່າທາງເສດຖະສາດຂອງພື້ນທີ່ນ້ຳບຶງລະຫານ ແຂວງໄຊຍະພູມ ແລະ ປັດໃຈທີ່ກຳນົດຄວາມພໍໃຈຈ່າຍໃນການອະນຸລັກພື້ນທີ່ຊຸ່ມນ້ຳບຶງລະຫານ ໂດຍໃຊ້ແບບ

ສອບຖາມ ແບບວິທີສອງທາງເລືອກທີ່ແຕກຕ່າງກັນວ່າ: ທ່ານ ແລະ ຄອບຄົວພໍໃຈທີຈະຈ່າຍເ ງິນເພື່ອການອະນຸລັກຊັບພະຍາກອນການປະມົງ (ປາ ແລະ ສັດນ້ຳ) ໃນບຶງລະຫານ ຫຼື ບໍ່ ? ຈາກຄົວເຮືອນຕົວຢ່າງ 300 ຄອບຄົວ ໃນຈຳນວນ 20 ບ້ານ. ຜົນການສຶກສາພົບວ່າ: 38.3% ຂອງຂໍ້ມູນຕົວຢ່າງເປັນຄົວເຮືອນທີປະກອບອາຊີບປະມົງ , ລາຍໄດ້ກວ່າ 50% ມາຈາກການຫາປາ ແລະ ສັດນ້ຳໃນບຶງບະຫານ , ຄ່າສະເລ່ຍ ແລະ ຄ່າກາງຂອງຈຳນວນຄອບຄົວພໍໃຈຈ່າຍແມ່ນ 417.16 ແລະ 259.04 ບາດ/ຄອບຄົວ/ປີ ຕາມລຳດັບ ມູນຄ່າລວມທັງໝົດໃນຄອບຄົວໃນພື້ນທີສຶກສາ 4,035 ຄອບຄົວ ພໍໃຈຈ່າຍເພື່ອອະນຸລັກການປະມົງເທົ່າ 1,683,240.60 ບາດ/ປີ ທຽບເທົ່າມູນຄ່າຜົນປະໂຫຍກທີໄດ້ຮັບຈາກການຫາປາແມ່ນ 20,349.20 ບາດ/ຄອບຄົວ/ປີ. ປັດໃຈທີສຳຄັນໃນການມູນຄ່າຄວາມພໍໃຈທີຈະຈ່າຍເພື່ອການອະນຸລັກຊັບພະຍາກອນການປະມົງແມ່ນທີຕັ້ງຂອງຄົວເຮືອນຄວາມສຳ ຄັນຂອງຊັບພະຍາກອນການປະມົງໃນບຶງລະຫານຕໍ່ຄົວເຮືອນ ແລະ ຂໍ້ມູນຂ່າວສານກ່ຽວກັບການອານຸລັກປາ ແລະ ສັດນ້ຳ.

ທັງ 4 ຜົນງານວິໄຈຂ້າງເທິງນັ້ນແມ່ນລ້ວນແຕ່ສຶກສາການປະເມີນມູນຄ່າທາງເສດຖະກິດ , ມູນຄ່າທາງດ້ານສິ່ງແວດລ້ອມແຕ່ລະຫົວຂໍ້ໄດ້ສະແດງໃຫ້ຮູ້ເຖິງມູນຄ່າແທ້ຈິງທາງເສດຖະສາດຂໍ້ມູນທີ່ນຳມາໃຊ້ໃນການວິເຄາະກໍ່ມີການເລືອກພື້ນທີ່ຢ່າງຊັດເຈນໃນການເລືອກກຸ່ມຕົວຢ່າງໃນການສຶກສາເພື່ອໃຫ້ເຂົ້າເຖິງແຫຼ່ງຂໍ້ມູນ ຫຼື ພື້ນທີ່ທີ່ເຮົາສຶກສາຮັບຮູ້ໄດ້ເຖິງ ຂໍ້ມູນ ແລະ ສະພາບຄວາມຈິງຢ່າງຖືກຕ້ອງ, ຊັດເຈນ ແລະ ແນ່ນອນ.

ບົດທີ່ກຳລັງສຶກສາຢູ່ແມ່ນໄດ້ສຶກສາເຖິງມູນຄ່າທີ່ເກີດຈາກການນຳໃຊ້ທີ່ດິນຂອງປະຊາ ຊົນພາຍໃນ ບ້ານດະເຊັຍນ້ອຍ , ບ້ານດະເຊັຍໂພນຫີນ , ເມືອງເລົ່າງາມ ແຂວງສາລະວັນ ໃນວຽກງານການກະສິກຳຂອງປະຊາຊົນໃນປີ 2009-2010 ທີ່ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນ , ໂດຍການນຳໃຊ້ທິດສະດີທາງເສດຖະສາດເຂົ້າຊວ່ຍໃນການປະເມີນມູນຄ່າຂອງທີ່ດິນໂດຍອີງໃສ່ລາຄາຂອງຜົນຜະລິດເຊັ່ນ : ລາຄາຂອງໝາກກ້ວຍ , ລາຄາຂອງກາເຟ , ລາຄາຂອງໝາກແໜ່ງ ແລະ ລາຄາອື່ນໆ. ທີ່ເກີດຈາກການນຳໃຊ້ທີ່ດິນດັ່ງກ່າວໂດຍອີງໃສ່ລາຄາຂອງຕະຫຼາດທີ່ຮັບຊື້ລວມທັງລາຄາໃນການໃຫ້ເຊົ່າ ແລະ ລາຄາໃນການຂາຍທີ່ດິນຂອງປະຊາຊົນ ໂດຍນຳໃຊ້ໂປຣແກຣມ SPSS, Microsoft Excel ເຂົ້າຊ່ວຍໃນການວິເຄາະຂໍ້ມູນ ເຊິ່ງຈະໄດ້ນຳໃຊ້ວິທີ່ການສຶກສາແບບພັນລະນາເພື່ອອະທິບາຍຜົນໄດ້ຮັບຂອງຂໍ້ມູນ.

ສຳລັບບົດທີ່ກຳລັງສຶກສາຢູ່ກັບທັງ 4 ຜົນງານວິໄຈຂ້າງເທິງນັ້ນ , ກໍ່ຍັງແມ່ນມີຮູບແບບໃນການສຶກສາ ແລະ ວິເຄາະຂໍ້ມູນທີ່ແຕກຕ່າງກັນເຊິ່ງຂຶ້ນກັບແຕ່ລະຫົວຂໍ້ສຶກສາ ຂອງບົດນັ້ນໆ ແຕ່ກໍ່ຢູ່ບົນພື້ນຖານການນຳໃຊ້ທິດສະດີທາງເສດຖະສາດ ເຂົ້າຊວ່ຍໃນການວິເຄາະຂອງຂໍ້ມູນເຊັ່ນ : ຂັດຕິພອນ ພ້ອມຄະນະ (2008) ໄດ້ສຶກສາໃນ “ການປະເມີນມູນຄ່າທາງເສດຖະກິດຂອງບຶງທາດຫຼວງ ແລະ ຜົນການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ”, ເຊິ່ງກໍລະນີສຶກສາແມ່ນ 15 ໝູ່

ບ້ານ 3 ຕົວເມືອງ ທີ່ຢູ່ອ້ອມບຶງທາດຫຼວງ ໂດຍນຳໃຊ້ໂປຣແກຣມ Microsoft Excel ເຂົ້າຊ່ວຍໃນການວິເຄາະຂໍ້ມູນ. ບົດຂອງ ສີຣາກອນ ພ້ອມຄະນະ (2005) "ໄດ້ສຶກສາການປະເມີນມູນຄ່າສິ່ງແວດລ້ອມໃນການອານຸລັກອຸດທະຍານແຫ່ງຊາດລຳນ້ຳກົກ" ໂດຍໄດ້ເກັບຈາກຂໍ້ມູນຈາກກຸ່ມຕົວຢ່າງນັກທ່ອງທ່ຽວຄົນໄທມາທ່ຽວອຸດທະຍານແຫ່ງຊາດລຳນ້ຳກົກ. ຈຳນວນຕົວຢ່າງ 400 ຕົວຢ່າງ ແລະ ວິເຄາະຂໍ້ມູນດ້ວຍແບບຈຳລອງ Tobit ໂດຍນັກວິທີການວິເຄາະການປະມານພາວະຄວາມໜາຈະເປັນໄປໄດ້ສູງສຸດ (Maximum Like lihood Estimate MEL), ບົດຂອງ ໄຊຍະເດດ ເພັດຈຳປາ ແລະ ຄະນະ (2007) "ສຶກສາມູນຄ່າທາງດ້ານເສດຖະກິດຂອງບຶງທາດຫຼວງ ແລະ ຜົນຂອງການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ" ດ້ວຍການນຳໃຊ້ວິທີການສຶກສາຕາມລະດັບລາຄາຕະຫຼາດເພື່ອຕີມູນຄ່າທາງເສດຖະກິດຂອງບຶງທາດຫຼວງ ແລະ ມູນຄ່າຕ່າງໆຈາກກິດຈະກຳທີ່ກໍ່ໃຫ້ເກີດລາຍໄດ້. ຈາກນັ້ນ, ຄິດໄລ່ອອກມາເປັນເປີເຊັນຂອງລາຍໄດ້ຈາກກິດຈະກຳຕ່າງໆເພື່ອສຶກສາເຖິງການເພິ່ງພາອາໄສ ແລະວາງສົມມຸດຖານວ່າ: ຖາບໍ່ມີບຶງແລ້ວຈະເກີດຫຍັງຂຶ້ນ ແລະ ມີຜົນຕໍ່ການຫຼຸດຜ່ອນຄວາມທຸກຈົນແນວໃດ. ແລະ ນັນທະວັນ ປຣະພາມນະທົນ (2000) ''ສຶກສາວິທີສົມມຸດເຫດການໃຫ້ແກ່ການປະເມີນມູນຄ່າຄວາມພໍໃຈຈ່າຍເພື່ອອະນຸລັກຊັບພະຍາກອນການປະມົງໃນພື້ນທີ່ຊຸ່ມນ້ຳບຶງລະຫານ, ແຂວງໄຊຍະພູມ'' ໂດຍໃຊ້ແບບສອບຖາມ ແບບວິທີສອງທາງເລືອກທີ່ແຕກຕ່າງກັນວ່າ : ທ່ານ ແລະ ຄອບຄົວພໍໃຈທີຈະຈ່າຍເງິນເພື່ອການອະນຸລັກຊັບພະຍາກອນການປະມົງ (ປາ ແລະ ສັດນ້ຳ) ໃນບຶງລະຫານ ຫຼື ບໍ່ ? ຈາກຄົວເຮືອນຕົວຢ່າງ 300 ຄອບຄົວ ໃນຈຳນວນ 20 ບ້ານາດດັ່ງນັ້ນຈຶ່ງມີຈຸດປະສົງທີ່ຄ້າຍຄືກັນ.

# ບົດທີ 3
# ວິທີການສຶກສາຄົ້ນຄ້ວາ

## 3.1 ວິທີການສຶກສາ

ໃນການສຶກສາຄັ້ງນີ້ ແມ່ນໄດ້ສຶກສາໃນຮູບແບບພັນລະນາເຂົ້າໃນການອະທິບາຍເຊັ່ນ:

- ຮູບແບບພັນລະນາ: ແມ່ນຂໍ້ມູນທີ່ໄດ້ຈາກການສຳພາດຕົວຈິງຂອງບ້ານ ແລະ ປະຊາ ຊົນພາຍໃນບ້ານດະເຊັຍນ້ອຍ, ບ້ານດະເຊັຍໂພນຫີນ, ເຖິງສະພາບທົ່ວໄປຂອງບ້ານ ແລະ ສະພາບການນຳໃຊ້ທີ່ດິນຂອງປະຊາຊົນເຂົ້າໃນວຽກງານກະສິກຳໂດຍການໃຊ້ແບບສອບຖາມໃນການສຳພາດຕົວຈິງຈາກປະຊາຊົນ , ໃນການສອບຖາມແມ່ນຈະໄດ້ສ້າງແບບສອບຖາມຂຶ້ນມາເພື່ອສຳພາດຕົວຈິງກັບປະຊາຊົນ , ນອກນັ້ນຍັງໄດ້ສ້າງແບບສອບຖາມເພື່ອສອບຖາມຂໍ້ມູນນຳນາຍບ້ານ, ຄະນະບ້ານເຊິ່ງໄດ້ເກັບຂໍ້ມູນນຳປະຊາຊົນທີ່ໄດ້ຮັບຜົນຜະລິດຈາກການນຳໃຊ້ທີ່ດິນ ໃນປີ 2009-2010 ທີ່ຖືອາຊີບການເຮັດການກະສິກຳເປັນຕົ້ນຕໍເພື່ອນຳໃຊ້ເຂົ້າໃນການອະທິບາຍໃຫ້ຖືກກັບຄວາມເປັນຈິງທີ່ສຸດ.

## 3.2 ການເກັບກຳຂໍ້ມູນ

### 3.2.1 ຂໍ້ມູນພາກຫ້ອງການ

ໃນການສຶກສາຄົ້ນຄວ້າຂໍ້ມູນພາກຫ້ອງການແມ່ນຈະໄດ້ລວບລວມຜົນຂອງການສຶກສາຂອງນັກຄົ້ນຄວ້າທີ່ຄົ້ນຄວ້າກ່ຽວກັບການ ການປະເມີນມູນຄ່າຕ່າງໆ , ຕາມບົດຈົບຊັ້ນລຸ້ນກ່ອນ ແລະ ຕາມເອກະສານ, ວາລະສານ, ບົດບັນທຶກ, ບົດລາຍງານຕ່າງໆທີ່ມີຢູ່ແລ້ວນຳບັນດາພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງການຄຸ້ມຄອງທີ່ດິນແຫ່ງ ຊາດ, ສູນຄົ້ນຄວ້າຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ , ໂຄງການເຄືອຂາຍຂໍ້ມູນທີ່ດິນ ແລະ ຊັບພະຍາ ກອນທຳມະຊາດ ແລະ ອື່ນໆ ລວມທັງຂໍ້ມູນການນຳໃຊ້ທີ່ດິນຕ່າງໆ.

### 3.2.2 ຂໍ້ມູນພາກສະໜາມ

ລົງພາກສະໜາມເພື່ອເກັບກຳຂໍ້ມູນຕົວຈິງ ເຊິ່ງໄດ້ມີການປຶກສາຫາລືກັບອົງການຄຸ້ມຄອງທີ່ດິນປະຈຳ ແຂວງສາລະວັນ ແລະ ຫ້ອງການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນນ້ຳ ເມືອງເລົ່າງາມ, ລົງເກັບກຳຂໍ້ມູນທີ່ບ້ານດະເຊັຍນ້ອຍ , ບ້ານດະເຊັຍໂພນຫີນ , ໂດຍໄດ້ແຈ້ງຈຸດປະສົງໃນການເກັບກຳຂໍ້ມູນໃຫ້ແກ່ອຳນາດການປົກຄອງຂອງແຕ່ລະບ້ານໃຫ້ຈະແຈ້ງສາ ກ່ອນ, ໃນການເກັບກຳຂໍ້ມູນຕົວຈິງໄດ້ເກັບກຳກ່ຽວກັບການນຳໃຊ້ທີ່ດິນຂອງປະຊາຊົນເຂົ້າໃນວຽກງານເຮັດກະສິກຳໂດຍສອບຖາມຂໍ້ມູນຈາກອຳນາດປົກຄອງຂອງແຕ່ລະບ້ານ ແລະ ປະ ຊາຊົນເຊິ່ງການ

ລົງພາກສະໜາມຄັ້ງນີ້ແມ່ນໄດ້ເກັບກຳຂໍ້ມູນໂດຍວິທີການສຳພາດທີ່ເປັນລັກ ສະນະໂອ້ລົມກັບປະຊາຊົນ, ສົນທະນາຫາລືກ່ຽວກັບວຽກງານດັ່ງກ່າວໂດຍອີງໃສ່ຮ່າງແບບ ຟອມສອບຖາມທີ່ໄດ້ກະກຽມໄວ້ນັ້ນ ຫຼື ອາດເປັນຮູບແບບສອບຖາມ ໃນລັກສະນະທີ່ເປັນປະ ເດັນສຳຄັນ ແລະ ກ່ຽວຂ້ອງໃນເວລາສົນທະນາ.

### 3.2.3 ການສຳພາດລະດັບບ້ານ

ໃນການລົງເກັບກຳຂໍ້ມູນຂັ້ນບ້ານນີ້ແມ່ນໄດ້ໃຊ້ແບບຟອມສຳພາດສຳລັບຂັ້ນບ້ານ ເຊິ່ງໄດ້ສົນທະນາ ແລະ ໂອລົມກັບບຸກຄົນສຳຄັນພາຍໃນບ້ານ

1) ນາຍບ້ານແມ່ນຈະສຳພາດເອົາຂໍ້ມູນດ້ານປະຊາກອນທັງໝົດບ້ານ ແລະ ສະ ພາບການດຳລົງຊີວິດຂອງປະຊາຊົນ , ເສດຖະກິດ-ສັງຄົມ, ເນື້ອທີ່ທັງໝົດຂອງບ້ານ ,ລາຍຮັບລວມຂອງບ້ານ, ຜົນຜະລິດລວມດ້ານກະສິກຳ ແລະ ອື່ນໆ.

2) ເຖົ້າແກ່ແນວໂຮມບ້ານແມ່ນສຳພາດເອົາຂໍ້ມູນບ້ານເປັນຕົ້ນແມ່ນປະຫວັດຄວາມເປັນມາຂອງບ້ານ.

### 3.2.4 ການສຳພາດລະດັບຄອບຄົວ

ຫຼັງຈາກທີ່ໄດ້ເກັບກຳຂໍ້ມູນຂັ້ນບ້ານແລ້ວໄດ້ລົງສຳພາດຂັ້ນຄອບຄົວຢູ່ບ້ານດັ່ງກ່າວ ເຊິ່ງໃນການສຳພາດນີ້ແມ່ນ ອີງໃສ່ແບບຟອມສຳພາດຂອງຄອບຄົວ ເຊິ່ງຈະສຸ່ມເອົາຕົວຢ່າງ ຢູ່ ໃນລະຫວ່າງ 30%-60% ຂອງປະຊາຊົນພາຍໃນບ້ານ.

## 3.3 ປະຊາກອນ ແລະ ຕົວຢ່າງ

ປະຊາກອນ: ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນປະຊາຊົນໃນບ້ານທັງ 2 ຄື: ບ້ານດະເຊັຍນ້ອຍ, ດະເຊັຍໂພທີນ ເມືອງເລົ່າງາມ ແຂວງສາລະວັນ.

ຕົວຢ່າງ: ການກຳນົດຂະໜາດຂອງກຸ່ມຕົວຢ່າງແມ່ນການເລືອກເອົາກຸ່ມປະຊາກອນທີ່ຢູ່ໃນບ້ານດະເຊັຍນ້ອຍ, ດະເຊຍໂພນທີນ ໂດຍໃຊ້ວິທີຄຳນວນຂອງທ່ານ ທາໂຣຍາມາເນະ ເຊິ່ງມີສູດຄຳນວນດັ່ງນີ້:

$$n = \frac{N}{1 + Ne^2}$$

n: ຂະໜາດຂອງຕົວຢ່າງ

N: ຂະໜາດຂອງປະຊາຊົນ

e: ຄວາມຄາດເຄື່ອນຂອງການສຸ່ມຕົວຢ່າງ 5%

- ບ້ານດະເຊັຍນ້ອຍ ມີພົນລະເມືອງທັງຫມົດ 1,682 ຄົນ, 291 ຄົວເຮືອນ.

$$n = \frac{291}{1 + 291(0.05)^2} = 168$$

- *ບ້ານດະເຊັຍໂພນຫີນ ມີພົນລະເມືອງທັງຫມົດ* 2,325*ຄົນ*, 564 *ຄົວເຮືອນ*.

$$n = \frac{564}{1 + 564(0.05)^2} = 234$$

ຜ່ານການຄິດໄລ່ຈຳນວນຕົວຢ່າງເຫັນວ່າຜົນການຄິດໄລ່ຂອງຂະໜາດທີ່ຕ້ອງການທີ່ໄດ້ຈາກບ້ານດະເຊັຍນ້ອຍ 168 ຄົວເຮືອນຈາກຕົວຢ່າງທັງໝົດ 291 ຄົວເຮືອນ ແລະ ບ້ານດະເຊັຍໂພນຫີນ 234 ຄົວເຮືອນຈາກຕົວຢ່າງທັງໝົດ 564 ຄົວເຮືອນ ສະນັ້ນເຮົາສາມາດສະຫລຸບໄດ້ຕົວຢ່າງທັງຫມົດແມ່ນ 402 ຄົວເຮືອນ ດັ່ງນັ້ນພວກຂ້າພະເຈົ້າຈຶ່ງໄດ້ອີງຕາມຈຳນວນຜົນການຄິດໄລ່ເພື່ອເປັນຕົວແທນຂອງກຸ່ມຕົວຢ່າງເປົ້າໝາຍໃນການສຶກສາຄັ້ງນີ້.

## 3.4 ວິທີການວິເຄາະຂໍ້ມູນ

ຫລັງຈາກທີ່ເກັບກຳຂໍ້ມູນຕ່າງໆສຳເລັດແລ້ວ ແມ່ນຈະໄດ້ເອົາມາລວບລວມເນື້ອໃນເຊິ່ງໄດ້ວິເຄາະດ້ານຂໍ້ມູນດ້ານຄຸນນະພາບ ແລະ ຂໍ້ມູນດ້ານປະລິມານ (ເປັນຕົວເລກ) ເຊິ່ງໄດ້ນຳມາອ້າງອີງໃນການຂຽນບົດຈົບຊັ້ນ ແລະ ມາຄິດໄລ່ເປັນລາຍໄດ້ຂອງປະຊາຊົນທີ່ໄດ້ມີການນຳໃຊ້ທີ່ດິນໃນການດຳລົງຊີວິດ ຂອງປະຊາຊົນທີ່ອາໄສຢູ່ ທັງ 2 ບ້ານໂດຍການນຳໃຊ້ໂປຣແກຣມ SPSS V 19 ແລະ Microsoft Excel ເຂົ້າຊ່ວຍໃນການວິເຄາະຄິດໄລ່ຂໍ້ມູນທີ່ເປັນຕົວເລກທີ່ເກັບກຳມາໄດ້ເຊິ່ງຈະອະທິບາຍຜົນຂອງການຄິດໄລ່ໂດຍໃຊ້ຕາຕະລາງ.

ຮູບທີ 2: ແຜນວາດຂັ້ນຕອນການລົງຄົ້ນຄວ້າພາກສະໜາມ



# ບົດທີ 4
# ຜົນການສຶກສາ

## 4.1 ສະພາບໂດຍທົ່ວໄປ

### 4.1.1 ສະພາບໂດຍລວມຂອງບ້ານດະເຊັຍນ້ອຍ

ບ້ານດະເຊັຍນ້ອຍໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1907 ໃນເວລານັ້ນມີພຽງ 3 ຄອບ ຄົວໄດ້ພາກັນຍ້າຍມາຕັ້ງຖິ່ນຖານຢູ່ຮ່ວມກັນມີຈຳນວນ 15 ຄົນໂດຍແມ່ນ ຄອບຄົວທ້າວ ຊຽງ ຜີວ, ຄອບຄົວທ້າວ ມະຫາລາດ ແລະ ຄອບຄົວທ້າວ ລະເນີ ໄດ້ພາກັນຍ້າຍອອກມາຈາກບ້ານດະເຊັຍໃຫຍ່ເພື່ອອອກມາຫາເຮັດຮົ້ວ , ເຮັດສວນ ເພາະວ່າເຂດນີ້ອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດທີ່ສວຍສົດງົດງາມເຊັ່ນ : ປ່າໄມ້ຕຶບໜາ , ດິນດອນຕອນຫຍ້າກວ້າງຂວາງ, ມີສັດສາວາສິ່ງຫຼາຍຊະນິດຈຶ່ງໄດ້ພາກັນມາຕັ້ງຖິ່ນຖານຢູ່ເທົ່າທຸກມື້ນີ້ ເຊິ່ງຫ່າງຈາກຕົວເມືອງໄປທາງທິດຕາເວັນອອກ 17 Km ບ້ານດະເຊັຍນ້ອຍມີຂອບເຂດຊາຍແດນຕິດກັບຊາຍແດນບ້ານຕ່າງໆດັ່ງນີ້: ທິດເໜືອ ຕິດກັບ ບ້ານດະເຊັຍໂພນຫີນ, ທິດໃຕ້ ຕິດກັບບ້ານພໍ່ເຂັມ-ບ້ານໜອງຕົນ, ທິດຕາເວັນອອກ ຕິດກັບ ບ້ານທົ່ງສຸຍ, ທິດຕາເວັນຕົກ ຕິດກັບບ້ານຂະຫຍອງແຂກ ແລະ ບ້ານມ່ວງຊຸມ, ສູງຈາກລະດັບໜ້ານ້ຳທະເລ 600-800 m, ເຊິ່ງຕັ້ງຢູ່ດິນສ່ວນໜຶ່ງຂອງພູພຽງບໍລິເວນ ມີເສັ້ນທາງຄົມມະນາຄົມເຂົ້າໄປເຖິງແຕ່ກໍ່ມີຄວາມຫຍຸ້ງ ຍາກລຳບາກເພາະວ່າເປັນເສັ້ນທາງດິນແດງ ແລະ ກໍ່ເປເພ, ແຕ່ກໍ່ມີຄວາມສະດວກທາງດ້ານໂທລະຄົມ , ໄຟຟ້າ ແລະ ນ້ຳສະອາດ ບ້ານດະເຊັຍນ້ອຍມີເນື້ອທີ່ທັງໝົດ 609 ເຮັກຕາ. ປະຈຸບັນບ້ານດະເຊັຍນ້ອຍມີ 291 ຫຼັງຄາເຮືອນ, ມີ 314 ຄອບຄົວ, ມີພົນລະເມືອງທັງໝົດ 1,682 ຄົນ, ເຊິ່ງໃນນັ້ນເປັນຍິງ 840 ຄົນ, ມີໂຮງຮຽນປະຖົມສົມບູນ 1 ຫຼັງ ແລະ ວັດ 1 ແຫ່ງ, ປະຊາຊົນພາຍໃນບ້ານແມ່ນນັບຖືສາດສະໜາພຸດ 100% ເຊິ່ງໃນນັ້ນມີຢູ່ 2 ເຜົ່າຊົນຄື: ຊົນເຜົ່າສ່ວຍ ເຊິ່ງກວມເອົາ 70%, ຊົນເຜົ່າລາວລຸ່ມກວມເອົາ 30% ຂອງປະຊາຊົນທັງໝົດ ປະຊາຊົນພາຍໃນບ້ານສ່ວນໃຫຍ່ຍຶດຖືເອົາອາຊີບປູກກາເຟເປັນອາຊີບຫຼັກ, ເອົາການປູກພືດປະສົມປະສານເປັນຕົ້ນແມ່ນ: ເຂົ້າ, ກ້ວຍ, ໝາກແໜ່ງ ແລະ ຖົ່ວດິນເປັນອາຊີບສຳ ຮອງ ການປະກອບອາຊີບດັ່ງກ່າວໄດ້ເຮັດໃຫ້ຫຼາຍຄອບຄົວມີຢູ່ມີກິນເຊິ່ງມັນສະແດງອອກມີຄອບຄົວເຫຼືອກິນ 5%, ຄອບຄົວກຸ້ມກິນ 85,31% ແລະ ຄອບຄົວທຸກຍາກ 9,69%, ດ້ານການຜະລິດ ພາຍໃນບ້ານມີ ເນື້ອທີ່ປູກກາເຟ 225 ເຮັກຕາ, ເຊິ່ງສາມາດເກັບຜົນຜະລິດທີ່ໄດ້ປະມານ 180 ໂຕນ/ປີ, ເນື້ອທີ່ໄຮ່ເຂົ້າ 106 ເຮັກຕາ, ຜົນຜະລິດທີ່ໄດ້ 64ໂຕນ/ປີ, ເນື້ອທີ່ປູກໝາກແໜ່ງ 30 ເຮັກຕາ, ຜົນຜະລິດທີ່ໄດ້ 6 ໂຕນ/ປີ, ເນື້ອທີ່ປູກຖົ່ວດິນ 72 ເຮັກຕາ, ຜົນຜະລິດທີ່ໄດ້ 228 ໂຕນ/ປີ, ເນື້ອທີ່ປູກກ້ວຍ 40 ເຮັກຕາ, ຜົນຜະລິດທີ່ໄດ້ 266,680 ເຄືອ/ປີ, ເນື້ອທີ່ປູກສາລີ 8 ເຮັກຕາ, ຜົນຜະລິດໄດ້ 40

ໂຕນ/ປີ, ເນື້ອທີ່ປູກຜັກຊະນິດຕ່າງໆ 8 ເຮັກຕາ, ຜົນຜະລິດທີ່ໄດ້ 40 ໂຕນ/ປີ, ເນື້ອທີ່ປູກຢາສູບ 1 ເຮັກຕາ, ຜົນຜະລິດໄດ້ 1 ໂຕນ/ປີ, ເນື້ອທີ່ປູກມັນແກວ 43 ເຮັກຕາ, ຜົນຜະລິດໄດ້ 100 ໂຕນ/ປີ.

### 4.1.2 ສະພາບໂດຍລວມຂອງບ້ານດະເຊັຍໂພນທີນ

ບ້ານດະເຊັຍໂພນທີນສ້າງຕັ້ງມາແຕ່ປີ ພ.ສ 1500 ເຊິ່ງແມ່ນ: ທ້າວ ມູມ, ທ້າວ ນ້ອຍ, ທ້າວ ຫຼ້າ ພໍ່ໃຈດີ ເປັນຜູ້ສ້າງຕັ້ງ ຂຶ້ນຈຸດປະສົງເບື້ອງຕົ້ນຂອງທັງ 3 ຄົນແມ່ນເພື່ອມາຫາລ່າເນື້ອ ເມື່ອມາເຫັນດິນດອນຕອນຫຍ້າເຂດນີ້ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນ ທຳມະຊາດ ກໍ່ເລີຍພາກັນມາຕັ້ງຖິ່ນຖານຈົນເຖິງປະຈຸບັນນີ້ ຕັ້ງຢູ່ດິນສ່ວນໜຶ່ງຂອງພູພຽງບໍລິເວນ ສູງຈາກລະດັບໜ້ານ້ຳທະເລ 600-800 m, ເປັນດິນພູໄຟເກົ່າມີຄວາມຊຸ່ມຊື່ນເໝາະສົມແກ່ການປູກຝັງ ແລະ ລ້ຽງສັດ ບ້ານດະເຊັຍ ໂພນທີນ ຫ່າງຈາກຕົວເມືອງເລົ່າງາມໄປທາງໄປທາງທິດຕາເວັນອອກ 12 Km ເຊິ່ງມີຂອບເຂດຊາຍແດນ ຕິດຈອດກັບຊາຍແດນ ຂອງບ້ານຕ່າງໆຄື: ທິດເໜືອ ຕິດກັບ ບ້ານມ່ວນແຫ້, ທິດໃຕ້ ຕິດກັບ ບ້ານດະເຊັຍນ້ອຍ, ທິດຕາເວັນອອກ ຕິດກັບ ບ້ານເຈືອງ, ທິດຕາເວັນຕົກ ຕິດກັບ ບ້ານແລງຊຸມ ຫຼື ໂພນທີນ ມີເສັ້ນທາງຄົມມະນາຄົມເຂົ້າໄປເຖິງແຕ່ກໍ່ມີຄວາມຫຍຸ້ງຍາກເພາະວ່າເປັນເສັ້ນທາງດິນແດງ ແລະ ກໍ່ເປ່ເພ ແຕ່ກໍ່ມີຄວາມສະດວກສະບາຍທາງດ້ານສື່ສານ, ໄຟຟ້າ ແລະ ນ້ຳສະອາດ ມີເນື້ອທີ່ທັງໝົດ 2,963 ເຮັກຕາ, ມີສາຍນ້ຳຫ້ວຍເປົ້າໄຫຼຜ່ານ 2 ໝູ່ບ້ານຄື: ບ້ານດະເຊັຍໂພນທີນ ແລະ ບ້ານດອນດູ່ ບ້ານດະເຊັຍໃຫຍ່ປະກອບມີ 564 ຫຼັງຄາ, 611 ຄອບຄົວ, ມີພົນລະເມືອງທັງໝົດ 2,325 ຄົນ, ຍິງ 1,656 ຄົນ ປະກອບມີ 3 ເຜົ່າຊົນຄື: ເຜົ່າສ່ວຍກວມເອົາ 85%, ລາວລຸ່ມກວມເອົາ 13%, ເຜົ່າຜູ້ໄທກວມຮັກຕາເອົາ 2% ປະຊາຊົນສ່ວນໃຫຍ່ແມ່ນນັບຖືສາສະໜາພຸດ, ມີໂຮງຮຽນປະຖົມ-ມັດທະຍົມຕອນຕົ້ນສົມບູນ 1 ຫຼັງ ແລະ ວັດ 2 ແຫ່ງ, ສຸກສາລາ 1 ຫຼັງ ແລະ ຍຶດຖືເອົາອາຊີບປູກກາເຟເປັນອາຊີບຫຼັກ, ເອົາການປູກພືດປະສົມປະສານເປັນຕົ້ນແມ່ນ: ເຂົ້າ, ກ້ວຍ, ໝາກແໜ່ງ ແລະ ຖົ່ວດິນເປັນອາຊີບສຳຮອງ ການປະກອບອາຊີບດັ່ງກ່າວໄດ້ເຮັດໃຫ້ຫຼາຍຄອບຄົວມີຢູ່ມີກິນເຊິ່ງມັນສະແດງອອກມີຄອບຄົວເຫຼືອກິນ 9%, ຄອບຄົວກຸ້ມກິນ 81.83% ແລະ ຄອບຄົວທຸກຍາກ 9.17%, ດ້ານການຜະລິດ ແລະ ລ້ຽງສັດ, ເນື້ອທີ່ປູກກາເຟ 304 ເຮັກຕາ , ເນື້ອທີ່ສາມາດເກັບຜົນຜະລິດໄດ້ 204 ເຮັກຕາ, ຜົນຜະລິດທີ່ໄດ້ 76 ໂຕນ/ປີ, ເນື້ອທີ່ໄຮ່ເຂົ້າ 200 ເຮັກຕາ, ຜົນຜະລິດທີ່ໄດ້ 180 ໂຕນ/ປີ, ເນື້ອທີ່ປູກໝາກແໜ່ງ 204 ເຮັກຕາ, ຜົນຜະລິດທີ່ໄດ້ 11 ໂຕນ/ປີ, ເນື້ອທີ່ປູກຖົ່ວດິນ 45 ເຮັກຕາ , ຜົນຜະລິດທີ່ໄດ້ 50 ໂຕນ/ປີ, ປູກກ້ວຍ 88 ເຮັກຕາ, ຜົນຜະລິດທີ່ໄດ້ 264 ໂຕນ/ປີ, ເນື້ອທີ່ລ້ຽງປາ 2.5 ເຮັກຕາ, ສັດລ້ຽງພາຍໃນບ້ານມີທັງໝົດ 155 ໂຕໃນນັ້ນມີໝູ: 245 ໂຕ, ສັດປີກ 2670 ໂຕ, ແບ້ 30ໂຕ.

### 4.1.3 ຂໍ້ມູນກ່ຽວກັບເພດຂອງກຸ່ມຕົວຢ່າງ

ຕາຕະລາງທີ 4.1: ຂໍ້ມູນສະແດງກ່ຽວກັບເພດຂອງກຸ່ມຕົວຢ່າງ

| ລຳດັບ | ເພດ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ຊາຍ | 146 | 66.3 |
| 2 | ຍິງ | 74 | 33.7 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ ເດືອນ 3 ປີ 2011.

ອີງຕາມການສຳຫລວດຕົວຈິງເຫັນວ່າ: ປະຊາກອນທີ່ຖືກສຳພາດສ່ວນຫລາຍແມ່ນຜູ້ຊາຍ ເຊິ່ງກວມເອົາໃນປະລິມານຫລາຍເຖິງ 146 ຄົນ, ຄິດເປັນສ່ວນຮ້ອຍແລ້ວມີ 66.3%, ສ່ວນເພດຍິງກວມເອົາພຽງ 74 ຄົນ, ຄິດເປັນສ່ວນຮ້ອຍ 33.7%, ເນື່ອງຈາກວ່າການລົງສຳພາດນັ້ນສ່ວນຫລາຍຫົວຫນ້າຄອບຄົວຈະເປັນຜູ້ຕາງຫນ້າໃຫ້ແກ່ການສຳພາດ , ກໍລະນີທີ່ຫົວຫນ້າຄອບຄົວບໍ່ອຳນວຍ ສະນັ້ນ ຜູ້ເປັນພັນລະຍາຈິ່ງເປັນຜູ້ໃຫ້ສຳພາດແທນ.

### 4.1.4 ຂໍ້ມູນກ່ຽວກັບອາຍຸຂອງກຸ່ມຕົວຢ່າງ

ຕາຕະລາງທີ 4.2: ຂໍ້ມູນກ່ຽວກັບອາຍຸຂອງກຸ່ມຕົວຢ່າງ

| ລຳດັບ | ອາຍຸ(ປີ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ປີ) |
|---|---|---|---|---|
| 1 | ຫນ້ອຍກ່ວາ 30 | 25 | 11.4 | 46 |
| 2 | 31-50 | 123 | 56 | |
| 3 | 51-70 | 65 | 29.5 | |
| 4 | ຫລາຍກ່ວາ 71 | 7 | 3.1 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ ເດືອນ 3 ປີ 2011.

ຈາກການເກັບຂໍ້ມູນນຳປະຊາຊົນ 220 ຕົວຢ່າງເຫັນວ່າ: ປະຊາຊົນແມ່ນມີອາຍຸສະເລ່ຍປະມານ 46 ປີ, ປະຊາຊົນສ່ວນຫລາຍມີອາຍຸຢູ່ລະຫວ່າງ 31-50 ແລະ 51-70 ຍ້ອນວ່າ: ໃນເກນອາຍຸດັ່ງກ່າວເປັນຄົນທີ່ກຳລັງເຂົ້າໃນການພັດທະນາ ແລະ ເປັນໄວກາງຄົນທີ່ກຳລັງສ້າງຄອບຄົວ, ສ່ວນປະຊາຊົນທີ່ຢູ່ໃນຊ່ວງອາຍຸ 19-30 ແລະ 70 ຂຶ້ນໄປຈະກວມອັດຕາສ່ວນນ້ອຍເພາະວ່າເປັນກຸ່ມຄົນທີ່ຫາກໍ່ສ້າງຄອບຄົວໃຫມ່ ແລະ ເປັນກຸ່ມຄົນເຖົ້າແກ່.

### 4.1.5 ຂໍ້ມູນກ່ຽວກັບອາຊີບ

ປະຊາຊົນພາຍໃນບ້ານສ່ວນຫຼາຍແມ່ນມີອາຊີບເຮັດໄຮ່-ເຮັດສວນເປັນອາຊີບຫຼັກເຊິ່ງມີອັດຕາກວມເຖິງ 90% ຂອງອາຊີບທັງໝົດ ນອກຈາກນີ້ກໍ່ຍັງມີການຄ້າຂາຍ , ລ້ຽງສັດ, ກຳມະກອນຮັບຈ້າງ ທີ່ເປັນອາຊີບສຳຮອງຈາກການເຮັດໄຮ່-ເຮັດສວນ.

ຕາຕະລາງທີ 4.3 : ຂໍ້ມູນກ່ຽວກັບອາຊີບຂອງກຸ່ມຕົວຢ່າງ

| ລຳດັບ | ອາຊີບ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ກະສິກອນ(ອາຊີບຫລັກ) | 198 | 90 |
| 2 | ກຳມະກອນ | 20 | 9 |
| 3 | ຄ້າຂາຍ | 10 | 4.6 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

### 4.1.6 ຂໍ້ມູນກ່ຽວກັບສະຖານະພາບຂອງກຸ່ມຕົວຢ່າງ

ຕາຕະລາງທີ 4.4: ຂໍ້ມູນກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ

| ລຳດັບ | ສະຖານະພາບ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ໂສດ | 2 | 1 |
| 2 | ແຕ່ງງານ | 194 | 88 |
| 3 | ຢ່າຮ້າງ | 24 | 11 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການລົງເກັບກຳຂໍ້ມູນເຫັນວ່າ : ສ່ວນຫລາຍຜູ້ໃຫ້ສຳພາດແມ່ນຫົວຫນ້າຄອບຄົວເຊິ່ງມີສະຖານະພາບເປັນຜູ້ທີ່ແຕ່ງງານແລ້ວເຊິ່ງກວມເອົາເຖິງ 88% ແຕ່ໃນນັ້ນກໍ່ມີຜູ້ສຳພາດທີ່ຜ່ານການຢ່າຮ້າງເຊິ່ງກວມເອົາ 11%, ນອກຈາກນັ້ນຍັງມີບາງຄົນທີ່ລົງເຮືອນສ້າງຄອບຄົວໂດຍທີ່ບໍ່ໄດແຕ່ງງານແຕ່ມີພຽງອັດຕາສ່ວນນ້ອຍຄື 1%ເທົ່ານັ້ນ.

### 4.1.7 ຂໍ້ມູນກ່ຽວກັບລະດັບການສຶກສາ

ຕາຕະລາງທີ 4.5: ຂໍ້ມູນກ່ຽວກັບລະດັບການສຶກສາຂອງກຸ່ມຕົວຢ່າງ

| ລຳດັບ | ການສຶກສາ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ບໍ່ໄດ້ຮຽນ | 143 | 65 |
| 2 | ປະຖົມ | 54 | 24.5 |
| 3 | ມັດທະຍົມຕົ້ນ | 23 | 10.5 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.5: ຂໍ້ມູນກ່ຽວກັບລະດັບການສຶກສາຂອງກຸ່ມຕົວຢ່າງເຫັນວ່າ : ຈຳນວນຄົນທີ່ບໍ່ໄດ້ຮັບການສຶກສາເລີຍມີ 143 ຄົນ, ກວມເອົາເຖິງ 65% ຍ້ອນວ່າ: ໃນເມື່ອກ່ອນປະຊາຊົນສ່ວນຫລາຍບໍ່ມີໂອກາດ, ບໍ່ເປີດກ້ວາງ ແລະ ບໍ່ອຳນວຍທາງດ້ານການສຶກສາ , ນອກຈາກນີ້ກໍ່ຍ້ອນພື້ນການສຶກສາທີ່ບໍ່ພຽງພໍ , ຮອງລົງມາແມ່ນຈຳນວນຄົນຜູ້ທີ່ໄດ້ສຶກສາຂັ້ນປະ ຖົມມີ 54 ຄົນ, ກວມເອົາ 24.5%, ຈຳນວນຄົນຜູ້ທີ່ໄດ້ສຶກສາຂັ້ນມັດທະຍົມຕົ້ນມີ 23 ຄົນເຊິ່ງກວມອັດຕາສ່ວນພຽງ 10.5%, ໃນນີ້ກໍ່ເນື່ອງມາຈາກຄວາມຕ້ອງການແຮງງານເພື່ອວຽກເຮັດກະສິກຳລະດັບການສຶກສາຂອງປະຊາຊົນຈິ່ງບໍ່ສູງເພາະວ່າ : ການສຶກສາສຳລັບເຂົາເຈົ້າແມ່ນເພື່ອອ່ານອອກຂຽນເປັນເທົ່ານັ້ນ.

### 4.1.8 ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວ

ຕາຕະລາງທີ່ 4.6: ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວຂອງກຸ່ມຕົວຢ່າງ

| ລຳດັບ | ສະມາຊິກ | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ຄົນ) |
|---|---|---|---|---|
| 1 | ນ້ອຍກ່ວາ 5 ຄົນ | 28 | 13 | 6 |
| 2 | 6-8 ຄົນ | 165 | 75 | |
| 3 | ຫລາຍກ່ວາ 9 ຄົນ | 27 | 12 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.6: ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວຂອງປະຊາຊົນສະເລ່ຍແລ້ວແມ່ນ 6 ຄົນ, ຄອບຄົວທີ່ມີສະມາຊິກລະຫວ່າງ 6-8 ຄົນແມ່ນກວມເອົາ 75%, ຮອງລົງມາແມ່ນຄອບຄົວທີ່ມີສະມາຊິກນ້ອຍກ່ວາ 5 ຄົນ ແມ່ນ 13% ແລະ ອັດຕາສ່ວນຂອງຄອບຄົວທີ່ມີສະມາຊິກຫລາຍກ່ວາ 9 ຄົນກວມ 12% ສັງເກດເຫັນວ່າເປັນຄອບຄົວໃຫຍ່ , ບໍ່ມີການວາງແຜນຄອບຄົວ.

### 4.1.9 ຂໍ້ມູນກ່ຽວກັບສາທາລະນຸປະໂພກພື້ນຖານ

**1 ຫ້ອງນໍ້າ**

ຕາຕະລາງທີ 4.7: ຂໍ້ມູນກ່ຽວກັບຫ້ອງນໍ້າຂອງກຸ່ມຕົວຢ່າງ

| ລຳດັບ | ຫ້ອງນໍ້າ | ຈຳນວນ | ສ່ວນຮ້ອຍ |
|---|---|---|---|
| 1 | ບໍ່ມີໃຊ້ | 144 | 65.5 |
| 2 | ມີໃຊ້ | 76 | 34.5 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ່ 4.7: ຂໍ້ມູນກ່ຽວກັບການມີຫ້ອງນໍ້າໃຊ້ປະຊາຊົນສ່ວນຫລາຍແມ່ນບໍ່ມີຫ້ອງນໍ້າໃຊ້ເຖິງຈຳນວນ 144 ຄົນ ກວມເອົາ 65.5%, ສ່ວນຫລາຍປະຊາຊົນແມ່ນຖ່າຍຊະຊາຍຕາມປ່າ ຕາມສວນ ແຕ່ປະຊາຊົນທີ່ມີຫ້ອງນໍ້າໃຊ້ມີພຽງ 76 ຄົນ, ກວມເອົາ 34.5% ເທົ່ານັ້ນ.

**2 ການກຳຈັດສິ່ງເສດເຫລືອ**

ຕາຕະລາງທີ 4.8: ຂໍ້ມູນກ່ຽວກັບການກຳຈັດສິ່ງເສດເຫລືອ

| ລຳດັບ | ການກຳຈັດສິ່ງເສດເຫລືອ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ບໍ່ມີ | 172 | 78.2 |
| 2 | ມີ | 48 | 21.8 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳພາດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ່ 4.8: ຂໍ້ມູນການກຳຈັດສິ່ງເສດເຫລືອເຫັນວ່າມີຈຳນວນ 172 ຄົນ, ກວມເອົາ 78.2% ທີ່ບໍ່ມີການກຳຈັດສິ່ງເສດເຫລືອ ແລະ ມີຈຳນວນພຽງ 48 ຄົນ, ເຊິ່ງກວມເອົາ 21.8% ເທົ່ານັ້ນທີ່ມີການຈັດສັນສິ່ງເສດເຫລືອ.

**3 ການນຳໃຊ້ນໍ້າ**

ຕາຕະລາງທີ 4.9: ຂໍ້ມູນກ່ຽວກັບການນຳໃຊ້ນໍ້າ

| ລຳດັບ | ນໍ້າທີ່ໃຊ້ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ນໍ້າລິນ | 155 | 70 |
| 2 | ນໍ້າບາດານ, ນໍ້າສ້າງ | 65 | 30 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳພາດຕົວຈິງເດືອນ 3 ປີ 2011.

ຕາຕະລາງທີ່ 4.9: ຂໍ້ມູນການນຳໃຊ້ນໍ້າຂອງກຸ່ມຕົວຢ່າງເຫັນວ່າ: ປະຊາຊົນມີຈຳນວນ 154 ຄົນແມ່ນໄດ້ໃຊ້ນໍ້າລິນຂອງໂຄງການຊ່ວຍເຫລືອກວມເອົາອັດຕາສ່ວນ 70% ແມ່ນນຳໃຊ້ນໍ້າລິນ

ແລະ ປະຊາຊົນທີ່ໃຊ້ນ້ຳສ້າງ, ນ້ຳບາດານມີ 65 ຄົນ, ກວມອັດຕາສ່ວນ 30% ເນື່ອງຈາກວ່າບໍ່ມີນ້ຳປະປາໃຊ້ ສະນັ້ນການນຳໃຊ້ນ້ຳຈິ່ງອາໃສນ້ຳທຳມະຊາດທີ່ບໍ່ສະອາດເທົ່າທີ່ຄວນໃນການອຸປະໂພກ, ບໍລິໂພກ.

**4 ການນຳໃຊ້ໄຟຟ້າ**

ຈາກການສຳພາດຕົວຈິງຂອງພວກຂ້າພະເຈົ້າເຫັນວ່າທັງຫມົດຂອງປະຊາຊົນພາຍໃນບ້ານແມ່ນມີໄຟຟ້ານຳໃຊ້ 100%, ເນື່ອງຈາກມີການຂະຫຍາຍຕາຫນ່າງໄຟຟ້າໃຫ້ທົ່ວເຖິງ , ພ້ອມທັງເປັນການສ້າງຄວາມອຳນວຍຄວາມສະດວກໃຫ້ຕົນເອງ ສະນັ້ນ ບັນດາຄົວເຮືອນຈິ່ງມີການເດີນໄຟຟ້າເຂົ້າທຸກໆເຮືອນ.

### 4.1.10 ຂໍ້ມູນກ່ຽວກັບລາຍໄດ້

ຕາຕະລາງທີ 4.10: ຂໍ້ມູນກ່ຽວກັບລາຍໄດ້ຂອງກຸ່ມຕົວຢ່າງ

| ລຳດັບ | ລະດັບລາຍໄດ້ (ກີບ) | ຈຳນວນ (ຄົນ) | ສ່ວນຮ້ອຍ | ລາຍໄດ້ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ໜ້ອຍກ່ວາ10 ລ້ານ | 84 | 38.2 | 20,650,000 |
| 2 | 10 ລ້ານ-30ລ້ານ | 95 | 43.2 | |
| 3 | 30 ລ້ານ-50ລ້ານ | 19 | 8.6 | |
| 4 | 50ລ້ານ-70ລ້ານ | 14 | 6.4 | |
| 5 | ຫລາຍກ່ວາ70ລ້ານ | 8 | 3.6 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.10: ຂໍ້ມູນກ່ຽວກັບລາຍໄດ້ຂອງແຕ່ລະຄົນສະເລ່ຍແມ່ນປະມານ 20,650,000 ກີບ/ປີ, ສັງເກດເຫັນວ່າລາຍໄດ້ຂອງປະຊາຊົນແມ່ນຂ່ອນຂ້າງຕ່ຳ , ຄົນທຸກຍາກກັບ ຄົນທີ່ມີຖານະພໍຢູ່ພໍກິນກວມອັດຕາສ່ວນສູງ , ສ່ວນຄົນທີ່ມີລາຍໄດ້ໃນລະດັບຮັ່ງມີແມ່ນກວມອັດຕາສ່ວນພຽງນ້ອຍດຽວລະດັບລາຍໄດ້ໄດ້ແບ່ງອອກດັ່ງນີ້ : ເລີ່ມຈາກຜູ້ທີ່ມີລາຍໄດ້ຕ່ຳເປັນກຸ່ມຄົນທຸກຍາກເຊິ່ງລາຍໄດ້ໜ້ອຍກ່ວາ 10,000,000 ກີບ/ປີແມ່ນມີ 84 ຄົນ, ເຊິ່ງກວມເອົາ 38.2%, ຕໍ່ມາແມ່ນຄົນທີ່ມີລາຍໄດ້ສາມາດກຸ້ມຢູ່ກຸ້ມກິນລະຫວ່າງ 10,000,000-30,000,000 ກີບ/ປີມີ 95 ຄົນ, ເຊິ່ງກວມສູງເຖິງ 43.2%, ຄົນທີ່ມີລາຍໄດ້ຢູ່ລະດັບປານກາງລະຫວ່າງ 30,000,000-50,000,000 ກີບ/ປີມີ 19 ຄົນ, ກວມອັດຕາສ່ວນ 8.6%. ຜູ້ທີ່ມີລາຍໄດ້ຄ່ອນຂ້າງມີຢູ່ມີກິນຄືລະຫວ່າງ 50,000,000-70,000,000 ກີບ/ປີມີຈຳນວນ 14 ຄົນ ເຊິ່ງກວມເອົາ 6.4% ສ່ວນຄົນທີ່ມີລາຍໄດ້ສູງເປັນຄົນຖານະຮັ່ງມີຄືຫລາຍກ່ວາ 70,000,000 ກີບ/ປີ ແມ່ນມີພຽງ 8 ຄົນ, ເຊິ່ງກວມອັດຕາສ່ວນພຽງແຕ່ 3.6%.

### 4.1.11 ຂໍ້ມູນກ່ຽວກັບແຫລ່ງທີ່ມາຂອງລາຍໄດ້

ຕາຕະລາງທີ 4.11: ຂໍ້ມູນກ່ຽວກັບແຫລ່ງທີ່ມາຂອງລາຍໄດ້ຂອງກຸ່ມຕົວຢ່າງ

| ລຳດັບ | ແຫລ່ງທີ່ມາຂອງລາຍໄດ້ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ຂາຍຜົນຜະລິດກະສິກຳ | 190 | 86.4 |
| 2 | ກຳມະກອນ | 20 | 9 |
| 3 | ຄ້າຂາຍ | 10 | 4.6 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການລົງສຳພາດຕົວຈິງເຫັນວ່າ : ແຫລ່ງທີ່ມາຂອງລາຍໄດ້ຂອງກຸ່ມຕົວຢ່າງເກືອບທັງຫມົດແມ່ນມາຈາກການຂາຍຜົນຜະລິດທາງການກະສິກຳເຊິ່ງກວມເອົາອັດຕາສ່ວນສູງເຖິງ 86.4%, ສ່ວນລາຍໄດ້ຈາກການເປັນກຳມະກອນນັ້ນກວມເອົາ 9% ແລະ ລາຍໄດ້ຈາກການຄ້າຂາຍແມ່ນກວມເອົາພຽງ 4.6%, ເຖິງແມ່ນວ່າອັດຕາສ່ວນຂອງລາຍໄດ້ຈາກການເປັນກຳມະກອນ ແລະ ການຄ້າຂາຍຈະກວມອັດຕາສ່ວນເຖິງ 13.6% ກໍ່ຕາມມັນເປັນພຽງອາຊີບທີ່ເສີມເປັນລາຍໄດ້ເສີມເທົ່ານັ້ນ ແຕ່ອາຊີບຫລັກ ແລະ ແຫລ່ງທີ່ມາຂອງລາຍໄດ້ແມ່ນມາຈາກການຂາຍຜົນຜະລິດກະສິກຳເປັນຫລັກ.

### 4.1.12 ຂໍ້ມູນກ່ຽວກັບລາຍຈ່າຍ

ຕາຕະລາງທີ 4.12: ຂໍ້ມູນກ່ຽວກັບລາຍຈ່າຍຂອງກຸ່ມຕົວຢ່າງ

| ລຳດັບ | ລະດັບລາຍຈ່າຍ (ກີບ) | ຈຳນວນ (ຄົນ) | ສ່ວນຮ້ອຍ | ລາຍຈ່າຍສະເລ່ຍ(ກີບ) |
|---|---|---|---|---|
| 1 | ຫນ້ອຍກ່ວາ10ລ້ານ | 147 | 66.8 | 8,770,000 |
| 2 | 10ລ້ານ-20ລ້ານ | 59 | 26.8 | |
| 3 | 20ລ້ານ-30ລ້ານ | 12 | 5.4 | |
| 4 | ຫລາຍກ່ວາ30ລ້ານ | 2 | 1 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.12:ຂໍ້ມູນກ່ຽວລາຍຈ່າຍຂອງປະຊາຊົນໂດຍສະເລ່ຍແມ່ນ 8,770,000 ກີບ/ປີ. ເຊິ່ງການໃຊ້ຈ່າຍກໍ່ຄ້າຍຄືກັນກັບລາຍໄດ້ເຊັ່ນວ່າ : ລາຍຈ່າຍຂອງຜູ້ທີ່ມີລາຍໄດ້ຫນ້ອຍແມ່ນຈະຈ່າຍຫນ້ອຍຄືລະດັບລາຍຈ່າຍຫນ້ອຍກ່ວາ 10,000,000 ກີບ/ປີ ມີ 147 ຄົນ, ກວມອັດຕາສູງເຖິງ 66.8%. ຮອງລົງມາກໍ່ຄືລາຍຈ່າຍຂອງປະຊາຊົນຢູ່ລະດັບ 10,000,000-20,000,000 ກີບ/ປີ, ກວມອັດຕາສ່ວນ 26.8%. ຈາກນັ້ນກໍແມ່ນລະດັບລາຍຈ່າຍລະຫວ່າງ 20,000,000-30,000,000 ກີບ/ປີ. ມີ 12 ຄົນ ເຊິ່ງກວມອັດຕາ 5.4% ແລະ ລາຍຈ່າຍໃນ

ລະດັບສູງຄືຫລາຍກ່ວາ 30,000,000 ກີບ/ປີ ມີພຽງຈຳນວນ 2 ຄົນ, ເຊິ່ງກວມອັດຕາສ່ວນ 1% ເທົ່ານັ້ນ.

### 4.1.13 ຂໍ້ມູນກ່ຽວກັບແຫລ່ງໃຊ້ຈ່າຍ

ຈາກການສອບຖາມຕົວຈິງຈາກປະຊາຊົນ (ກຸ່ມຕົວຢ່າງ) ໄດ້ຮັບຮູ້ວ່າການໃຊ້ຈ່າຍຂອງປະຊາຊົນສ່ວນຫຼາຍແມ່ນໃຊ້ຈ່າຍ ເພື່ອອຸປະໂພກ-ບໍລິໂພກ (ເກືອ,ແປ້ງນົວ...) ຊື້ເຂົ້າກິນ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ, ເພື່ອມາຮັບໃຊ້ໃນຊີວິດປະຈຳວັນຂອງເຂົາເຈົ້າ. ນອກຈາກນັ້ນກໍ່ຍັງການໃຊ້ຈ່າຍໃນດ້ານຕ່າງໆເຊັ່ນ: ງານສັງຄົມ (ງານດອງ, ງານບຸນປະເພນີຕ່າງໆ) ໄຟຟ້າ,ຊື້ອຸປະກອນການຮຽນໃຫ້ລູກແລະອື່ນໆ.

### 4.1.14 ຂໍ້ມູນກ່ຽວກັບດິນ

ຈາກການສຳຫລວດລົງພື້ນທີ່ຕົວຈິງພວກເຮົາສັງເກດເຫັນວ່າດິນທັງຫມົດຂອງກຸ່ມຕົວຢ່າງນັ້ນແມ່ນດິນທີ່ເຫມາະສົມກັບການກະສິກຳບໍ່ວ່າຈະເປັນດິນສວນ, ດິນປຸກສ້າງ ເພາະ ວ່າ: ເປັນດິນພຸຜຸ່ຍ, ດິນພູໄຟເກົ່າ.

### ກ ຂໍ້ມູນກ່ຽວກັບດິນຄອບຄອງທັງຫມົດ

ຕາຕະລາງທີ 4.13: ຂໍ້ມູນກ່ຽວກັບທີ່ດິນໃນການຄອບຄອງທັງຫມົດຂອງກຸ່ມຕົວຢ່າງ

| ລຳດັບ | ທີ່ດິນທັງຫມົດ(ຕາແມັດ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ຕາແມັດ) |
|---|---|---|---|---|
| 1 | ຫນ້ອຍກ່ວາ 20,000 | 41 | 19.1 | 32,385.6 |
| 2 | 20,000-40,000 | 121 | 55 | |
| 3 | 40,000-60,000 | 40 | 18.2 | |
| 4 | ຫລາຍກ່ວາ 60,000 | 18 | 7.7 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011

ຈາກຕາຕະລາງທີ່ 4.13: ຂໍ້ມູນກ່ຽວກັບການຄອບຄອງທີ່ດິນໂດຍສະເລ່ຍແລ້ວປະຊາຊົນມີດິນທັງຫມົດ 32,385.6 ຕາແມັດ, ປະຊາຊົນທີ່ມີດິນໃນຄອບຄອງຫນ້ອຍກ່ວາ 20,000 ຕາແມັດນັ້ນມີ 41 ຄົນ, ກວມເອົາ 19.1%, ປະຊາຊົນທທີ່ມີດິນໃນການຄອບຄອງຢູ່ລະຫວ່າງ 20,000-40,000 ຕາແມັດນັ້ນກວມອັດຕາສ່ວນຫລາຍເຖິງ 121 ຄົນ, ເຊິ່ງຄິດເປັນອັດຕາສ່ວນ 55%, ສ່ວນຜູ້ທີ່ມີດິນຄອບຄອງລະຫວ່າງ 40,000-60,000 ຕາແມັດມີ 40 ຄົນ, ເຊິ່ງກວມອັດຕາສ່ວນ 18.2% ແລະ ຜູ້ທີ່ມີດິນຄອບຄອງຫລາຍກ່ວາ 60,000 ຕາແມັດກວມອັດຕາສ່ວນນ້ອຍມີພຽງ 18 ຄົນ, ກວມເອົາ 7.7% ເທົ່ານັ້ນ.

### ຂ ຂໍ້ມູນກ່ຽວກັບດິນປຸກສ້າງ

ຕາຕະລາງທີ 4.14: ຂໍ້ມູນກ່ຽວກັບດິນປຸກສ້າງຂອງກຸ່ມຕົວຢ່າງ

| ລຳດັບ | ດິນປຸກສ້າງ(ຕາແມັດ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ຕາແມັດ) |
|---|---|---|---|---|
| 1 | ຫນ້ອຍກ່ວາ 200 | 92 | 41.8 | 445 |
| 2 | 200-600 | 82 | 37.3 | |
| 3 | 600-1,000 | 31 | 14.1 | |
| 4 | ຫລາຍກ່ວາ 1,000 | 15 | 6.8 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດຕົວຈິງເຫັນວ່າ: ປະຊາຊົນສ່ວນຫລາຍແມ່ນມີເນື້ອທີ່ດິນປຸກສ້າງຫນ້ອຍຫລາຍ ປະຊາຊົນທີ່ມີດິນປຸກສ້າງຫນ້ອຍກ່ວາ 200 ຕາແມັດມີຈຳນວນ 92 ຄົນ, ກວມເອົາອັດຕາສ່ວນເຖິງ 41.8%, ຮອງລົງມາແມ່ນຜູ້ທີ່ມີດິນປຸກສ້າງລະຫວ່າງ 200-600 ຕາແມັດເຊິ່ງມີ 82 ຄົນ, ກວມເອົາ 37.3%, ຜູ້ທີ່ມີດິນປຸກສ້າງລະຫວ່າງ 600-1,000 ຕາແມັດນັ້ນມີ 31 ຄົນ, ກວມເອົາ 14.1%. ສ່ວນຜູ້ທີ່ມີດິນປຸກສ້າງກ້ວາງເຊິ່ງຫລາຍກ່ວາ 1,000 ຕາແມັດມີພຽງ 15 ຄົນ, ກວມເອົາອັດຕາສ່ວນ 6.8% ເທົ່ານັ້ນ ເນື່ອງຈາກການປຸກເຮືອນຂອງປະຊາຊົນແມ່ນເປັນພຽງເຮືອນມຸງຫຍ້າຫລັງນ້ອຍໆ , ເຮືອນລຽນຕິດ , ຕັ້ງຢູ່ເປັນຊຸມຊົນທີ່ຄັບແຄບ , ພ້ອມທັງບໍ່ມີການຈັດສັນ, ສະນັ້ນດິນປຸກສ້າງໃນການຄອບຄອງຂອງປະຊາ ຊົນຈຶ່ງມີຫນ້ອຍ.

### ຄ ຂໍ້ມູນກ່ຽວກັບດິນເຮັດການກະສິກຳ

ຕາຕະລາງທີ 4.15: ຂໍ້ມູນກ່ຽວກັບດິນເຮັດການກະສິກຳຂອງກຸ່ມຕົວຢ່າງ

| ລຳດັບ | ດິນເຮັດກະສິກຳ(ເຮັກຕາ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ (ເຮັກຕາ) |
|---|---|---|---|---|
| 1 | ຫນອຍກ່ວາ 2 | 40 | 18.1 | 3.07 |
| 2 | 2-4 | 145 | 65.9 | |
| 3 | 4-6 | 23 | 10.5 | |
| 4 | ຫລາຍກ່ວາ 6 | 12 | 5.5 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳພາດຕົວຈິງປະຊາຊົນສະເລ່ຍມີດິນເຮັດການກະສິກຳປະມານ 3.07 ເຮັກຕາ, ປະຊາຊົນທີ່ມີດິນເຮັດການກະສິກຳຫນ້ອຍກ່ວາ 2 ເຮັກຕາມີ 40 ຄົນ, ກວມເອົາ18.1%, ຄົນທີ່ມີດິນກະສິກຳລະຫວ່າງ 2-4 ເຮັກຕາມີຈຳນວນຫລາຍເຊິ່ງມີເຖິງ 145 ຄົນ, ກວມເອົາອັດຕາສ່ວນ 65.9%, ສ່ວນຄົນທີ່ມີດິນກະສິກຳ 4-6 ເຮັກຕາມີ 23 ຄົນ, ກວມອັດຕາສ່ວນ 10.5%

ແລະ ຫລາຍກ່ວາ 6 ເຮັກຕາແມ່ນມີ 12 ຄົນເທົ່ານັ້ນ, ກວມເອົາ 5.5% ເຮົາຈະສັງເກດເຫັນວ່າ ທຸກໆຄົນນັ້ນແມ່ນມີດິນກະສິກໍາໄວ້ທໍາການຜະລິດໃນນັ້ນກໍ່ຄືການປູກເຂົ້າ , ກາເຟ, ກ້ວຍ, ຫມາກ ແຫນ່ງ…

### ງ ຂໍ້ມູນກ່ຽວກັບໜອງປາ

- **ຂໍ້ມູນກ່ຽວກັບຜູ້ທີ່ມີໜອງປາ**

ຕາຕະລາງທີ 4.16: ຂໍ້ມູນກ່ຽວກັບໜອງປາຂອງກຸ່ມຕົວຢ່າງ

| ລໍາດັບ | ໜອງປາ | ຈໍານວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | ບໍ່ມີ | 216 | 98.2 |
| 2 | ມີ | 4 | 1.8 |
| ທັງຫມົດ | | 220 | 100 |

ແຫລ່ງຂໍ້ມູນ: ຈາກການສໍາຫລວດຕົວຈິງເດືອນ 3 ປີ 2011.

ຈາກການສໍາຫລວດຕົວຈິງພົບວ່າ: ປະຊາຊົນມີໜອງປາເປັນອັດຕາສ່ວນນ້ອຍຫລາຍຄືມີ ຈໍານວນເຖິງ 216 ຄົນ, ກວມອັດຕາສ່ວນ 98.2% ແລະ ປະຊາຊົນທີ່ມີໜອງປາມີພຽງ 4 ຄົນ, ກວມເອົາ 1.8% ເທົ່ານັ້ນ.

- **ຂໍ້ມູນກ່ຽວກັບລາຍໄດ້ຈາກໜອງປາ**

ຈາກການສໍາຫລວດຕົວຈິງເຫັນວ່າ : ປະຊາຊົນທີ່ມີລາຍໄດ້ຈາກໜອງປາແມ່ນມີພຽງ 2 ຄົນ ກວມອັດຕາສ່ວນເກືອບ 1% ເທົ່ານັ້ນ ຍ້ອນວ່າໜອງປາຂອງເຂົາເຈົ້າແມ່ນເພື່ອລ້ຽງຊີບ ພາຍໃນຄອບຄົວ ສ່ວນປະຊາຊົນທີ່ມີລາຍໄດ້ຈາກໜອງປານີ້ກໍເປັນພຽງຈໍານວນຫນ້ອຍດຽວ.

### ຈ ຂໍ້ມູນກ່ຽວກັບລະດູການເຮັດກະສິກໍາ

ຈາກການສໍາຫລວດຕົວຈິງຂອງພວກຂ້າພະເຈົ້າເຫັນວ່າ : ປະຊາຊົນ 100% ແມ່ນເຮັດ ການກະສິກໍາໃນຍາມຝົນບໍ່ວ່າຈະເປັນການປູກເຂົ້າ , ຖົ່ວດິນ…ເພາະວ່າ: ຫມູ່ບ້ານບໍ່ມີຊົນລະ ປະທານ.

## 4.2 ຜົນຜະລິດ ແລະ ມູນຄ່າທີ່ໄດ້ຮັບຈາກການນຳໃຊ້ທີ່ດິນຂອງປະຊາຊົນ

### 4.2.1 ກາເຟ

#### ກ ຂໍ້ມູນກ່ຽວກັບປະລິມານກາເຟ

ຕາຕະລາງທີ 4.17: ຂໍ້ມູນກ່ຽວກັບປະລິມານກາເຟຂອງກຸ່ມຕົວຢ່າງ

| ລຳດັບ | ປະລິມານກາເຟ(ກິໂລ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກິໂລ/ປີ) |
|---|---|---|---|---|
| 1 | ບໍ່ມີ | 32 | 14.6 | 698 |
| 2 | ໜ້ອຍກ່ວາ 300 | 72 | 32.7 | |
| 3 | 300-600 | 52 | 23.6 | |
| 4 | 600-900 | 21 | 9.5 | |
| 5 | 900-1,200 | 12 | 5.5 | |
| 6 | ຫລາຍກ່ວາ 1,200 | 31 | 14.1 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011

ຈາກຕາຕະລາງທີ່ 4.17: ຂໍ້ມູນກ່ຽວກັບປະລິມານກາເຟເຫັນວ່າປະລິມານກາເຟສະເລ່ຍຂອງປະຊາຊົນທີ່ປູກກາເຟແມ່ນ 698 ກິໂລ/ປີ, ຄົນທີ່ບໍ່ໄດ້ຮັບປະລິມານກາເຟເລີຍມີຈຳນວນ 32 ຄົນ, ກວມເອົາ 14.6%. ກາເຟເປັນສິນຄ້າຕົ້ນຕໍ ແລະ ລາຍຮັບອັນຫລັກໆຂອງແຂວງສາລະວັນ , ໃນ 2 ບ້ານນີ້ກໍ່ເຊັ່ນດຽວກັນ . ຄົນທີ່ມີລາຍໄດ້ໜ້ອຍກ່ວາ 300 ກິໂລມີຈຳນວນ 72 ຄົນ, ກວມເອົາ 32.7%. ຄົນທີ່ມີລາຍໄດ້ຈາກການຂາຍກາເຟລະຫວ່າງ 300-600 ກິໂລມີຈຳນວນ 52 ຄົນ, ເຊິ່ງກວມເອົາ 23.6%. ຄົນທີ່ມີລາຍໄດ້ຈາກການຂາຍກາເຟ 600-900 ກິໂລມີຈຳນວນ 21 ຄົນ, ກວມເອົາ 9.5%. ສ່ວນຄົນທີ່ມີລາຍໄດ້ຈາກການຂາຍກາເຟ 900-1200 ກິໂລມີຈຳນວນ 12 ຄົນເຊິ່ງກວມເອົາ 5.5% ແລະ ຄົນທີ່ມີລາຍໄດ້ຫລາຍກ່ວາ 1200 ກິໂລແມ່ນມີຈຳນວນ 31 ຄົນ ແລະ ກວມເອົາ 14.1%.

### ຂ ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍກາເຟ

ຕາຕະລາງທີ 4.18: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍກາເຟຂອງກຸ່ມຕົວຢ່າງ

| ລຳດັບ | ມູນຄ່າ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 32 | 14.5 | 11,871,000 |
| 2 | ໜ້ອຍກ່ວາ 5 ລ້ານ | 73 | 33.2 | |
| 3 | 5-10 ລ້ານ | 53 | 24.1 | |
| 4 | 10-15 ລ້ານ | 19 | 8.6 | |
| 5 | ຫລາຍກ່ວາ 15 ລ້ານ | 43 | 19.6 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ, 2011

ຈາກການສຳຫລວດຕົວຈິງເຫັນວ່າ : ລາຍໄດ້ສະເລ່ຍຈາກການຂາຍໝາກກາເຟຂອງປະຊາຊົນຜູ້ທີ່ປູກກາເຟແມ່ນປະມານ 11,871,000 ກີບ/ປີ. ຄົນທີ່ບໍ່ມີລາຍໄດ້ຈາກການຂາຍກາເຟແມ່ນ 32 ຄົນກວມເອົາອັດຕາສ່ວນ 14.5%. ການຂາຍກາເຟຂອງປະຊາຊົນແມ່ນຂາຍເປັນປີ , ປີ 1 ຈະຂາຍ 1 ເທື່ອໃຫ້ກັບພໍ່ຄ້າຄົນກາງ . ຄົນທີ່ມີລາຍໄດ້ໜ້ອຍກ່ວາ 5 ລ້ານມີເຖິງ 73 ຄົນ, ກວມເອົາ 33.2%. ຄົນທີ່ມີລາຍໄດ້ຈາກການຂາຍກາເຟຢູ່ລະຫວ່າງ 5-10 ລ້ານມີ 53 ຄົນເຊິ່ງກວມເອົາອັດຕາສ່ວນ 24.1%. ຄົນທີ່ມີລາຍໄດ້ຈາກການຂາຍກາເຟ 10-15 ລ້ານມີຈຳນວນ 19 ຄົນ, ກວມເອົາ 8.6% ແລະ ຄົນທີ່ມີລາຍໄດ້ຈາກການຂາຍກາເຟຫລາຍກ່ວາ 15 ລ້ານມີ 43 ຄົນ, ກວມເອົາ 19.6%.

## 4.2.2 ໝາກກ້ວຍ

### ກ ຂໍ້ມູນກ່ຽວກັບປະລິມານໝາກກ້ວຍ

ຕາຕະລາງທີ 4.19: ຂໍ້ມູນກ່ຽວກັບປະລິມານໝາກກ້ວຍຂອງກຸ່ມຕົວຢ່າງ

| ລຳດັບ | ປະລິມານກ້ວຍ(ເຄືອ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ເຄືອ/ປີ) |
|---|---|---|---|---|
| 1 | ບໍ່ມີ | 78 | 35.5 | 631 |
| 2 | ໜ້ອຍກ່ວາ 200 | 61 | 27.7 | |
| 3 | 200-400 | 41 | 18.6 | |
| 4 | 400-600 | 22 | 10 | |
| 5 | ຫລາຍກ່ວາ 600 | 18 | 8.2 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳພາດຕົວຈິງເດືອນ 3 ປີ 2011

ຈາກຕາຕະລາງທີ 4.19: ຂໍ້ມູນກ່ຽວກັບປະລິມານໝາກກ້ວຍ ໂດຍສະເລ່ຍແລ້ວໃນ 1 ປີ ປະຊາຊົນທີ່ປູກກ້ວຍໄດ້ຮັບປະລິມານໝາກກ້ວຍ 631 ເຄືອ/ປີ, ໃນບັນດາກຸ່ມຕົວຢ່າງບໍ່ມີຄົນປູກກ້ວຍກວມຈຳນວນເຖິງ 78 ຄົນເຊິ່ງກວມເອົາ 35.5%. ຄົນທີ່ໄດ້ຮັບກ້ວຍໜ້ອຍກ່ວາ 200 ເຄືອມີຈຳນວນ 61 ຄົນ, ກວມເອົາ 27.7%. ຄົນທີ່ໄດ້ຮັບປະລິມານກ້ວຍລະຫວ່າງ 200-400 ເຄືອມີຈຳນວນ 41 ຄົນ ເຊິ່ງກວມເອົາອັດຕາສ່ວນ 18.6%. ຄົນທີ່ໄດ້ຮັບປະລິມານກ້ວຍ 400-600 ເຄືອມີຈຳນວນ 22 ຄົນ, ກວມເອົາອັດຕາສ່ວນ 10% ແລະ ຄົນທີ່ໄດ້ຮັບປະລິມານໝາກກ້ວຍຫລາຍກ່ວາ 600 ເຄືອມີຈຳນວນ 18 ຄົນ, ກວມເອົາອັດຕາສ່ວນ 8.2%.

**ຂ ມູນຄ່າຈາກການຂາຍໝາກກ້ວຍ**

ຕາຕະລາງທີ 4.20: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍໝາກກ້ວຍຂອງກຸ່ມຕົວຢ່າງ

| ລຳດັບ | ມູນຄ່າ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 78 | 35.5 | 9,282,000 |
| 2 | ໜ້ອຍກ່ວາ 5 ລ້ານ | 62 | 28.2 | |
| 3 | 5 – 10 ລ້ານ | 46 | 20.9 | |
| 4 | 10 – 15 ລ້ານ | 19 | 8.6 | |
| 5 | ຫລາຍກ່ວາ 15 ລ້ານ | 15 | 6.8 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດຕົວຈິງເຫັນວ່າ : ປະຊາຊົນຜູ້ທີ່ປູກໝາກກ້ວຍມີລາຍໄດ້ສະເລ່ຍຈາກການຂາຍໝາກກ້ວຍແມ່ນ 9,282,000 ກີບ/ປີ. ການຂາຍກ້ວຍແມ່ນຂາຍໃຫ້ພໍ່ຄ້າຄົນກາງມາຮັບຊື້ເຖິງສວນ ໃນການຂາຍກ້ວຍແມ່ນຕັດເປັນກ້ວຍດິບ . ຄົນທີ່ມີລາຍໄດ້ຈາກການຂາຍກ້ວຍໜ້ອຍກ່ວາ 5 ລ້ານມີ 62 ຄົນ, ກວມເອົາ 28.2%. ຄົນທີ່ມີລາຍໄດ້ຈາກການຂາຍໝາກກ້ວຍ 5 – 10 ລ້ານມີ 46 ຄົນກວມເອົາອັດຕາສ່ວນ 20.9%. ຄົນທີ່ມີລາຍໄດ້ຈາກການຂາຍກ້ວຍ 10 – 15 ລ້ານມີ 19 ຄົນກວມເອົາ 8.6% ແລະ ລາຍໄດ້ຫລາຍກ່ວາ 15 ລ້ານແມ່ນມີ 6.8%.

### 4.2.3 ຫມາກແຫນ່ງ

#### ກ ຂໍ້ມູນກ່ຽວກັບປະລິມານຫມາກແຫນ່ງ

ຕາຕະລາງທີ 4.21: ຂໍ້ມູນກ່ຽວກັບປະລິມານຫມາກແຫນ່ງຂອງກຸ່ມຕົວຢ່າງ

| ລໍາດັບ | ປະລິມານ(ກິໂລ) | ຈໍານວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກິໂລ/ປີ) |
|---|---|---|---|---|
| 1 | ບໍ່ມີ | 131 | 59.5 | 136.6 |
| 2 | ຫນ້ອຍກ່ວາ 100 | 56 | 25.5 | |
| 3 | 100-200 | 22 | 10 | |
| 4 | ຫລາຍກ່ວາ 200 | 11 | 5 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສໍາຫລວດຕົວຈິງເດືອນ 3 ປີ 2011.

ຈາກການສໍາຫລວດຕົວຈິງເຫັນວ່າ : ປະຊາຊົນຜູ້ທີ່ປູກຫມາກແຫນ່ງສາມາດເກັບກູ້ຫມາກແຫນ່ງໄດ້ໂດຍສະເລ່ຍປະມານ 136.6 ກິໂລ/ປີ. ຄົນທີ່ບໍ່ໄດ້ປູກຫມາກແຫນ່ງມີຈໍານວນເຖິງ 131 ຄົນ. ເຊິ່ງກວມອັດຕາສ່ວນເຖິງ 59.5%. ຄົນທີ່ໄດ້ຮັບຫມາກແຫນ່ງ
ຫນ້ອຍກ່ວາ 100 ກິໂລມີ 56 ຄົນ, ກວມເອົາ 25.5%. ຄົນທີ່ໄດ້ຮັບປະລິມານຫມາກແຫນ່ງ 100-200 ກິໂລມີຈໍານວນ 22 ຄົນກວມເອົາ 10%. ສ່ວນຄົນທີ່ໄດ້ຮັບປະລິມານຫລາຍກ່ວາ 200 ກິໂລມີຈໍານວນ 11 ຄົນກວມເອົາ 5%.

#### ຂ ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍຫມາກແຫນ່ງ

ຕາຕະລາງທີ 4.22: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍຫມາກແຫນ່ງຂອງກຸ່ມຕົວຢ່າງ

| ລໍາດັບ | ມູນຄ່າ (ກີບ) | ຈໍານວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 131 | 59.6 | 5,442,000 |
| 2 | ຫນ້ອຍກ່ວາ 5 ລ້ານ | 61 | 27.7 | |
| 3 | 5 – 10 ລ້ານ | 19 | 8.6 | |
| 4 | ຫລາຍກ່ວາ 10 ລ້ານ | 9 | 4.1 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສໍາຫລວດຕົວຈິງເດືອນ 3 ປີ 2011.

ຈາກການສໍາຫລວດຕົວຈິງເຫັນວ່າ : ປະຊາຊົນຜູ້ທີ່ປູກຫມາກແຫນ່ງມີລາຍໄດ້ຈາກການຂາຍຫມາກແຫນ່ງໂດຍສະເລ່ຍແລ້ວແມ່ນ 5,442,000 ກີບ/ປີ. ການຂາຍຫມາກແຫນ່ງປະຊາຊົນແມ່ນປີ 1 ຂາຍເທື່ອ 1. ຄົນທີ່ມີລາຍໄດ້ຈາກການຂາຍຫມາກແຫນ່ງຫນ້ອຍກ່ວາ 5 ລ້ານມີຈໍານວນ 61 ຄົນກວມເອົາ 27.7%. ຄົນທີ່ມີລາຍໄດ້ 5-10 ລ້ານມີ 19 ຄົນ, ກວມເອົາ 8.6%.

ຄົນທີ່ມີລາຍໄດ້ຫລາຍກ່ວາຈາກການຂາຍໝາກແໜ່ງຫລາຍກ່ວາ 10 ລ້ານມີ 9 ຄົນ, ກວມເອົາອັດຕາສ່ວນ 4.1%.

### 4.2.4 ເຂົ້າ

#### ກ ຂໍ້ມູນກ່ຽວກັບປະລິມານເຂົ້າ

ຕາຕະລາງທີ 4.23: ຂໍ້ມູນກ່ຽວກັບຜົນລະປູກ (ເຂົ້າ) ຂອງກຸ່ມຕົວຢ່າງ

| ລຳດັບ | ຜົນລະປູກເຂົ້າ(ໂຕນ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ໂຕນ) |
|---|---|---|---|---|
| 1 | ບໍ່ມີ | 19 | 8.6 | 1.76 |
| 2 | ໜ້ອຍກ່ວາ 1 | 25 | 11.4 | |
| 3 | 1 – 2 | 101 | 45.9 | |
| 4 | ຫລາຍກ່ວາ 2 | 75 | 34.1 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.23: ຂໍ້ມູນກ່ຽວກັບຜົນລະປູກເຂົ້າໂດຍໃນປີ 1 ສະເລ່ຍແລ້ວຄົນທີ່ປູກເຂົ້າຈະໄດ້ຮັບເຂົ້າຄົນລະ 1.76 ໂຕນ, ຜົນຜະລິດໄດ້ຮັບແມ່ນຂຶ້ນກັບຄວາມເອົາໃຈໃນການດູແລເບິ່ງແຍງ ແລະ ສະພາບດິນນຳອີກ. ປະຊາຊົນທີ່ບໍ່ມີຜົນລະປູກເລີຍເນື່ອງຈາກບໍ່ໄດ້ເຮັດໄຮ່ປູກເຂົ້າມີຈຳນວນ 19 ຄົນ, ກວມເອົາ 8.6%. ຄົນທີ່ໄດ້ຮັບຜົນລະປູກໜ້ອຍກ່ວາ 1 ໂຕນມີຈຳນວນ 25 ຄົນ, ກວມເອົາ 11.4%. ຄົນທີ່ໄດ້ຮັບຜົນລະປູກລະຫວ່າງ 1–2 ໂຕນມີ 101 ຄົນ, ເຊິ່ງກວມເອົາອັດຕາສ່ວນເຖິງ 45.9%. ສ່ວນຄົນທີ່ໄດ້ຮັບຜົນລະປູກຫລາຍກ່ວາ 2 ໂຕນມີ 75 ຄົນ, ເຊິ່ງກວມເອົາ 34.1%. ຜົນລະປູກເຂົ້າທັງໝົດແມ່ນປະມານ 98% ແມ່ນບໍ່ໄດ້ຂາຍມີພຽງແຕ່ບໍລິໂພກຢ່າງດຽວ, ບາງຄອບຄົວເຂົ້າກິນບໍ່ພໍຍັງໄດ້ຊື້ເພີ້ມອີກ.

#### ຂ ຂໍ້ມູນກ່ຽວກັບມູນຄ່າທີ່ໄດ້ຮັບຈາກເຂົ້າ

ຕາຕະລາງທີ 4.24: ຂໍ້ມູນກ່ຽວກັບມູນຄ່າຈາກເຂົ້າຂອງກຸ່ມຕົວຢ່າງ

| ລຳດັບ | ມູນຄ່າ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 19 | 8.6 | 5,017,000 |
| 2 | ໜ້ອຍກ່ວາ 3 ລ້ານ | 44 | 20 | |
| 3 | 3 ລ້ານ - 6 ລ້ານ | 82 | 37.3 | |
| 4 | ຫລາຍກ່ວາ 6 ລ້ານ | 75 | 40.1 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດຕົວຈິງເຫັນວ່າ : ມູນຄ່າຈາກຜົນຜະລິດເຂົ້າຂອງປະຊາຊົນຖ້າມີການຂາຍໂດຍສະເລ່ຍແລ້ວປະມານ 5,017,000 ກີບ/ປີ. ແຕ່ປະຊາຊົນໃນບ້ານແມ່ນບໍ່ມີການຂາຍເຂົ້າມີແຕ່ໃຊ້ບໍລິໂພກພຽງຢ່າງດຽວ.

### 4.2.5 ຖົ່ວດິນ

#### ກ ຂໍ້ມູນກ່ຽວກັບປະລິມານຖົ່ວດິນ

ຕາຕະລາງທີ 4.25: ຂໍ້ມູນກ່ຽວກັບປະລິມານຖົ່ວດິນຂອງກຸ່ມຕົວຢ່າງ

| ລຳດັບ | ຖົ່ວດິນ(ກິໂລ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກິໂລ/ປີ) |
|---|---|---|---|---|
| 1 | ບໍ່ມີ | 67 | 30.5 | 1,337 |
| 2 | ຫນ້ອຍກ່ວາ 1,000 | 64 | 29.1 | |
| 3 | 1,000-2,000 | 59 | 26.8 | |
| 4 | 2,000-3,000 | 13 | 5.9 | |
| 5 | ຫລາຍກ່ວາ 3000 | 17 | 7.7 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ, 2011.

ຈາກຕາຕະລາງທີ 25: ຂໍ້ມູນກ່ຽວກັບປະລິມານຖົ່ວດິນຂອງປະຊາຊົນໂດຍສະເລ່ຍແລ້ວປະຊາຊົນທີ່ປູກຖົ່ວດິນແມ່ນໄດ້ຮັບຜົນຜະລິດຖົ່ວດິນຄົນລະ 1,337 ກິໂລ/ປີ. ປະຊາຊົນທີ່ບໍ່ໄດ້ປູກຖົ່ວດິນມີຈຳນວນ 67 ຄົນ. ຄົນທີ່ໄດ້ຮັບຜົນຜະລິດຖົ່ວດິນຫນ້ອຍກ່ວາ 1,000 ກິໂລ ມີ 64 ຄົນ, ກວມເອົາອັດຕາສ່ວນ 29.1%. ຄົນທີ່ໄດ້ຮັບຜົນຜະລິດຖົ່ວດິນ 1,000-2,000 ກິໂລມີ 59 ຄົນ, ກວມເອົາ 26.8%. ຄົນທີ່ໄດ້ຮັບຜົນຜະລິດຖົ່ວດິນ 2,000-3,000 ກິໂລມີ 13 ຄົນ, ກວມເອົາ 5.9%. ສ່ວນຄົນທີ່ໄດ້ຮັບຜົນຜະລິດຖົ່ວດິນຫລາຍກ່ວາ 3,000 ກິໂລມີ 17 ຄົນເຊິ່ງກວມເອົາອັດຕາສ່ວນ 7.7%.

### ຂ ຂໍ້ມູນກ່ຽວກັບການຂາຍຖົ່ວດິນ

ຕາຕະລາງທີ 4.26: ຂໍ້ມູນກ່ຽວກັບການຂາຍຖົ່ວດິນຂອງກຸ່ມຕົວຢ່າງ

| ລຳດັບ | ລາຍໄດ້ຈາກຖົ່ວດິນ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 67 | 30.4 | 3,440,000 |
| 2 | ໜ້ອຍກ່ວາ 2 ລ້ານ | 44 | 20 | |
| 3 | 2-4 ລ້ານ | 64 | 29.1 | |
| 4 | 4-6 ລ້ານ | 25 | 11.4 | |
| 5 | ຫລາຍກ່ວາ 6 ລ້ານ | 20 | 9.1 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ, 2011.

ຈາກການສຳຫລວດຕົວຈິງເຫັນວ່າ: ປະຊາຊົນເກືອບ 70% ແມ່ນມີລາຍໄດ້ຈາກການຂາຍຖົ່ວດິນ. ລາຍໄດ້ສະເລ່ຍຈາກການຂາຍໝາກຖົ່ວດິນຂອງປະຊາຊົນແມ່ນຄົນລະ 3,957,000 ກີບ/ປີ. ແຕ່ໃນນີ້ມີຄົນຈຳນວນ 67 ຄົນທີ່ບໍ່ໄດ້ມີລາຍໄດ້ຈາກຂາຍຖົ່ວດິນເລີຍມີ 67 ຄົນ, ກວມເອົາ 30.4%. ຄົນທີ່ມີລາຍໄດ້ຈາກການຂາຍຖົ່ວດິນທີ່ຕ່ຳກ່ວາ 2 ລ້ານມີ 44 ຄົນ, ກວມເອົາອັດຕາສ່ວນ 20%. ຄົນທີ່ມີລາຍໄດ້ຈາກການຂາຍຖົ່ວດິນ 2-4 ລ້ານມີ 64 ຄົນ, ກວມເອົາ 29.1%. ຄົນທີ່ມີລາຍໄດ້ຈາກຂາຍຖົ່ວດິນ 4-6 ລ້ານມີ 25 ຄົນ, ກວມເອົາ 11.4%. ສ່ວນຄົນທີ່ມີລາຍໄດ້ຫລາຍກ່ວາ 6 ລ້ານຄົນມີ 20 ຄົນ ເຊິ່ງກວມເອົາ 9.1%.

## 4.2.6 ມັນແກວ

### ກ ຂໍ້ມູນກ່ຽວກັບປະລິມານມັນແກວ

ຕາຕະລາງທີ 4.27: ຂໍ້ມູນກ່ຽວກັບປະລິມານມັນແກວຂອງກຸ່ມຕົວຢ່າງ

| ລຳດັບ | ປະລິມານ(ກິໂລ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກິໂລ/ປີ) |
|---|---|---|---|---|
| 1 | ບໍ່ມີ | 171 | 77.7 | 2,483.3 |
| 2 | ໜ້ອຍກ່ວາ 2,000 | 22 | 10 | |
| 3 | 2,000-4,000 | 17 | 7.7 | |
| 4 | ຫລາຍກ່ວາ 4,000 | 10 | 4.6 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.27: ຂໍ້ມູນກ່ຽວກັບປະລິມານມັນແກວປະຊາຊົນໂດຍສະເລ່ຍແລ້ວປະຊາຊົນຜູ້ທີ່ປູກມັນແກວໄດ້ຮັບມັນແກວ 2,483.3 ກິໂລ/ປີ. ສ່ວນປະຊາຊົນຜູ້ທີ່ບໍ່ປູກມັນແກວເລີຍມີເຖິງ 171 ຄົນ, ກວມເອົາ 77.7%. ປະຊາຊົນທີ່ໄດ້ຮັບປະລິມານມັນແກວໜ້ອຍກ່ວາ

2,000 ກິໂລມີ 22 ຄົນ, ກວມເອົາ 10%. ຄົນທີ່ໄດ້ຮັບປະລິມານມັນແກວ 2,000-4,000 ກິໂລມີ 17 ຄົນ, ກວມເອົາ 7.7%. ຄົນທີ່ໄດ້ຮັບມັນແກວຫລາຍກ່ວາ 4,000 ກິໂລມີ 10 ຄົນເຊິ່ງກວມເອົາ 4.6%.

### ຂ ຂໍ້ມູນກ່ຽວກັບລາຍໄດ້ຈາກການຂາຍມັນແກວ

ຕາຕະລາງທີ 4.28: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍມັນແກວຂອງກຸ່ມຕົວຢ່າງ

| ລຳດັບ | ມູນຄ່າ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 171 | 77.7 | 3,636,000 |
| 2 | ຫນ້ອຍກ່ວາ 2 ລ້ານ | 14 | 6.4 | |
| 3 | 2-4 ລ້ານ | 19 | 8.6 | |
| 4 | ຫລາຍກ່ວາ 4 ລ້ານ | 16 | 7.3 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2010.

ຈາກການສຳຫລວດຕົວຈິງເຫັນວ່າ: ປະຊາຊົນຜູ້ທີ່ປູກມັນແກວມີລາຍໄດ້ຈາກການຂາຍມັນແກວແມ່ນ 3,636,000 ກີບ/ປີ. ຄົນທີ່ມີລາຍໄດ້ຈາກການຂາຍມັນແກວຫນ້ອຍກ່ວາ 2 ລ້ານມີຈຳນວນ 14 ຄົນ, ກວມເອົາ 6.4%. ຄົນທີ່ມີລາຍໄດ້ຈາກການຂາຍມັນແກວ
2-4 ລ້ານມີ 19 ຄົນ, ກວມເອົາ 8.6%. ຄົນທີ່ມີລາຍໄດ້ຫລາຍກ່ວາ 4 ລ້ານມີ 16 ຄົນເຊິ່ງກວມເອົາ 7.3%.

## 4.2.7 ສາລີ

### ກ ຂໍ້ມູນກ່ຽວກັບປະລິມານສາລີ

ຕາຕະລາງທີ 4.29: ຂໍ້ມູນກ່ຽວກັບປະລິມານສາລີຂອງກຸ່ມຕົວຢ່າງ

| ລຳດັບ | ປະລິມານ(ກິໂລ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກິໂລ/ປີ) |
|---|---|---|---|---|
| 1 | ບໍ່ໄດ້ປູກ | 216 | 98.1 | 3,283.3 |
| 2 | ຫນ້ອຍກ່ວາ 6,000 | 4 | 1.9 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດຕົວຈິງເຫັນວ່າ : ປະຊົນທີ່ບໍ່ປູກສາລີມີເຖິງຈຳນວນ 216 ຄົນ, ເຊິ່ງກວມອັດຕາສ່ວນ 98.1%. ປະຊາຊົນຜູ້ທີ່ປູກສາລີໂດຍສະເລ່ຍແລ້ວຈະໄດ້ຮັບຜົນຜະລິດແມ່ນ 3,283.3 ກິໂລ/ປີ.

### ຂ ຂໍ້ມູນກ່ຽວກັບລາຍໄດ້ຈາກການຂາຍສາລີ

ຕາຕະລາງທີ 4.30: ຂໍ້ມູນກ່ຽວກັບມູນຄ່າຈາກການຂາຍສາລີຂອງກຸ່ມຕົວຢ່າງ

| ລຳດັບ | ມູນຄ່າ(ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ປີ) |
|---|---|---|---|---|
| 1 | ບໍ່ມີ | 216 | 98.1 | 3,300,000 |
| 2 | ໜ້ອຍກ່ວາ 6 ລ້ານ | 4 | 1.9 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດເຫັນວ່າ : ປະຊາຊົນຜູ້ທີ່ປູກສາລີມີລາຍໄດ້ຈາກການຂາຍສາລີສະເລ່ຍແມ່ນ 3,300,000 ກີບ/ປີ.

## 4.2.8 ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະຂາຍ ຫລື ໃຫ້ສຳປະທານດິນ

### 1 ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະຂາຍດິນ

ຕາຕະລາງທີ 4.31: ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະຂາຍດິນທັງໝົດຂອງກຸ່ມຕົວຢ່າງ

| ລຳດັບ | ລາຄາຂາຍດິນ (ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ເຮັກຕາ) |
|---|---|---|---|---|
| 1 | ໜ້ອຍກ່ວາ 100 ລ້ານ | 104 | 47.3 | 49,007,000 |
| 2 | 100 ລ້ານ - 200 ລ້ານ | 79 | 35.9 | |
| 3 | ຫລາຍກ່ວາ 200 ລ້ານ | 37 | 16.8 | |
| ທັງໝົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳພາດຕົວຈິງເດືອນ 3 ປີ 2011.

ຈາກການສຳຫລວດຕົວຈິງເຫັນວ່າ : ປະຊາຊົນພາຍໃນບ້ານສ່ວນຫຼາຍແມ່ນບໍ່ໄດ້ມີການຊື້ຂາຍດິນກັນພາຍໃນໝູ່ບ້ານເພາະວ່າ: ດິນສ່ວນໃຫຍ່ແມ່ນໄດ້ມາຈາກການສືບທອດຕາມເຊື້ອ ສາຍ ຫຼື ການແບ່ງປັນກັນພາຍໃນເຄືອຍາດເພື່ອໃຫ້ລູກຫຼານມີທີດິນປຸກສ້າງທີ່ຢູ່ອາໃສ ແລະ ບ່ອນທຳການຜະລິດເທົ່ານັ້ນ. ແຕ່ຖ້າຈະມີການຊື້ຂາຍກັນຢ່າງຂາດຕົວແທ້ແລ້ວປະຊາຊົນມີຄວາມພໍໃຈທີ່ຈະຂາຍທີດິນຂອງຕົນເອງສະເລ່ຍແລ້ວແມ່ນຢູ່ໃນລາຄາປະມານ 49,007,000 ກີບ/ເຮັກຕາ. ແຕ່ວ່າໃນຈຳນວນຂອງກຸມຕົວຢ່າງທີໄດ້ສຳຫຼວດມາແມ່ນມີຄວາມພໍໃຈທີຈະຂາຍດິນ ໃນລາຄາໜ້ອຍກວ່າ 100 ລ້ານກີບ ແມ່ນມີຈຳນວນ 104 ຄົນ ເຊິ່ງກວມເອົາ 47,3%. ຄົນທີ່ຈະຂາຍດິນໃນລາຄາ 100-200 ລ້ານກີບ ມີ 79 ຄົນກວມເອົາ 35,9%.ແລະ ຂາຍໃນລາຄາຕັ້ງແຕ່ 200 ລ້ານກີບຂຶ້ນໄປມີ 37 ຄົນກວມເອົາ 16,8%.ຂອງກຸມຕົວຢ່າງ .ຈາກລາຄາໃນການຂາຍ ແລະ ອັດຕາສ່ວນຂ້າງເທິງນີ້ມັນໄດ້ສະແດງໃຫ້ເຮົາຮູ້ວ່າ ທີດິນຢູ່ເຂດນີ້ເປັນດິນທີ່ມີ ຄວາມອຸດົມສົມບູນ ເໝາະສົມແກ່ການເຮັດກະສິກຳເຊິ່ງມັນສາມາດສ້າງລາຍຮັບໃຫ້ແກ່ປະຊາ ຊົນພາຍໃນບ້ານ.

## 2 ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະໃຫ້ເຊົ່າຫລື ສຳປະທານດິນ

ຕາຕະລາງທີ 4.32: ຂໍ້ມູນກ່ຽວກັບຄວາມພໍໃຈທີ່ຈະໃຫ້ເຊົ່າ ຫລື ສຳປະທານດິນຂອງກຸ່ມຕົວຢ່າງ

| ລຳດັບ | ລາຄາ (ກີບ) | ຈຳນວນ(ຄົນ) | ສ່ວນຮ້ອຍ | ສະເລ່ຍ(ກີບ/ເຮັກຕາ) |
|---|---|---|---|---|
| 1 | ຫນ້ອຍກ່ວາ 20 ລ້ານ | 151 | 68.6 | 6,630,000 |
| 2 | 20 ລ້ານ-40 ລ້ານ | 49 | 22.3 | |
| 3 | ຫລາຍກ່ວາ 40 ລ້ານ | 20 | 9.1 | |
| ທັງຫມົດ | | 220 | 100 | |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງເດືອນ 3 ປີ 2011.

ຈາກຕາຕະລາງທີ 4.32: ຈາກການລົງເກັບກຳຂໍ້ມູນຕົວຈິງນຳປະຊາຊົນໄດ້ຮັບຮູ້ວ່າທີ່ດິນຂອງປະຊາຊົນພາຍໃນບ້ານກຸ່ມຕົວຢ່າງທີ່ໄດ້ລົງເກັບກຳຂໍ້ມູນແມ່ນໄດ້ຮັບຜົນກະທົບຈາກການສຳປະທານຂອງບໍລິສັດສຸມຸລະພຽງເລັກນ້ອຍ ແຕ່ຖ້າຈະມີບໍລິສັດ ຫຼື ພາກສ່ວນຕ່າງໆ ເຂົ້າມາສຳປະທານທີ່ດິນຂອງປະຊາຊົນພາຍໃນໝູ່ບ້ານເພື່ອທຳການຜະລິດ ຫຼື ດຳເນີນທຸລະກິດໃດໜຶ່ງໂດຍທີ່ປະຊາຊົນບໍ່ໄດ້ນຳໃຊ້ທີ່ດິນນັ້ນເລີຍ , ຄິດສະເລ່ຍແລ້ວໃນເນື້ອທີ່ດິນ 1 ເຮັກຕາແມ່ນຕົກຢູ່ໃນລາຄາ 6,630,000 ກີບ/ປີ. ແຕ່ໃນກຸມຕົວຢ່າງທີ່ໄດ້ສຳຫຼວດມາໄດ້ຮັບຮູ້ວ່າຄົນທີ່ຈະໃຫ້ເຊົ່າດິນຂອງຕົນເອງໃນລາຄາໜ້ອຍກວ່າ 20 ລ້ານ ມີ 151 ຄົນ ເຊິ່ງກວມເອົາອັດຕາ 68,6%,ເຊົ່າໃນລາຄາ 20-40 ລ້ານ ມີ 49 ຄົນ ກວມເອົາອັດຕາ 24,3%, ເຊົ່າໃນລາຄາຫຼາຍກວ່າ 40 ລ້ານມີ 20 ຄົນ ມີອັດຕາກວມ 9,1%, ຂອງກຸ່ມຈຳນວນຕົວຢ່າງ.

ຈາກການສຳຫລວດຕົວຈິງຈາກປະຊາຊົນເຫັນວ່າ: ມູນຄ່າທັງຫມົດທີ່ເກີດຈາກການນຳໃຊ້ທີ່ດິນໃນວຽກງານກະສິກຳສະເລ່ຍລວມແລ້ວປະມານ 41,988,000 ກີບ/ປີ ແລະ ມູນຄ່າສະເລ່ຍຈາກການຂາຍຜົນຜະລິດກະສິກຳໃນຈຳນວນ 1 ເຮັກຕາແມ່ນປະມານ 13,678,000 ກີບ/ເຮັກຕາ. ຕົວເລກດັ່ງກ່າວແມ່ນໄດ້ຈາກການປະເມີນຄິດໄລ່ມູນຄ່າຂອງສິນຄ້າຕ່າງໆທີ່ມີການນຳໃຊ້ດິນເຂົ້າໃນການເຮັດກະສິກຳ.

( ວິທີຄິດໄລ່ແມ່ນສະແດງຢູ່ເອກະສານຊ້ອນທ້າຍຕາຕະລາງທີ 33)

ໃນການລົງເກັບກຳຂໍ້ມູນໃນຄັ້ງນີ້ ນອກຈາກຈະໄດ້ຮັບເຖິງສະພາບທົ່ວໄປຂອງບ້ານດະເຊັຍນ້ອຍ, ດະເຊັຍໂພນຫີນ ແລ້ວຍັງຮັບຮູ້ເຖິງສະພາບທີ່ດິນ ແລະ ມູນຄ່າທີ່ເກີດຈາກການນຳໃຊ້ທີ່ດິນ ນອກຈາກນີ້ຍັງໄດ້ຮູ້ເຖິງບັນຫາທີ່ເກີດຂຶ້ນກັບການດຳລົງຊີວິດຂອງປະຊາຊົນບໍ່ວ່າຈະເປັນທາງດ້ານໂຄງລ່າງພື້ນຖານເປັນຕົ້ນແມ່ນ : ເສັ້ນທາງເຂົ້າບ້ານຍັງເປັນເສັ້ນທາງດິນແດງ , ເປ່ເພ, ລະບົບໄຟຟ້າຍັງບໍ່ທັນມີຄວາມປອດໄພ , ປະຊາຊົນຍັງບໍ່ທັນມີນ້ຳປະປາໃຊ້ , ໂຮງຮຽນ, ສຸກສາລາຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງປະຊາຊົນ , ຕະຫລາດ ແລະ ໂຮງຫມໍຍັງບໍ່ທັນມີ, ໂທລະຄົມມະນາຄົມຍັງບໍ່ທັນມີຄວາມສະດວກ , ເຊິ່ງເປັນສິ່ງທີ່ສຳຄັນຫຼາຍຕໍ່ກັບການດຳລົງ

ຊີວິດຂອງປະຊາຊົນໃນແຕ່ລະວັນ . ນອກຈາກນີ້ຍັງພົບບັນຫາທີ່ດິນທີ່ເກີດກັບປະຊາຊົນເປັນຕົ້ນ ແມ່ນການຈັດສັນທີ່ດິນຂອງປະຊາຊົນເຊັ່ນວ່າ : ທີ່ດິນທຳການຜະລິດ , ຂອບເຂດຊາຍແດນລະຫວ່າງບ້ານຕໍ່ບ້ານຍັງບໍ່ທັນຈະແຈ້ງ , ການອອກໃບຕາດິນຖາວອນໃຫ້ກັບປະ ຊາຊົນຍັງບໍ່ທັນຄົບຖ້ວນເຊິ່ງມັນຈະເປັນການຊ່ວຍໃຫ້ປະຊາຊົນໄດ້ມີສິດນຳໃຊ້ທີ່ດິນຂອງຕົນເອງຢ່າງສົມບູນ ແລະ ເປັນສິ່ງຢັ້ງຢືນໃນການກູ້ຢືມເງິນເພື່ອເປັນທຶນໃນການທຳການຜະລິດ.

# ບົດທີ 5
# ສະຫລຸບ ແລະ ຂໍ້ສະເໜີ

## 5.1 ສະຫລຸບ

ບ້ານດະເຊັຍນ້ອຍ, ດະເຊັຍໂພນທິນ ເປັນໜູ່ບ້ານໜຶ່ງທີ່ຕັ້ງຢູ່ດິນສ່ວນໜຶ່ງຂອງພູພຽງບໍລິເວນທີ່ຂຶ້ນກັບ ເມືອງເລົ່າງາມ ແຂວງສາລະວັນ ເຊິ່ງຫ່າງຈາກຕົວເມືອງເລົ່າງາມໄປທາງທິດຕາເວັນອອກປະມານ 17 ກິໂລແມັດ, ເຊິ່ງມີເນື້ອທີລວມກັນທັງ 2 ບ້ານປະມານ 3,672 ເຮັກຕາ, ມີພົນລະເມືອງທັງຫມົດ 4,007 ຄົນ, ມີ 855 ຫຼັງຄ່າເຮືອນ, ມີ 925 ຄອບຄົວ, ປະຊາຊົນສ່ວນຫຼາຍແມ່ນເຜົ່າສ່ວຍເຊິ່ງກວມເອົາ 85% ຂອງຊົນເຜົ່າຕ່າງໆ ປະຊາຊົນພາຍໃນບ້ານແມ່ນນັບຖືສາສະຫນາພຸດ, ເຊິ່ງເປັນເຂດພື້ນທີ່ທີ່ມີຄວາມອຸດົມສົມບູນເຫມາະສົມແກ່ການປູກພືດ ແລະການເຮັດກະສິກຳໂດຍສະເພາະແມ່ນການປູກເຂົ້າ , ກາເຟ, ຫມາກແຫນ່ງ, ກ້ວຍ, ຖົ່ວດິນ, ມັນແກວ, ສາລີ ແລະ ພືດຜັກ ຊະນິດຕ່າງໆ. ແຕ່ເຕັກນິກການທຳການຜະລິດຍັງບໍ່ທັນສູງ , ລະດັບການສຶກສາຂອງປະຊາຊົນສ່ວນຫລາຍແມ່ນບໍ່ໄດ້ຮັບການສຶກສາກວມເອົາອັດຕາສ່ວນເຖິງ 65%, ສະນັ້ນ, ປະຊາຊົນສ່ວນໃຫຍ່ຈຶ່ງບໍ່ມີທາງເລືອກໃນການປະກອບອາຊີບປະຊາຊົນສ່ວນໃຫຍ່ຈຶ່ງປະກອບອາຊີບຊາວກະສິກອນເຊິ່ງກວມເອົາ 90%. ລາຍໄດ້ຂອງປະຊາຊົນແມ່ນປະມານ 20,065,000 ກີບ/ປີ. ສ່ວນລາຍຈ່າຍຂອງປະຊາຊົນແມ່ນປະມານ 8,770,000 ກີບ/ປີ. ປະຊາຊົນສ່ວນໃຫຍ່ໃຊ້ດິນໃນການປູກຝັງໂດຍສະເລ່ຍແລ້ວຄົນລະ 3.07 ເຮັກຕາ.

ນອກຈາກນີ້ເຮົາສາມາດສະຫລຸບໄດ້ລາຍຮັບຈາກການຂາຍຜົນຜະລິດກະສິ ກຳກວມເຖິງ 86.4%, ລາຍຮັບຈາກການຂາຍຖົ່ວດິນສະເລ່ຍແລ້ວ 3,440,000 ກີບ/ປີ, ລາຍຮັບຈາກການຂາຍຫມາກກ້ວຍສະເລ່ຍແມ່ນ 9,282,000 ກີບ/ປີ, ລາຍຮັບຈາກການຂາຍກາເຟສະເລ່ຍແມ່ນຄົນລະ 11,871,000 ກີບ/ປີ. ລາຍຮັບຈາກການຂາຍໝາກແໜ່ງ 5,442,000 ກີບ/ປີ. ລາຍຮັບຈາກການຂາຍສາລີສະເລ່ຍແມ່ນ 3,300,000 ກີບ/ປີ. ລາຍໄດ້ຈາກການຂາຍມັນແກວສະເລ່ຍແມ່ນ 3,636,000 ກີບ/ປີ, ຜົນຜະລິດເຂົ້າແມ່ນປະມານ 1.76 ໂຕນ, ແຕ່ຜົນຜະລິດເຂົ້າແມ່ນບໍ່ໄດ້ຂາຍ. ສະນັ້ນຈຶ່ງສາມາດສະຫລຸບໄດ້ມູນຄ່າທັງຫມົດທີ່ເກີດຈາກການນຳໃຊ້ທີ່ດິນແມ່ນປະມານ 41,988,000 ກີບ/ປີ, ແລະ ມູນຄ່າສະເລ່ຍຕໍ່ 1 ເຮັກຕາແມ່ນປະມານ 13,678,000 ກີບ/ເຮັກຕາ. ຕົວເລກດັ່ງກ່າວແມ່ນໄດ້ຈາກການສຳພາດ ແລະ ຕອບແບບສອບຖາມຂອງຜູ້ຕ່າງຫນ້າແຕ່ລະຄົວເຮືອນທີໄດ້ມາໃຫ້ຂໍ້ມູນ ແລະ ຄວາມຮ່ວມມືໃນການລົງໄປເກັບກຳຂໍ້ມູນຢູ່ພາກສະຫນາມເຊິ່ງທັງຫມົດແມ່ນ 220 ຄົນ, ໂດຍອີງໃສຜົນຜະລິດ ແລະ ລາຍໄດ້ທີເຂົາເຈົ້າໄດ້ຮັບຈາກການຂາຍຜົນຜະລິດໃນສົກປີ 2009-2010.

## 5.2 ຂໍ້ສະເໜີ

ຈາກການລົງສຳຫລວດຕົວຈິງໃນຄັ້ງນີ້ພວກນ້ອງໄດ້ຮັບຮູ້ເຖິງບັນຫາຂອງປະຊາຊົນພາຍໃນບ້ານສະນັ້ນຈິ່ງຢາກສະເໜີໃຫ້ລັດຖະບານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າໄປຊ່ວຍແກ້ໄຂເປັນຕົ້ນແມ່ນບັນຫາທາງດ້ານໂຄງລ່າງພື້ນຖານເຊັ່ນວ່າ: ເສັ້ນທາງເຂົ້າບ້ານຄວນມີການປັບປຸງ ແລະ ແກ້ໄຂເພື່ອໃຫ້ມີຄວາມສະດວກສະບາຍໃນການຄົມມະນາຄົມ, ໄຟຟ້າຄວນມີການຈັດສັນໃຫ້ມີຄວາມເປັນລະບຽບເພື່ອໃຫ້ມີຄວາມປອດໄພ , ນ້ຳໃຊ້ຄວນມີການວາງໂຄງລ່າງນ້ຳປະປາເພື່ອໃຫ້ມີນ້ຳໃຊ້ຕະຫລອດປີ , ດ້ານໂທລະຄົມຄົມມະນາຄົມຄວນມີການປັບປຸງ ແລະ ຂະຫຍາຍຕານ່າງບັນດາເຄືອຂ່າຍຕ່າງໆໃຫ້ຄວບຄຸມທົ່ວເຖິງເພື່ອໃຫ້ມີຄວາມສະດວກໃນການຕິດຕໍ່ສື່ສານ . ໂຮງໝໍ, ໂຮງຮຽນ, ສຸກສາລາຄວນມີການປັບປຸງ ແລະ ກໍ່ສ້າງເພື່ອຕອບສະໜອງຄວາມຕ້ອງການໃຫ້ກັບປະຊາຊົນ ເຊິ່ງເປັນສິ່ງສຳຄັນຫຼາຍຕໍ່ກັບການດຳລົງຊີວິດຂອງປະຊາຊົນເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຫຼາຍກ່ວາເກົ່າ.

ລັດຖະບານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຄວນມີການສຳຫລວດຈັດສັນທີ່ດິນຂອບເຂດບ້ານຕໍ່ບ້ານ, ຂອບເຂດດິນທຳການຜະລິດ ແລະ ມີການອອກໃບຕາດິນຖາວອນເພື່ອໃຫ້ປະຊາຊົນມີສິດນຳໃຊ້ທີ່ດິນຂອງຕົນໄດ້ຢ່າງສົມບູນ.

ນອກຈາກສິ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ກໍ່ຄວນຈະມີອົງການ ຫຼື ໜ່ວຍງານຕ່າງໆເຂົ້າໄປຊ່ວຍຄົ້ນຄ້ວາ ແລະ ວິໄຈຊະນິດຂອງດິນແຕ່ລະເຂດວ່າມີຄວາມເໝາະສົມແກ່ການປູກພືດຊະນິດໃດ ແລະ ໃຫ້ຝຶກSອົບຮົມເພື່ອເຜີຍແຜ່ຄວາມຮູ້ໃຫ້ແກ່ປະຊາຊົນໃນການ ນຳໃຊ້ທີ່ດິນຂອງຕົນເອງເພື່ອໃຫ້ເກີດປະສິດທິພາບ ແລະໄດ້ຮັບຜົນປະໂຫຍດສູງສຸດ.

**ເອກະສານອ້າງອີງ**

ຂັດຕິພອນ ແລະ ຄະນະ (2008). "ການປະເມີນມູນຄ່າທາງເສດຖະກິດຂອງບຶງທາດຫຼວງ ແລະ ຜົນການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ " ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

ສິຣາກອນ ແລະ ຄະນະ (2005) "ສຶກສາການປະເມີນມູນຄ່າສິ່ງແວດລ້ອມໃນການອານຸລັກ ອຸດທະຍານແຫ່ງຊາດລຳນ້ຳກົກ" ບົດໂຄງການຈົບຊັ້ນປະລິນຍາຕີ, ມະຫາວິທະຍາໄລຊ່ຽງ ໃຫມ.

ໄຊຍະເດດ ເພັດຈຳປາ ແລະ ຄະນະ (2007) "ສຶກສາມູນຄ່າທາງດ້ານເສດຖະກິດຂອງບຶງ ທາດຫຼວງ ແລະ ຜົນຂອງການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນ "ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

ໄຊມົວ ພ້ອມຄະນະ (2010) "ປັດໃຈທີ່ມີຜົນຕໍ່ການຖາງປ່າເຮັດໄຮ່ " ບົດໂຄງການຈົບຊັ້ນ ປະລິນຍາຕີ, ຄະນະເສດຖະສາດ ແລະ ບໍ ລິຫານທຸລະກິດ, ມະຫາວິທະຍາໄລແຫ່ງ ຊາດ.

ພອນທິບ ວົງຈັນທີ ພ້ອມຄະນະ (2010) "ການປະເມີນທາງດ້ານເສດຖະກິດຂອງປ່າ ສະຫງວນ" ບົດໂຄງການຈົບຊັ້ນປະລິນຍາຕີ, ພາກເສດຖະສາດ, ມະຫາວິທະຍາໄລແຫ່ງຊາດ.

ມະນີພອນ ພ້ອມຄະນະ (2007) "ການປະເມີນປະສິດທິຜົນຂອງການນຳໃຊ້ລະບົບຈະລະຈອນ ແບບເກົ່າ ແລະ ແບບໃຫມ່" ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາ ວິທະຍາໄລແຫ່ງຊາດ.

ວິໄລພອນ ພ້ອມຄະນະ (2010) "ມູນຄ່າຄວາມພໍໃຈຈ່າຍໃນການອະນຸລັກແຫລ່ງປະມົງເຂດຮູ ສະຣົງ ເມືອງໂຂງ ແຂວງຈຳປາສັກ" ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

ນັນທະວັນ ປຣະພາມນະທົນ (2000) "ວິທີສົມມຸດເຫດການໃຫ້ແກ່ການປະເມີນມູນຄ່າຄວາມພໍ ໃຈຈ່າຍເພື່ອອະນຸລັກຊັບພະຍາກອນການປະມົງໃນພື້ນທີ່ຊຸ່ມນ້ຳບຶງລະຫານ, ແຂວງໄຊຍະ ພູມ'' ບົດໂຄງການຈົບຊັ້ນປະລິນຍາຕີ, ມະຫາວິທະຍາໄລຊຽງໃຫມ່.

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ແບບຟອມສຳພາດນາຍບ້ານດະເຊັຍນ້ອຍ.ໃນວັນທີ 14/3/2011 ໂດຍນາຍບ້ານ ທ່ານ ສົມຊາຍ ດວງມີໄຊ.

ຈັນທະຈອນ ພ້ອມຄະນະ (2010) ບົດລາຍງານຜົນໄດ້ຮັບຂອງການເກັບກຳຂໍ້ມູນກ່ຽວກັບການ ເຊົ່າ ແລະ ສຳປະທານທີ່ດິນລັດໃນແຂວງສາລະວັນ ສ ປ ປ ລາວ.

ບົດລາຍງານ ການຈັດຕັ້ງປະຕິບັດ ວຽກງານການສ້າງກຸ່ມບ້ານພັດທະນາຂອງກຸ່ມບ້ານດະເຊັຍ ໃຫຍ່ສົກປີ 2005-2006 ແລະ ທິດທາງແຜນການ 2006-2007.

# ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງສຶກສາທິການ
ມະຫາວິທະຍາໄລແຫ່ງຊາດ
ຄະນະເສດຖະສາດແລະບໍລິຫານທຸລະກິດ

ເລກທີ :1146...ຄສບ/10
ວັນທີ :..24..DEC..2010

**ໃບນຳສົ່ງ**

<u>ເຖິງ:</u> ຫົວໜ້າໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

<u>**ເລື່ອງ:**</u> ນຳສົ່ງອາຈານ ແລະ ນັກສຶກສາເຂົ້າຮ່ວມເຮັດວຽກຄົ້ນຄ້ວານຳໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

- ອີງຕາມ ໃບສະເໜີຂອງທ່ານຫົວໜ້າໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດສະບັບເລກທີ 156/ບຈສ10, ລົງວັນທີ 6/12/2010

ຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ຂໍນຳສົ່ງອາຈານ ແລະ ນັກສຶກສາເຂົ້າຮ່ວມເຮັດວຽກຄົ້ນຄ້ວານຳໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດລາຍລະອຽດດັ່ງລຸ່ມນີ້ :

**ຫົວຂໍ້** :ການປະເມີນມູນຄ່າທີ່ດິນເຂດບ້ານດະເຊຍໂພນຫີນ,ດະເຊຍນ້ອຍ ແລະ ບ້ານນອນແທ້ເມືອງເລົ່າງາມ ແຂວງສາລະວັນ

**ຊື່ ແລະ ນາມສະກຸນນັກສຶກສາ : ທ້າວ ສົມຄິດ ອິນທະພອນ ລະຫັດ NQ 0154/06**
**ທ້າວ ພູສະໝິງ ເທບພິທັກ ລະຫັດ QF 0232/06**

**ຊື່ ແລະ ນາມສະກຸນອາຈານທີ່ປຶກສາ : ທ່ານ ຮສ ຫຼ້າວັນ ວົງຄຳສານ**
**ອາຈານຜູ້ຊ່ວຍ ທ່ານ ອຈ ສົມນັກ ຍອດຮັກສາ**

ເຊິ່ງເປັນ ອາຈານ ແລະ ນັກສຶກສາທີ່ຢູ່ໃນພາກເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ເຂົ້າຮ່ວມເຮັດວຽກຄົ້ນຄ້ວາຂອງໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ດັ່ງນັ້ນ, ຈິ່ງສະເໜີມາຍັງທ່ານເພື່ອຊາບ.

**ຄະນະບໍດີ**

ຮສ. ແສງຈັນ ຈັນທະເສນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑❖໙໙໙໙

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ

ຫ້ອງການ

ເລກທີ 64...../ອຄດຊ,ຫກ

ນະຄອນຫຼວງວຽງຈັນ,ວັນທີ 25 FEB 2011

## ແຈ້ງການ

ເຖິງ : ທ່ານ ຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳ ແຂວງສາລະວັນ

ເລື່ອງ: ນັກສຶກສາຈາກມະຫາວິທະຍາໄລແຫ່ງຊາດຈະລົງມາຝຶກງານຢູ່ແຂວງຂອງທ່ານ

- ອີງຕາມໃບສະເໜີຂອງມະຫາວິທະຍາໄລແຫ່ງຊາດເລກທີ 0207/ຄສວ.11 ລົງວັນ ທີ31/12011.
- ອີງຕາມບົດບັນທຶກຊ່ວຍຈຳລະຫວ່າງ ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ແລະ ອົງການບ້ານຈຸດສຸມສາກົນ VFI ລົງວັນທີ 05 ພະຈິກ 2009.
- ອີງຕາມແຜນວຽກ ແລະ ບັນດາກິດຈະກຳເຄື່ອນໄຫວຂອງໂຄງການບ້ານຈຸດສຸມສາກົນ VFI ປະຈຳສົກປີ 2010-2011

ຫ້ອງການອົງການຄຸ້ມຄອງທີ່ດິນແຫ່ງຊາດຂໍຖືເປັນກຽດແຈ້ງການມາຍັງທ່ານຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳແຂວງສາລະວັນຊາບວ່າ: ອີງຕາມຫຼັກສູດຂອງມະຫາວິທະຍາໄລແຫ່ງຊາດວ່າດ້ວຍການອະນຸມັດໃຫ້ນັກສຶກສາຈາກມະຫາວິທະຍາໄລແຫ່ງຊາດ ເກັບກຳຂໍ້ມູນເພື່ອສົມທຽບທິດສະດີ ແລະ ພຶດຕິກຳຕົວຈິງໃນລະຫວ່າງວັນທີ 15/02-15/04/2011 ເຊິ່ງຄ່າໃຊ້ຈ່າຍໃນທັງໝົດແມ່ນອົງການບ້ານ ຈຸດສຸມສາກົນເປັນຝ່າຍຮັບຜິດຊອບ, (ລາຍລະອຽດແມ່ນຂັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ

ຫົວໜ້າຫ້ອງການ

ບຸນຕີ ເດດວົງສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------00000----------

ເມືອງເລົ່າງາມ: ເລກທີ 51 / ຫປຄມ

ຫ້ອງວ່າການປົກຄອງເມືອງ: ລົງວັນທີ 11 MAR 2011

## ໃບສະເໜີ

ເຖິງ: [illegible], [illegible], [illegible], [illegible] [illegible] 2

ເລື່ອງ: ນັກສຶກສາ ວິທະຍາໄລແຫ່ງຊາດ ຈະລົງເກັບກຳຂໍ້ມູນ

- ອີງຕາມ: [illegible] ສະບັບເລກທີ 434/[illegible]. 11/3/2011

### ຫ້ອງວ່າການປົກຄອງເມືອງໄດ້ອອກໃບສະເໜີໃຫ້ແກ່:

ທ່ານ: [illegible] ຫ້ອງການ [illegible]

ມີຈຸດປະສົງ: ລົງເກັບກຳຂໍ້ມູນກ່ຽວກັບ ທີ່ດິນ ແລະ ຊັບພະຍາກອນທຳມະຊາດ [illegible] ນັກສຶກສາ ວິທະຍາໄລແຫ່ງຊາດ ຈຳນວນ 5 ສະຫາຍ.

ໃບສະເໜີດັ່ງກ່າວ ກຳນົດເລີ່ມແຕ່ວັນທີ 12/3/2011 ເຖິງວັນທີ 15/4/2011

ດັ່ງນັ້ນ, ຈຶ່ງໄດ້ອອກໃບສະເໜີສະບັບນີ້ ເພື່ອເປັນບ່ອນອີງ ຖ້າຫາກພາກສ່ວນໃດເຫັນໃບສະເໜີສະບັບນີ້ແລ້ວ ຂໍຈົ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ກ່ຽວດ້ວຍ.

ຫົວໜ້າຫ້ອງວ່າການປົກຄອງເມືອງເລົ່າງາມ:

[illegible]

## ໃບຕິດຕາມນັກສຶກສາ

ຊື່ ແລະ ນາມສະກຸນ: ........................................ ໜ້າທີ່ຮັບຜິດຊອບ: ........................................

ບ່ອນປະຈຳການ: ........................................ ໂທ: ........................................

| ວັນທີ | ໜ້າວຽກ | ສະຖານທີ່ (ບ້ານ) | ຈຳນວນມື້ | ເຊັນນາຍບ້ານ |
|---|---|---|---|---|
| 5.3.2011 | ເດີນທາງ ແຕ່ວຽງຈັນ - ສາລະວັນ | | 1 | [signature] |
| 6 7.3.2011 | ເຂົ້າພົບຮອງຫົວໜ້າ ຫ້ອງການທີ່ດິນແຂວງ ສາລະວັນ (ທ່ານ [illegible]) | | 2 | |
| 8-9.3.2011 | ກະກຽມເອກະສານ ແລະ ເດີນທາງເຂົ້າມາພັກຢູ່ [illegible] | | 2 | [signature] |
| 10.3.2011 | ([illegible]) ເຂົ້າພົບຫົວໜ້າຫ້ອງການ ຄຸ້ມຄອງທີ່ດິນເມືອງເລົ່າງາມ | | 1 | |
| 11.3.2011 | ເຂົ້າຮ່ວມອອກແຮງງານ [illegible] ທີ່ດິນ ເມືອງເລົ່າງາມ | | 1 | [signature] |
| 12.3.2011 | ເຂົ້າພົບພໍ່ບ້ານ [illegible] | | 6 | [signature] |
| | [illegible] | | | |
| 18.3.2011 | ເຂົ້າພົບພໍ່ບ້ານ [illegible] | | 3 | [signature] |
| 21.3.2011 | ເຂົ້າສົ່ງບົດລາຍງານ ຫ້ອງການ [illegible] ທີ່ດິນ ເມືອງເລົ່າງາມ | | 1 | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |

ວັນທີ

ຜູ້ປະສານງານອົງປະກອບ 2

Viseth 20 ປ.

ວັນທີ

ຜູ້ລາຍງານ

ຕາຕະລາງທີ່ 34: ມູນຄ່າທີ່ໄດ້ຮັບຈາກການຂາຍຜົນຜະລິດກະສິກຳຂອງກຸ່ມຕົວຢ່າງ

| ລຳດັບ | ຜົນຜະລິດ | ມູນຄ່າສະເລ່ຍ(ກີບ/ປີ)) | ສະເລ່ຍ(ກີບ/ເຮັກຕາ) |
|---|---|---|---|
| 1 | ກາເຟ | 11,871,000 | 3,867,000 |
| 2 | ຫມາກກ້ວຍ | 9,282,000 | 3,023,450 |
| 3 | ຫມາກແຫນ່ງ | 5,442,000 | 1,773,000 |
| 4 | ເຂົ້າ | 5,017,000 | 1,634,000 |
| 5 | ຖົ່ວດິນ | 3,440,000 | 1,121,000 |
| 6 | ມັນແກວ | 3,636,000 | 1,185,000 |
| 7 | ສາລີ | 3,300,000 | 1,075,000 |
| ທັງຫມົດ | | 41,988,000 | 13,678,000 |

ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ, 2011

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

ມະຫາວິທະຍາໄລແຫ່ງຊາດ

ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ

# ບົດລາຍງານ

ຮຽນ: ທ່ານຫົວໜ້າຫ້ອງວ່າການປົກຄອງເມືອງເລົ່າງາມ ແຂວງສາລະວັນທີ່ເຄົາລົບ ແລະ ນັບຖື.

ຮຽນ: ທ່ານຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳເມືອງ ເລົ່າງາມ ແຂວງສາລະວັນທີ່ເຄົາລົບ ແລະ ນັບຖື.

ຮຽນ: ທ່ານຜູ້ປະສານງານທາງໂຄງການ ເຄືອຂ່າຍຂໍ້ມູນທີ່ດິນ Rigths-LINK ສູນພາກສະໜາມ ເມືອງເລົ່າງາມທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ລົງເກັບກຳຂໍ້ມູນກ່ຽວກັບການປະເມີນມູນຄ່າທີ່ເກີດຈາກການນຳໃຊ້ທີ່ດິນ ເພື່ອປະກອບໃສ່ບົດວິທະຍານິພົນຂອງນັກສຶກສາມະຫາວິທະຍາໄລແຫ່ງຊາດ. ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ພາກວິຊາເສດຖະສາດ.

- ອີງຕາມນະໂຍບາຍການນຳສົ່ງຂອງມະຫາວິທະຍາໄລແຫ່ງຊາດຄະນະເສດຖະສາດ ແລະ ບໍລິຫານທຸລະກິດລົງວັນທີ່ 15/02/2011.
- ອີງຕາມຂໍ້ຕົກລົງຂອງສູນຄົ້ນຄ້ວາຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ.
- ອີງຕາມຂໍ້ສະເໜີຂອງຫ້ອງການເມືອງເລົ່າງາມ, ແຂວງສາລະວັນ.

➢ ຊື່ ແລະ ນາມສະກຸນ: ທ້າວ ພູສະໝິງ ເທບພິທັກ QF 0232/06
ນາງ ຄຳມີ ສີປະເສີດ QF 0094/06
ທ້າວ ສົມຄິດ ອິນທະພອນ NQ 0154/06

➢ ສະຖານທີ່ລົງເກັບຂໍ້ມູນ: ບ້ານດະເຊັຍນ້ອຍ ແລະ ບ້ານດະເຊັຍໂພນທັນ

ການລົງເກັບກຳຂໍ້ມູນໃນຄັ້ງນີ້ເປັນໂຄງການການຮ່ວມມືລະຫວ່າງ ໂຄງການ ເຄືອຂ່າຍຂໍ້ມູນທີ່ດິນ Rigth-LINK ກັບ ສູນການຄົ້ນຄ້ວາຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະ

ຊາດ. ເປັນໂຄງການທີ່ໃຫ້ນັກສຶກສາປີສຸດທ້າຍເຂົ້າມາເກັບກໍາຂໍ້ມູນ , ເພື່ອເປັນການຊອກຫາປະສົບການຕົວຈິງຈາກສະຖານທີ່ລົງຝຶກງານ ແລະ ເພື່ອຫາຄວາມຮູ້ໃ ໝ່ໆພ້ອມເປັນການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຄົນທີ່ມີຄວາມຮູ້ຄວາມສາມາດ ແລະ ຄວາມຊໍານິຊໍານານໃນວຽກງານວິຊາສະເພາະອັນເປັນການຮັບປະກັນວຽກເຮັດງານທໍາໃນອະນາຄົດ.

ພວກຂ້າພະເຈົ້ານັກສຶກສາຄະນະເສດຖະສາດ ແລະ ບໍລິຫານທຸລະກິດຂໍລາຍງານເລື່ອງການລົງເກັບກໍາຂໍ້ມູນຢູ່ຕາມບ້ານ, ຕາມອົງການຈັດຕັ້ງທີ່ກ່ຽວຂ້ອງແມ່ນໄດ້ຮັບຜົນສໍາເລັດເປັນທີ່ຮຽບຮ້ອຍແລ້ວ.

## I. ຈຸດປະສົງການລົງເກັບກໍາຂໍ້ມູນ

- ເພື່ອເປັນການລວບລວມຂໍ້ມູນເຂົ້າໃນການຂຽນບົດຈົບຊັ້ນ.
- ເພື່ອຮຽນຮູ້ວິຊາການ ແລະ ເຕັກນິກການນໍາໃຊ້ເຂົ້າໃນວຽກງານຕົວຈິງ.
- ເພື່ອເປັນການເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມອົດທົນ, ສ້າງຄວາມໜັກແໜ້ນທາງດ້ານວິຊາຊີບ, ການເມືອງ.
- ເພື່ອເປັນການປະກອບສ່ວນເຂົ້າໃນບົດວິໄຈຂອງໂຄງການ ເຄື່ອຂ່າຍຂໍ້ມູນທີ່ດິນ.
- ເພື່ອເປັນການຖອດຖອນບົດຮຽນ.

## II. ລາຍລະອຽດກ່ຽວກັບແຜນວຽກ ແລະ ວິທີ່ຈັດຕັ້ງປະຕິບັດ

ໃນການລົງເກັບກໍາຂໍ້ມູນຄັ້ງນີ້ແມ່ນໄດ້ລົງຢູ່ 2 ບ້ານເປົ້າໝາຍຄື: ບ້ານດະເຊັຍນ້ອຍ ແລະ ດະເຊັຍໂພນທັນ, ເຊິ່ງການລົງເກັບກໍາຂໍ້ມູນໂດຍໃຊ້ເວລາທັງໝົດ 7 ວັນ ບ້ານດະເຊັຍນ້ອຍ ເລີ່ມແຕ່ວັນທີ່ 12/03/2011 – 16/03/2011 ສ່ວນບ້ານດະເຊັຍໂພນທັນແມ່ນ 16/03/2011 – 18/03/2011 ຈຶ່ງສ□າເລັດການລົງເກັບກ□າຂໍ້ມູນຢູ່ພາກສະໜາມ.

ກ່ອນການລົງເກັບກໍາຂໍ້ມູນໃນ 2 ບ້ານເປົ້າໝາຍພວກເຮົາໄດ້ມີແຜນການດັ່ງນີ້:

- ກະກຽມເອກະສານທຸກຢ່າງທີ່ພົວພັນເຖິງການລົງເກັບກໍາຂໍ້ມູນໃນບ້ານເປົ້າໝາຍ.
- ເຂົ້າພົບທີ່ດິນແຂວງຈາກນັ້ນເຂົ້າພົບທີ່ດິນເມືອງ.
- ລົງເກັບກໍາຂໍ້ມູນຕົວຈິງຢູ່ 2 ບ້ານໂດຍມີການປະສານງານກັບອົງການຈັດຕັ້ງບ້ານ.
- ໃຊ້ແບບສອບຖາມສໍາພາດຕົວຈິງກັບປະຊາຊົນແຕ່ລະຄົວເຮືອນພ້ອມທັງສໍາພາດນາຍບ້ານ.
- ກວດກາ ແລະ ລວບລວມຂໍ້ມູນ.

- ຂຽນເປັນບົດລາຍງານ.

## III. ຜົນໄດ້ຮັບຂອງຂໍ້ມູນ

- ໄດ້ຂໍ້ມູນທົ່ວໄປຂອງບ້ານເປັນຕົ້ນແມ່ນຈຳນວນປະຊາກອນ, ລາຍຮັບ, ລາຍຈ່າຍຂອງປະຊາຊົນ.
- ເນື້ອທີ່ທັງຫມົດຂອງບ້ານ, ຂອບເຂດຊາຍແດນບ້ານ, ເນື້ອທີ່ທຳການຜະລິດກະສິກຳ.
- ອັດຕາສ່ວນຮ້ອຍຂອງລາຍຮັບ, ລາຍຈ່າຍຂອງປະຊາຊົນທີ່ນຳໃຊ້ໃນການຜະລິດ, ການດຳລົງຊີວິດ.
- ໄດ້ຮຽນຮູ້ວິຖີການດຳລົງຊີວິດຂອງປະຊາຊົນ, ຮີດຄອງປະເພນີ.
- ໄດ້ເຂົ້າໃຈເຖິງບັນຫາ ແລະ ຂໍ້ສະເໜີຂອງປະຊາຊົນພາຍໃນບ້ານ.

## IV. ສະຫຼຸບຈຸດດີ - ຈຸດອ່ອນ

➢ **ດ້ານດີ.**

- ມີຄວາມສະດວກໃນການລົງເກັບກຳຂໍ້ມູນເພາະມີການຈັດສົ່ງຂອງໂຄງການໄປເຖິງບ້ານເປົ້າໝາຍ.
- ທຸກໆອົງການຈັດຕັ້ງຂອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານແມ່ນໃຫ້ຄວາມຮ່ວມມື ແລະ ຊ່ວຍເຫລືອເປັນຢ່າງດີ.
- ການເກັບກຳຂໍ້ມູນແມ່ນທົ່ວເຖິງ ແລະ ສຳເລັດໃນໄລຍະເວລາອັນສັ້ນ.

➢ **ດ້ານອ່ອນ.**

- ການໃຫ້ຂໍ້ມູນຂອງປະຊາຊົນແມ່ນບໍ່ທັນລະອຽດເທື່ອ, ຍັງມີການປົກປິດຂໍ້ມູນທີ່ແທ້ຈິງ.
- ຍັງມີບາງຈຳນວນຂອງຜູ້ທີ່ຖືກສຳພາດບໍ່ທັນເຂົ້າໃຈພາສາລາວດີເທົ່າທີ່ຄວນ .
- ທີ່ດິນຍັງບໍ່ທັນມີການຈັດສັນສະນັ້ນມັນຈຶ່ງເປັນບັນຫາໃຫ້ປະຊາຊົນຍັງບໍ່ຮູ້ເນື້ອທີ່ດິນທີ່ແທ້ຈິງຂອງຕົນ.
- ມີຄວາມຫຍຸ້ງຍາກໃນການຕິດຕໍ່ກັບອົງການທີ່ກ່ຽວຂ້ອງເພາະສັນຍານໂທລະສັບບໍ່ດີປານໃດ.

# ແບບຟອມສຳພາດນາຍບ້ານ

I. ຂໍ້ມູນທົ່ວໄປ.

ວັນທີ່ເກັບກຳຂໍ້ມູນ................/.................../..................

ເວລາ......................

ຊື່ບ້ານ.................................... ເມືອງເລົ່າງາມ ແຂວງສາລະວັນ

ຊື່ນາຍບ້ານ........................................

ຈຳນວນປະຊາກອນທັງໝົດ..........................ຄົນ, ຍິງ............ຄົນ.

- ຈຳນວນຄົວເຮືອນທັງໝົດ........................, ຈຳນວນຄອບຄົວທັງໝົດ..............
- ບ້ານຂອງທ່ານມີໂຮງຮຽນຈັກຫລັງ.......................................................
- ບ້ານຂອງທ່ານມີໂຮງໝໍຈັກແຫ່ງ..........................................................
- ບ້ານຂອງທ່ານມີສຸກສາລາຈັກບ່ອນ........................................................
- ບ້ານຂອງທ່ານມີຈັກຄອບຄົວທີ່ໄດ້ນຳໃຊ້ນ້ຳປະປາ......................................

  ກວມຈັກເປີເຊັນຂອງຄອບຄົວທັງໝົດ....................................................
- ບ້ານຂອງທ່ານມີຈັກຄອບຄົວທີ່ໄດ້ນຳໃຊ້ໄຟຟ້າ...........................................

  ກວມຈັກເປີເຊັນຂອງຄອບຄົວທັງໝົດ....................................................
- ເສັ້ນທາງການຄົມມະນາຄົມເປັນ

  ແນວໃດ...............................................................................

  ...........................................................................................

  ........................................................................................
- ການສື່ສານເປັນແນວໃດ...............................................................

  ...........................................................................................

  ...........................................................................................

  ...........................................................................................

  ...............

II. ຊົນເຜົ່າ.

| ລຳດັບ | ຊົນເຜົ່າ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| ອື່ນໆ | | | |

III. ສາດສະໜາ.

| ລຳດັບ | ສາດສະໜາ | ຈຳນວນ(ຄົນ) | ສ່ວນຮ້ອຍ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| ອື່ນໆ | | | |

IV. ອົງການຈັດຕັ້ງຂອງບ້ານ.

| ລຳດັບ | ລາຍລະອຽດ | ຄະນະ | | ສະມະຊິກທັງໝົດ | |
|---|---|---|---|---|---|
| | | ຈຳນວນທັງໝົດ | ຍິງ | ຈຳນວນ | ຍິງ |
| 1 | ອົງການຊາວໜຸ່ມ | | | | |
| 2 | ສະຫະພັນແມ່ຍິງ | | | | |
| 3 | ແນວໂຮມ | | | | |
| 4 | ປ້ອງກັນ | | | | |
| ອື່ນໆ | | | | | |

V. ທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

5.1. ຢູ່ໃນບ້ານຂອງທ່ານໄດ້ມີການຈັດຕັ້ງປະຕິບັດໂຄງການເຫລົ່ານີ້ບໍ່ ?

- ໂຄງການສ້າງ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດ ☐ ບໍ່ມີ. ☐ ມີ.
- ໂຄງການຄຸ້ມຄອງປ່າໄມ້ບ້ານ ☐ ບໍ່ມີ. ☐ ມີ.
- ໂຄງການມອບດິນ-ມອບປ່າ ☐ ບໍ່ມີ. ☐ ມີ.
- ແຜນການຢຸດຕິການຖາງປ່າເຮັດໄຮ່ ☐ ບໍ່ມີ. ☐ ມີ.

5.2. ເນື້ອທີ່ດິນຂອງບ້ານ.

- ບ້ານທ່ານມີເນື້ອທີ່ດິນທັງຫມົດເທົ່າໃດ?..............................................

ເຮັກຕາ.

| ລຳດັບ | ປະເພດດິນ | ເນື້ອທີ່(ເຮັກຕາ) | ສ່ວນຮ້ອຍ% |
|---|---|---|---|
| 1 | ດິນປຸກສ້າງ | | |
| 2 | ດິນກະສິກຳ | | |
| 3 | ດິນປ່າໄມ້ | | |
| 4 | ດິນບໍລິເວນນ້ຳ | | |
| 5 | ດິນອຸດສາຫະກຳ | | |
| 6 | ດິນຄົມມະນະຄົມ | | |
| 7 | ດິນວັດທະນະທຳ | | |
| 8 | ດິນປ້ອງກັນຄວາມສະຫງົບ | | |
| ອື່ນໆ | | | |

5.3. ການຈັດແບ່ງເນື້ອທີ່ດິນປ່າໄມ້.

| ລຳດັບ | ປະເພດປ່າ | ເນື້ອທີ່(ເຮັກຕາ) | ສ່ວນຮ້ອຍ% |
|---|---|---|---|
| 1 | ປ່າຜະລິດ(ຊົມໃຊ້) | | |
| 2 | ປ່າສະຫງວນ | | |
| 3 | ປ່າປ້ອງກັນ | | |
| 4 | ປ່າຟື້ນຟູ | | |
| 5 | ປ່າຊຸດໂຊມ | | |
| 6 | ປ່າຊ້າ | | |
| ອື່ນໆ | | | |

VI. ລາຍຮັບຂອງປະຊາຊົນໃນບ້ານ.

ລາຍຮັບສະເລ່ຍຕໍ່ປີຂອງປະຊາຊົນໃນບ້ານແມ່ນເທົ່າໃດ ?..............................................

6.1. ລາຍຮັບລວມຈາກການຂາຍຜົນຜະລິດກະສິກຳ.

| ລຳດັບ | ລາຍລະອຽດ | ເນື້ອທີ່ (ເຮັກຕາ) | ຜົນຜະລິດທີ່ ໄດ້ຮັບ(ກິໂລ) | ມູນຄ່າ(ກີບ) | ສ່ວນຮ້ອຍ% |
|---|---|---|---|---|---|
| 1 | ເຂົ້າ | | | | |
| 2 | ສາລີ | | | | |
| 3 | ຜັກຊະນິດຕ່າງໆ | | | | |
| 4 | ຊາ | | | | |
| 5 | ກາເຟ | | | | |
| 6 | ຫມາກກ້ວຍ | | | | |
| 7 | ຫມາກແຫນ່ງ | | | | |
| 8 | ຖົ່ວດິນ | | | | |
| 9 | ຢາສູບ | | | | |
| ອື່ນໆ | | | | | |

6.2. ລາຍຮັບຈາກດ້ານອື່ນໆ.

| ລຳດັບ | ແຫລ່ງລາຍຮັບ | ມູນຄ່າ(ກີບ) | ສ່ວນຮ້ອຍ% |
|---|---|---|---|
| 1 | ການຄ້າຂາຍ | | |
| 2 | ການທ່ອງທ່ຽວ-ບໍລິການ | | |
| 3 | ຂາຍເຄື່ອງປ່າຂອງດົງ | | |
| 4 | ຂາຍສັດລ້ຽງ | | |
| 5 | ຂາຍເຄື່ອງຫັດຖະກຳ | | |
| 6 | ຄ່າແຮງງານ | | |
| ອື່ນໆ | | | |

VII. ການປະກອບອາຊີບຂອງປະຊາຊົນພາຍໃນບ້ານ.

| ລຳດັບ | ອາຊີບ | ສ່ວນຮ້ອຍ |
|---|---|---|
| 1 | ພັກນັກງານລັດ | |
| 2 | ເຮັດນາ | |
| 3 | ເຮັດໄຮ່ | |
| 4 | ເຮັດສວນ | |
| 5 | ລ້ຽງສັດ | |
| 6 | ຄ້າຂາຍ | |
| 7 | ເຮັດຫັດຖະກຳ | |
| 8 | ກຳມະກອນ | |
| ອື່ນໆ | | |

# ແບບສອບຖາມ

ພວກຂ້າພະເຈົ້າ ນັກສຶກສາຄະນະເສດຖະສາດ ແລະ ບໍລິຫານທຸລະກິດມີຈຸດປະສົງຢາກລົງເກັບກໍາຂໍ້ມູນກ່ຽວກັບການປະເມີນມູນຄ່າທີ່ດິນທີ່ມີຜົນກະທົບຕໍ່ກັບເສດຖະກິດ -ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນບ້ານ .........ເມືອງ...........ແຂວງ..........., ເພື່ອປະກອບເຂົ້າໃນໂຄງການຂຽນບົດຈົບຊັ້ນປະລິນຍາຕີຂອງພວກຂ້າພະເຈົ້າ . ພວກຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າຈະໄດ້ຮັບຄວາມຮ່ວມມືຈາກທ່ານໃນການຕອບແບບສອບຖາມຂອງພວກຂ້າພະເຈົ້າ ແລະ ຂໍໃຫ້ຕອບຕາມຄວາມເປັນຈິງ. ເຊິ່ງທຸກຄໍາຕອບຈະຖືເປັນຄວາມລັບ ແລະ ບໍ່ມີຜົນກະທົບໃດໆຕໍ່ທ່ານ.

1. ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ.

1.1. ສະມາຊິກໃນຄອບຄົວ

| ລໍາດັບ | ສາຍພົວພັນ | ອາຍຸ | ເພດ | ການສຶກສາ | ສາສະໜາ | ຊົນເຜົ່າ |
|---|---|---|---|---|---|---|
| 1 | | | | | | |
| 2 | | | | | | |
| 3 | | | | | | |
| 4 | | | | | | |
| 5 | | | | | | |
| 6 | | | | | | |
| 7 | | | | | | |

1.2. ສະພາບທົ່ວໄປຂອງຄົວເຮືອນ.

- ທ່ານມີໄຟ້ານໍ້າ ແລະ ປະປາໃຊ້ຫລືບໍ່ ?

  ☐ ບໍ່ມີ. ☐ ມີ. ☐ ບໍ່ມີທັງສອງ.

ຖ້າບໍ່ມີທ່ານໃຊ້ນໍ້າ ແລະ ໄຟຟ້າຈາກແຫລ່ງໃດ ?..........................................................

.......................................................................................................

- ສະພາບຖະຫນົນຫນົນຫາບ້ານຂອງທ່ານແມ່ນແນວໃດ ?

☐ ຖະຫນົນປູຢາງ. ☐ ຖະຫນົນດິນແດງ. ☐ ຖະຫນົນປູຢາງແຕ່ເປ່ເພ.
☐ ຖະຫນົນດິນແດງແຕ່ເປ່ເພ. ☐ ຖະຫນົນເປັນຫີນແຮ່. ☐ ບໍ່ມີຖະໜົນເຂົ້າ

- ສະພາບທາງດ້ານສຸຂະອະນາໄມ.

| ລາຍລະອຽດ | ບໍ່ມີ | ມີ |
|---|---|---|
| ທ່ານມີຫ້ອງນ້ຳມາດຕະຖານໃຊ້ຫລືບໍ່ | | |
| ທ່ານມີການຈັດສັນສິ່ງເສດເຫຼືອຈາກຄົວເຮືອນຫຼືບໍ່ | | |

2. ສະພາບທາງດ້ານລາຍໄດ້.

2.1. ລາຍຮັບຂອງຄອບຄົວ.

ໂດຍສະເລ່ຍແລ້ວເດືອນຫນຶ່ງຄອບຄົວຂອງທ່ານມີລາຍຮັບຫລາຍປານໃດ ?

..........................................................................................................ກີບ

2.2. ຄອບຄົວຂອງທ່ານມີລາຍຮັບມາຈາກໃສ ?

ເຊິ່ງເລກ 1 ໝາຍເຖິງແຫຼ່ງລາຍຮັບທີ່ລາຍທີ່ສຸດ ສ່ວນເລກອື່ນໆແມ່ນຫຼຸດລົງມາຕາມລຳດັບ.

| ລຳດັບ | ແຫລ່ງລາຍຮັບ | ລາຍລະອຽດ | ມູນຄ່າ(ກີບ) |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| 5 | | | |
| 6 | | | |

2.3. ລາຍຈ່າຍຂອງຄອບຄົວ.

ໂດຍສະເລ່ຍແລ້ວພາຍໃນເດືອນໜຶ່ງຄອບຄົວຂອງທ່ານມີລາຍຈ່າຍຫລາຍປານໃດ ?
…………..………………………………………………………………….ກີບ

2.4. ທ່ານໄດ້ໃຊຈ່າຍເພື່ອຫຍັງ ?

ຈັດລຽງເລກ 1 ແມ່ນການໃຊ້ຈ່າຍຫລາຍທີ່ສຸດ ສ່ວນເລກອື່ນແມ່ນໃຊ້ຈ່າຍຫລຸດລົງຕາມລຳດັບ.

| ລຳດັບ | ການໃຊ້ຈ່າຍ(ບອກລາຍລະອຽດ) | ມູນຄ່າ(ກີບ) |
|---|---|---|
| 1 | | |
| 2 | | |
| 3 | | |
| 4 | | |
| 5 | | |

2.5. ການປະກອບອາຊີບຂອງສະມາຊິກໃນຄອບຄົວຂອງທ່ານ.

| ລຳດັບ | ສາຍພົວພັນ | ອາຊີບ | ລາຍຮັບ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| 5 | | | |

2.6. ສະພາບການນຳໃຊ້ດິນ.

- ທ່ານມີດິນຈັກເຮັກຕາ………………………………………………

- ທ່ານມີດິນເຊົ່າຈັກເຮັກຕາ……………………………………………….
- ຖ້າທ່ານຂາຍດິນຂອງທ່ານທ່ານຈະຂາຍໃນລາຄາເທົ່າໃດຕໍ່ຕາ
  ແມັດ…………………………………………….........................ກີບ/ຕາແມັດ
- ຖ້າທ່ານໃຫ້ຄົນເຊົ່າ ຫລື ສຳປະທານໃນໄລຍະເວລາ 1ປີ ທ່ານຈະໄລ່ມູນຄ່າເທົ່າ
  ໃດ....................................................................ກີບ
- ໃນດິນຈຳນວນນີ້ທ່ານໃຊ້ເຮັດການກະເສດເທົ່າໃດ?.....................................
- ຄອບຄົວຂອງທ່ານມີໜອງປາບໍ່ ?

  ☐ ມີ ☐ ບໍ່ມີ

  ຖ້າມີທ່ານໄດ້ມີລາຍຮັບຫລາຍປານໃດຈາກການຂາຍປາໃນໜຶ່ງ
  ປີ………………………………………………………………….ກີບ
- ທ່ານເຮັດການກະເສດປູກພືດຫຼາຍເທົ່າໃດ ?

  ☐ ລະດູແລ້ງ ☐ ລະດູຝົນ
- ທ່ານປູກເຂົ້າໃນລະດູໃດແດ່ ?

  ☐ ລະດູແລ້ງ ☐ ລະດູຝົນ
- ທົ່ງນາທ່ານກ້ວາງປານໃດ ?………………………………………………
- ໃນປີ 1 ທ່ານໄດ້ຜົນຜະລິດຫລາຍປານໃດ?...........................................
- ໃນການປູກເຂົ້າທ່ານໄດ້ຂາຍຜົນຜະລິດບໍ່?

  ☐ ຂາຍ. ☐ ບໍ່ຂາຍ.
- ໃນປີໜຶ່ງທ່ານໄດ້ຂາຍຫຼາຍປານໃດ ?…………………………………….
- ທ່ານໄດ້ຂາຍໃນລາຄາເທົ່າໃດ ?........................................................
- ໃນການເຮັດກະສິກຳທ່ານມີຊົນລະປະທານບໍ່ ?

  ☐ ບໍ່ມີ ☐ ມີ

| ນອກຈາກການປູກເຂົ້າແລ້ວທ່ານຍັງປູກພືດຫຍັງອີກແດ່ | | ໃນປີຫນຶ່ງທ່ານໄດ້ຮັບຜົນຜະລິດຫລາຍປານໃດ | | ທ່ານຂາຍໃນລາຄາຫລາຍປານໃດ ກີບ/ກິໂລ | |
|---|---|---|---|---|---|
| | | ຈຳນວນ | ກິໂລ | ຈຳນວນ | ກີບ/ກິໂລ |
| ສາລີ | ☐ | | | | |
| ພືດຜັກຊະນິດຕ່າງໆ | ☐ | | | | |
| ຖົ່ວດິນ | ☐ | | | | |
| ຫມາກກ້ວຍ | ☐ | | | | |
| ຊາ | ☐ | | | | |
| ກາເຟ | ☐ | | | | |
| ຫມາກແຫນ່ງ | ☐ | | | | |
| ຢາສູບ | ☐ | | | | |
| ຢາງພາລາ | ☐ | | | | |
| ອື່ນໆ | ☐ | | | | |
| ບໍ່ມີຫຍັງ | ☐ | | | | |

- ທ່ານຢາກໃຫ້ມີການຈັດສັນທີ່ດິນໃນໝູ່ບ້ານຂອງທ່ານບໍ່ ? ☐ ບໍ່ມີ ☐ ມີ
  ຖ້າມີທ່ານຢາກໃຫ້ມີການຈັດສັນຄືແນວໃດ ? ☐ ການຈັດສັນເຂດບ້ານຕໍ່ບ້ານໃຫ້ຊັດເຈນ. ☐ ຈັດສັນທຳການຜະລິດ. ☐ ໃບຕາດິນຖາວອນ.

2.7. ທ່ານມີຂໍ້ສະເຫນີໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງເພື່ອຊ່ວຍແກ້ໄຂບັນຫາ ?.................................................................................

.........................................................................................

.........................................................................................

.........................................................................................